ໂຮງຮຽນວັນອາທິດ

ວັນອາທິດ ທີ 3 ເດືອນມີນາ 2013(3- 3- 2013)

ຮີດຄອງຫຼືພຣະຄຳຂອງພຣະເຈົ້າ?

ຂໍ້ພຣະຄັມພີໃນບົດຮຽນ: ມັດທາຍ 15:1- 11, 17-20

ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດທ່ານໄດ້ຢ່າງໃດ ?

ບົດຮຽນນີ້ຈະຊ່ວຍໃຫ້ທ່ານປະເມີນເບິ່ງພິທີທາງສາສນາທີ່ສືບທອດກັນມາດ້ວຍພຣະຄຳແຫ່ງຄວາມຈິງຂອງພຣະເຈົ້າ, ແລະຊ່ວຍປັບປຸງການດຳລົງຊີວິດຂອງທ່ານໃຫ້ສອດຄ່ອງກັບພຣະຄຳຂອງພຣະເຈົ້າ.

ບົດຮຽນນີ້ເວົ້າກ່ຽວກັບຫຍັງ:

ຄວາມເຊື່ອແບບຜິວເຜີນທີ່ຕັ້ງຢູ່ບົນພື້ນຖານວິນັຍທາງສາສນາແລະຮີດຄອງທີ່ຕົກທອດກັນມາວ່າເປັນທີ່ສອດຄ່ອງຖືກຕ້ອງນັ້ນແມ່ນເປັນພັຍອັນຕະລາຍຕໍ່ຫຼັກຄວາມເຊື່ອທີ່ແທ້ຈິງ. ບົດຮຽນນີ້ໃຫ້ສຸມໃຈໃສ່ຄຳຖາມຂອງອົງພຣະເຢຊູຄຣິດທີ່ຖາມຫົວໜ້າຜູ້ນຳທາງສາສນາຂອງຄົນຍິວ, " ເຫດສັນໃດພວກທ່ານຈຶ່ງລະເມີດຕໍ່ຂໍ້ບັນຍັດຂອງພຣະເຈົ້າດ້ວຍເຫັນແກ່ຄຳສອນທີ່ຕົກທອດກັນມານັ້ນ?" (ມັດທາຍ 15:3)

ບົດຮຽນນີ້ມີຄວາມສຳຄັນຫຍັງ?

ໃນຕອນນີ້ຜູ້ນຳທາງສາສນາຂອງຄົນຍິວ, ຄືກັບຜູ້ໃຫຍ່ທີ່ຖືກລໍ້ລວງໃຫ້ເຂົ້າໃຈໃນພິທີທາງສາສນາວ່າເປັນທີ່ຖືກຕ້ອງ. ໃນຂະນະທີ່ເຂົາຄິດວ່າຮີດຄອງປະເພນີກໍມີຄຸນຄ່າ, ເຂົາກໍຈະຕົກເຂົ້າໄປໃນທຳນອງທີ່ວ່າເຮັດອັນໃດກໍໄດ້ທີ່ພຣະເຈົ້າຕ້ອງການໃຫ້ເຮົາເຮັດ.

ໂຈແອວ ໄດ້ສຶກສາພຣະຄັມພີເພື່ອທີ່ຈະຮູ້ວ່າຈະດຳລົງຊີວິດຢູເພື່ອພຣະຄຣິດຢ່າງໃດ, ແຕ່ເພື່ອນຂອງລາວຈຳນວນນຶ່ງດຳລົງຊີວິດຢູ່ດ້ວຍການ "ປະຕິບັດຕົນຢູ່ໃນພຣະບັນຍັດ" ເຂົາເຊື່ອຖືໃນຂໍ້ເພີ້ມເຕີມຂອງຄຣູສອນສາສນາທີ່ນຳມາສອນ. ໂຈແອວ ບໍ່ເຄີຍພົບເຫັນຄຳສອນຢ່າງນີ້ໃນພຣະຄັມພີ. ຄວາມຮູ້ສຶກໃນຈິດໃຈຂອງລາວບໍ່ໄດ້ໃສ່ໃຈໃນເຣື່ອງນີ້ ລາວເຊື່ອໝັ້ນວ່າມີຫຼາຍກໍຣະນີທີ່ "ປະຕິບັດຕົນຢູ່ໃນພຣະບັນຍັດ" ຖ້າຈະເວົ້າໃຫ້ຖືກກໍຄືຄຳທີ່ຄຣູສອນນຳມາໃຊ້ແທນໃນພຣະຄັມພີຈະເປັນຂໍ້ປະຕິບັດເພີ້ມເຕີມໃຫ້ກັບເຂົາ.

ໂຈແອວ ມີເຫດຜົນທີ່ດີທີ່ຖາມເພື່ອນຂອງລາວໃນການປະຕິບັດຕໍ່ການດຳລົງຊີວິດເພື່ອພຣະຄຣິດ ຄຣູສອນພຣະຄັມພີທີ່ສັດຊື່; ການສິດສອນຜູ້ທີ່ເຊື່ອໃຫ້ຕິດຕາມພຣະເຈົ້ານັ້ນແມ່ນພຣະຄຳຂອງພຣະເຈົ້າບໍ່ແມ່ນຂໍ້ປະຕິບັດເພີ້ມເຕີມ. ບົດຮຽນນີ້ສາມາດຊ່ວຍທ່ານປະເມີນເບິ່ງການເຊື່ອຖືຂອງທ່ານແລະຫຼັກຄຳສອນອັນແທ້ຈິງຂອງພຣະຄັມພີ ທີ່ຄຣູສອນນຳມາແລະປັບຕົວເຂົ້າໃສ່.

ສຶກສາພຣະຄັມພີ

1. ເຮັດຕາມພຣະຄັມພີ, ບໍ່ແມ່ນເຮັດຕາມຮີດຄອງ: (ມັດທາຍ 15: 1- 6)

ຕິດຕາມພຣະຄັມພີ ບໍ່ແມ່ນຕິດຕາມຮີດຄອງ. ແນ່ນອນ, ຮີດຄອງທີ່ຕົກທອດກັນມາຂອງການນັບຖືສາສນາບາງຢ່າງກໍດີ, ເຊັ່ນການມານະມັສການບໍ່ຂາດໃນຄຣິສຕະຈັກວັນອາທິດ ມີຫຼາຍຄົນທີ່ພວກເຮົາຕ້ອງຣະມັດຣະວັງ. ເຂົາສາມາດສ້າງພາບຫຼອກລວງ----ໃຫ້ຄວາມຫວັງຢ່າງຄົບສົມບູນແຕ່ໃນທີ່ສຸດກໍມີແຕ່ຄວາມຫວ້າງເປົ່າ. ພຣະເຍຊູຄຣິດໄດ້ອະທິບາຍຢ່າງຊັດເຈນຕໍ່ຜູ້ນຳສາສນາຂອງຊາວຢິວບາງຄົນ.

ປຶ້ມພຣະທັມມັດທາຍໄດ້ບອກໃຫ້ພວກເຮົາຮູ້ວ່າ, "ພວກຟາຣີຊາຍແລະນັກທັມມາຈາກກຸງເຢຣູຊາເລັມມາຫາພຣະເຍຊູ" ເຂົາເດີນທາງມາເຄັນເນຊາເຣັດ(ມັດທາຍ 14: 34), ຊຶ່ງເປັນເຂດຕາວັນຕົກສຽງເໜືອຂອງທະເລກາລິເລ, ເພື່ອທີ່ຈະຖາມພຣະເຍຊູກ່ຽວເຣື່ອງສາວົກຂອງພຣະອົງທຳຜິດກົດ "ບໍ່ລ້າງມືຂອງພວກເຂົາກ່ອນ" ເມື່ອເວລາພວກເຂົາຈະກິນ. ນັກທັມເຫຼົ່ານີ້ແມ່ນກຸ່ມທີ່ມີຄວາມຊຳນານຫຼາຍຢູ່ໃນຢູດາຍ ເປັນກຸ່ມທີ່ຄັດລອກພຣະຄັມພີແລະແປຂໍ້ພຣະຄັມພີ. ຟາຣີຊາຍແມ່ນນິກາຍນຶ່ງໃນຢູດາຍທີ່ອ້າງຕົວຂອງພວກເຂົາວ່າເປັນຜູ້ຕິດຕາມທຸກຂໍ້ພຣະຄຳທີ່ຂຽນໄວ້ທັງໝົດແລະຫຼັກຄຳສອນ(ຫຼືພະຍາຍາມເຮັດໃຫ້ຄົນທັງຫຼາຍເຊື່ອໃນສິ່ງທີ່ພວກເຮົາເຮັດ).

ໃນທັນທີພຣະເຍຊູໄດ້ຕອບຄຳຖາມທີ່ເຂົາໄດ້ຖາມພຣະອົງດ້ວຍສາຍເຫດອັນໃດສາວົກຂອງທ່ານຈຶ່ງລະເມີດ "ຮີດຄອງທີ່ສືບທອດມາແຕ່ເຖົ້າແກ່ບູຮານ" (ມະນຸດ__ເຮັດກົດເພື່ອຊ່ວຍໃນການອະທິບາຍແລະການນຳໃຊ້ພຣະຄັມພີ) ໂດຍເຮັດຜິດຕໍ່ກົດ " ການລ້າງມືຂອງເຂົາເມື່ອເວລາກິນອາຫານ!" ກົດບັນຍັດຂອງໂມເຊຕ້ອງການໃຫ້ລ້າງມືເມື່ອເວລາສຳຜັດກັບຄົນທີ່ເປັນພະຍາດ(ເລວີ 15:11)ແລະຊາກສົບແຕ່ບໍ່ແມ່ນໃຊ້ກັບທຸກໆຄົນໃນເວລາຮັບປະທານອາຫານ. ດັ່ງເຊັ່ນຜູ້ນຳສາສນາເຮັດໃຫ້ການລ້າງມືກາຍມາເປັນຮີດຄອງທີ່ຕ້ອງເຊື່ອຟັງ ເຂົາຄິດວ່າຖ້າບໍ່ປະຕິບັດຕາມກໍເປັນບາບ.

ຄົນເຮົາໃນທຸກມື້ນີ້ກໍເຊັ່ນກັນເອົາຮີດຄອງມາປະສົມເຂົ້າກັບຄຳສອນຂອງພຣະເຈົ້າ. ສ້າງຕັ້ງຮີດຄອງຂຶ້ນແລະຍົກລະດັບໃຫ້ສູງຂຶ້ນເທົ່າທຽມກັບຄວາມບໍຣິສຸດຂອງພຣະຄຳ ອັນນີ້ແມ່ນຜິດ.

ພຣະເຍຊູບໍ່ຍອມປະຕິບັດຕາມຜູ້ນຳສາສນາ. ພຣະອົງໄດ້ຕອບໂຕ້ການໂຈມຕີຂອງພວກເຂົາໂດຍບອກໃຫ້ຮູ້ວ່ານັ້ນແມ່ນຜົນຂອງຄວາມບາບ. ພຣະເຍຊູຄຣິດແລະພວກສາວົກບໍ່ໄດ້ເປັນພວກເສແສ້ງ; ພວກທັມມະຈານແລະພວກຟາຣີຊາຍເປັນພວກທີ່ເສແສ້ງ. ພຣະເຍຊູໄດ້ຖາມດ້ວຍຄຳຖາມທີ່ເອົາຈິງເອົາຈັງ, "ແລະດ້ວຍເຫດໃດພວກທານຈຶ່ງລະເມີດຕໍ່ຂໍ້ບັນຍັດຂອງພຣະເຈົ້າຫຼືດ້ວຍເຫັນແກ່ຄຳສອນທີ່ຕົກທອດສືບຕໍ່ກັນມາຂອງທ່ານ?" ພວກເຮົາສາມາດຄິດສລຸບເອົາເອງໄດ້ເມື່ອເຫັນສີໜ້າຂອງເຂົາປ່ຽນ ເມື່ອພຣະເຍຊູຄຣິດຊີ້ໃຫ້ເຫັນເຖິງຂໍ້ກ່າວຫາຂອງພວກເຂົາ.

ຫຼັງຈາກນັ້ນພຣະອົງໄດ້ຊີ້ແນະແຕ່ລະຂໍ້ທີ່ທັມມະຈານແລະຟາຣີຊາຍໃຊ້ຄຳສອນທີ່ຕົກທອດກັນມາປະຕິເສດທີ່ຈະເຊື່ອຟັງພຣະເຈົ້າ. ອັນທີນຶ່ງ, ພຣະເຍຊູໄດ້ອ້າງເຖິງພຣະບັນຍັດຂໍ້ຫ້າທີ່ໄພ່ພົນຂອງພຣະເຈົ້າຕ້ອງປະຕິບັດ "ຈົ່ງນັບຖືບິດາມານດາຂອງເຈົ້າ" ຜູ້ບໍ່ເຊື່ອຟັງບິດາມານດາແມ່ນເປັນບາບຢ່າງໃຫຍ່ຫຼວງ "ອາດເຖິງແກ່ຄວາມຕາຍ" (ອົບພະຍົກ 21:17).

ອັນທີສອງ, ພຣະເຍຊູຊີ້ໃຫ້ເຫັນເຖິງຄຳເວົ້າທີ່ສຸພາບແຕ່ທາງນອກ ສ່ວນໃນທາງທີ່ຊົ່ວຮ້າຍຂອງຄົນທີ່ຍົກສູງຮີດຄອງຢູ່ເໜືອພຣະຄັມພີ ທີ່ເປັນການເວົ້າປົ້ນໄປປົ້ນມາຕໍ່ການເຊື່ອຟັງພຣະບັນຍັດຂໍ້ຫ້າ ທີ່ເປັນການຫຼີກລ້ຽງໃນການເຊື່ອຟັງພໍ່ແມ່, ຊຶ່ງແມ່ນຄວາມຕ້ອງການທີ່ເກີດຂຶ້ນຈາກການຮຽກຮ້ອຂອງນັກທັມຈານແລະຟາຣີຊາຍ, "ຂອງພຣະຣາຊະທານອັນໃດກໍຕາມທີ່ທ່ານໄດ້ຮັບຈາກຂ້າພະເຈົ້າແມ່ນຄຳໝັ້ນສັນຍາກັບໂບດວິຫານ." ການກະທຳແບບນີ້ເອີ້ນວ່າຜູ້ຕັ້ງຮີດຄອງທີ່ບໍ່ສອດຄ່ອງໄດ້ເອີ່ຍອ້າງວ່າເປັນຂອງພຣະເຈົ້າດັ່ງນັ້ນເຂົາຈຶ່ງບໍ່ໄວ້ວາງໃຈໃນຜູ້ນຶ່ງຜູ້ໃດຮວມທັງບິດາມານດາ.

ເປັນເຣື່ອງປົກກະຕິ, ເຂົາບໍ່ເຄີຍຍອມໃຫ້ພຣະເຈົ້າເປັນຜູ້ຄອບຄອງ. ຂະນະທີ່ນັກທັມແລະຟາຣີຊາຍເກັບຮັກສາເງິນຂອງເຂົາໄວ້ເພື່ອຕົນເອງແລະເອົາໄປຈາກຄວາມຕ້ອງການຂອງພໍ່ແມ່. ພຣະຄຳຂອງພຣະເຈົ້າວ່າຫຼອກລວງ! ພຣະເຍຊູກ່າວວ່າມັນຄືກັນກັບ: "ທ່ານປະຕິເສດພຣະຄຳຂອງພຣະເຈົ້າດ້ວຍຮີດຄອງທີ່ສືບທອດກັນມາຂອງທ່ານ."

ຜູ້ທີ່ເຊື່ອໃນທຸກມື້ນີ້ຈະບໍ່ຖືຮີດຄອງທີ່ສືບທອດກັນມາແຕ່ບູຮານມາທິດແທນຄຳສອນຂອງພຣະເຈົ້າເພາະສິ່ງນັ້ນເປັນການຕໍ່ສູ້ພຣະຄຳຂອງພຣະເຈົ້າ. ທັງເປັນການຍົກສູງຕົວເຮົາເອງໃຫ້ຢູ່ເໝືອຄວາມໄວ້ວາງໃຈໃນພຣະເຈົ້າແລະມີຄວາມໝາຍວ່າເຮົາບໍ່ເຊື່ອພຣະເຈົ້າ.

2. <u>ຫຼີກເວັ້ນເປັນຄົນໜ້າຊື່ໃຈຄົດ</u>: (ມັດທາຍ. 15:7- 9)

ພຣະເຢຂູໄດ້ຕັດພິທີທາງສາສນາທີ່ບໍ່ເປັນຄວາມຈິງຂອງນັກທັມມະຈານແລະພວກຟາຣີຊາຍອອກໄປ, ໃຫ້ເຂົາສຳຣວດເບິ່ງຈິດໃຈຂອງເຂົາເອງ, ແລະກ່າວເຖິງການພິພາກສາຂອງພຣະອົງສຳລັບເຂົາໃນຂໍ້ຄວາມ___"ຄົນໜ້າຊື່ໃຈຄົດ" ບາງຄັ້ງຮີດຄອງທີ່ສືບທອດກັນມານັ້ນກໍກັບກາຍມາເປັນຄວາມອັບອາຍໃຫ້ກັບຕົວເຂົາເອງ. ຮອງລົງມາກໍແມ່ນການແຕ່ງຕົວເປັນໜ້າໂຄຣົບແລະການປະຕິບັດທາງສາສນາກໍເປັນໜ້າເຊື່ອຖື. ໃນທຸກມື້ນີ້ກໍຄືກັນເມື່ອເຮົາສອນພຣະຄຳຂອງພຣະເຈົ້າໃຫ້ກັບຄົນອື່ນໂດຍການບິດເບືອນຄວາມຈິງ ເຮົາກໍຈະໄດ້ຮັບການຕັດສິນຄວາມຜິດດ້ວຍພຣະຄຳ.

ພຣະເຢຂູໄດ້ອ້າງເຖິງການກ່າວໂທດປະຊາຊົນຂອງເອຊາຢາໃນການປ້ອຍດ່າຜູ້ນຳທາງສາສນາທີ່ຢືນຂຶ້ນຕໍ່ໜ້າພຣະອົງ. ພວກເຂົາໃຫ້ກຽດພຣະເຈົ້າ "ແຕ່ປາກຂອງເຂົາ" ແຕ່ບໍ່ແມ່ນດ້ວຍໃຈຂອງເຂົາ (ເອຊາຢາ. 29: 13). ດັ່ງນັ້ນການນະມັສການກໍບໍ່ມີປໂຍດ. ເຫດຜົນກໍແມ່ນສາສນາເປັນພຽງກົດບັນຍັດຂອງມະນຸດ, ບໍ່ແມ່ນຫຼັກຄຳສອນ ທີ່ສອນພຣະຄຳຂອງພຣະເຈົ້າ.

ຜູ້ທີ່ເຊື່ອໃນທຸກມື້ນີ້ບໍ່ຄວນອວດອ້າງຕົນເອງວ່າເປັນຜູ້ເຫຼື້ອມໃສໃນພຣະເຈົ້າດ້ວຍການປະຕິບັດທາງສາສນາໃນເມື່ອຈິດໃຈຂອງຕົນບໍ່ບໍຣິສຸດ. ໄພ່ພົນຂອງພຣະເຈົ້າຈຳຕ້ອງເຂົ້າໃຈຢ່າງແຈ່ມແຈ້ງກ່ຽວກັບການປະຕິບັດທາງສາສນາ. ບາງອັນກໍອາດຈະດີ. ເຖິງຢ່າງໃດກໍຕາມ, ເມື່ອເວລາຄຣິສຕຽນເອົາຮີດຄອງທີ່ສືບທອດກັນມາເຂົ້າມາແທນການສອນພຣະຄັມພີ, ກໍບໍ່ເຕກຕ່າງຫຽງກັບນັກທັມຈານແລະຟາຣີຊາຍເຮັດ, ເຂົາຍົກສູງສະຕິປັນຍາຂອງເຂົາຢູ່ເໝືອພຣະຄຳຂອງພຣະເຈົ້າ. ດັ່ງນັ້ນຮີດຄອງທີ່ສືບທອດກັນມາບໍ່ໄດ້ໃຫ້ກຽດແກ່ພຣະເຈົ້າແລະບໍ່ໄດ້ເປັນຜົນດີແກ່ເຮົາເລີຍ.

ຕັ້ງໃຈໃສ່ຄຳເວົ້າຂອງພຣະເຢຂູຄຣິດໃນ ມັດທາຍ 15: 7- 9 . ສັງເກດເບິ່ງຢ່າງາຄັກແນ່ການຮັກແລະເອົາໃຈໃສ່ໃນຮີດຄອງທີສືບທອກກັນມານັ້ນຊ່ອຍໃຫ້ຄວາມເຊື່ອເຕີບໂຕຂຶ້ນບໍ? ມັນນຳພາຈິດໃຈໃຫ້ມີຄວາມຮູ້ສຶກຍາກນະມັສການພຣະເຈົ້າແລະຈິດວິນຍານໄດ້ຮັບການລ້ຽງດູບໍ່? ມັນຊ່ວຍດົນໃຈໃຫ້ເກີດການຍາກຮຽນຮູ້ແລະດຳລົງຊີວິດດ້ວຍຄວາມໄວ້ວາງໃນພຣະເຈົ້າດັ່ງໃນພຣະຄັມພີກ່າວໄວ້ບໍ? ຮີດຄອງເຫຼົ່ານີ້ເປັນພື້ນຖານສະເພາະເຈາະຈົງມາຈາກຂ່າວປະເສີດທີ່ພຣະເຢຂູຄຣິດສອນແລະມາຈາກພັນທະສັນຍາໃໝ່ທັງໝົດບໍ? ຮີດຄອງແຕ່ລະຢ່າງມີການພົວພັນສະເພາະເຈາະຈົງໃນຂໍ້ພຣະຄຳພີຂໍ້ໃດຂໍ້ນຶ່ງບໍ່? ໝູ່ເພື່ອນແລະສະມາຊິກໃນຄອບຄົວໄດ້ເຂົ້າໃກ້ຊິດກັບພຣະເຈົ້າໂດຍການຕິດຕາມຮີດຄອງທີ່ສືບທອດກັນມາບໍ່? ຄົນໃດຄົນນຶ່ງທີ່ເຮັດຕາມຮີດຄອງເພື່ອຫຼີກເວັ້ນຈາກການເປັນຄົນໜ້າຊື່ໃຈຄົດຫຼືນຳພາເຂົາໃຫ້ເປັນຄົນໜ້າຊື່ໃຈຄົດ? ແນ່ນອນ ພຣະເຢຂູຕ້ອງການໃຫ້ຜູ້ເຊື່ອທຸກຄົນໃນສມັຍນີ້ປະຕິເສດທຸກໆຮີດຄອງທີ່ສືບທອດກັນມາ, ເຖິງແມ່ນວ່າມັນຈະມີຄວາມໝາຍແລະປະຕິບັດກັນມາດົນນານແລ້ວກໍຕາມ, ສິ່ງເຫລົ່ານັ້ນເປັນການຂັດແຍ້ງກັບພຣະຄຳຂອງພຣະເຈົ້າ.

3. <u>ຮັກສາໃຈຂອງທ່ານໃຫ້ບໍຣິສຸດ</u>: (ມັດທາຍ. 15: 10- 11, 17-20)

ຫຼັງຈາກພຣະເຢຂູຊົງຕຳໜິຜູ້ນຳສາສນາແລ້ວພຣະອົງຫັນມາຫາປະຊາຊົນແລະຊົງກ່າວກັບເຂົາວ່າ. "ຈົ່ງຟັງແລະເຂົ້າໃຈສາ." ພຣະອົງມີສິ່ງທີ່ສຳຄັນຍິ່ງໃຫຽ່ທີ່ຈະບອກໃຫ້ພວກເຂົາຮູ້, ເປັນຈຸດສຳຄັນກ່ຽວກັບວິນຍານແຫ່ງຄວາມຈິງ. ເປັນຄວາມຈິງທີ່ກ່ຽວກັບຈິດໃຈຂອງມະນຸດ___ຈາກໃຈທີ່ບໍຣິສຸດລວມໄປເຖິງການກະທຳທີ່ບໍຣິສຸດ.

ພວກຜູ້ນຳສາສນາຕ່ວ່າຜູ້ທີ່ເຊື່ອທີ່ເຂົາບໍ່ລ້າງມືກ່ອນຈະຮັບປະທານອາຫານ; ດັ່ງນັ້ນ, ອາຫານທີ່ເຂົາກິນຈຶ່ງເຮັດໃຫ້ເຂົາຊົ່ວມົວໝອງ. ພິທີການຊຳຮະຈຶ່ງເປັນທີ່ສຳຄັນສຳລັບຊີວິດເພື່ອຫຼີກເວັ້ນບໍ່ໃຫ້ເສື່ອມເສັ່ງສະຕິປັນຍາຝ່າຍຈິດວິນຍານ. ພຣະເຢຊູຄຣິດຊົງຮູ້ວ່າເຂົາຄິດຜິດ; ດັ່ງນັ້ນພຣະອົງຈຶ່ງອະທິບາຍວ່າດ້ວຍເຫດຜົນ.

ພຣະອົງຊີ້ໃຫ້ເຫັນວ່າກົດຂອງຜູ້ນຳສາສນາເປັນການປະເມີນຜົນແລະການກະທຳທີ່ຜິດ, ພຣະເຢຊູເວົ້າວ່າ, "ບໍ່ແມ່ນສິ່ງທີ່ເຂົ້າໄປໃນປາກນັ້ນ ທີ່ເຮັດໃຫ້ມະນຸດຊົ່ວມົວໝອງ." ຄຳສອນຂອງພຣະເຢຊູເຮັດໃຫ້ຜູ້ນຳສາສນາຕື່ນຕົກໃຈ. ຕໍ່ໄປພຣະອົງໄດ້ບອກຢ່າງຊັດແຈ້ງວ່າ "ສິ່ງໃດທີ່ເຂົ້າໄປໃນປາກກຳລົງໃນທ້ອງແລ້ວກຳຖ່າຍອອກມາ." ອາຫານບໍ່ກ່ຽວພັນກັບຈິດໃຈສ່ວນສຳຄັນແລະຕົ້ນເຫດຂອງມະນຸດ ຫົວໃຈຕ່າງຫາກທີ່ເປັນຕົ້ນກຳເນີດຂອງຄວາມຊົ່ວຮ້າຍ.

ພຣະເຢຊູໄດ້ອະທິບາຍໃຫ້ເຫັນຈຸດສຳຄັນຂອງພຣະອົງ: ບໍ່ເຄີຍມີເລີຍທີ່ຄວາມຊົ່ວມົວໝອງຂອງມະນຸດເກີດມາຈາກການຈັບແລະກິນອາຫາເຂົ້າໄປ. ຈິດໃຈທີ່ບໍ່ສະອາດນັ້ນເຮັດໃຫ້ມະນຸດຊົ່ວມົວໝອງ, "ດ້ວຍເຫດທີ່ຄວາມຄິດທີ່ຊົ່ວຮ້າຍ, ການຂ້າຄົນ, ການຫຼິ້ນຊູ້, ການຜິດຊາຍຍິງ, ການລັກຊັບ, ການເປັນພະຍານບໍ່ຈິງ, ແລະການດູໝິ່ນປມາດ ກໍເກີດມາຈາກໃຈ." ແລ້ວພຣະເຢຊູໄດ້ສລຸບວ່າ, " ສິ່ງເຫຼົ່ານີ້ທີ່ເຮັດໃຫ້ມະນຸດຊົ່ວມົວໝອງ, ແຕ່ການຮັບປະທານອາຫານບໍ່ລ້າງມືກ່ອນບໍ່ໄດ້ເຮັດໃຫ້ມະນຸດຊົ່ວມົວໝອງ." ຫົວໃຈທີ່ບໍ່ບໍຣິສຸດນັ້ນເອງທີ່ເປັນຕົ້ນກຳເນີດຂອງຄວາມຊົ່ວທັງໝົດ. ຄວາມຊົ່ວເຈັດຢ່າງທີ່ພຣະເຢຊູກ່າວເຖິງ___ ທັງໝົດ___ ອອກມາຈາກຂ້າງໃນຈິດໃຈສູ່ຂ້າງນອກ, ບໍ່ແມ່ນມາຈາກທາງອື່ນ. ແມ່ນອັນໃດທີ່ຈະຊຳຮະຈິດໃຈຂອງມະນຸດໃຫ້ສະອາດ, ບໍ່ແມ່ນແຕ່ລ້າງມືເທົ່ານັ້ນ.

ພຣະເຢຊູພຽງຜູ້ດຽວເທົ່ານັ້ນທີ່ສາມາດເຮັດໃຫ້ຈິດໃຈຂອງເຮົາບໍຣິສຸດ___ ບໍ່ແມ່ນເຮັດຕາມຮີດຄອງພິທີລ້າງ. ຄືຜູ້ນຳສາສນາ, ຄົນທຸກມື້ນີ້ອາດຈະເຂົ້າໃຈພຣະຄັມພີແບບເບົ້າໆ ເຂົາຫັນໄປເອົາໃຈໃສ່ຮີດຄອງປະເພນີຂອງເຂົາ, ຍິ່ງໄປກວ່ານັ້ນເຂົາຍັງປະຕິບັດຕົນຕາມແບບຢ່າງຂອງຄຣິສຕຽນ ເຮັດທຸກຢ່າງທີ່ພຣະເຈົ້າຕ້ອງການໃຫ້ເຂົາເຮັດ. ຜູ້ທີ່ເຊື່ອທັງໝົດຕ້ອງຖາມແລະຕອບກັບຕົວເອງໃນຄຳຖາມຂອງບົດຮຽນນີ້ໃນຫົວຂໍ້, " ຮີດຄອງຫຼືພຣະຄຳຂອງພຣະເຈົ້າ?"

ບົດຮຽນແຫ່ງຊີວິດ

ຄຣິສຕຽນອາດຈະດຳລົງຊີວິດດ້ວຍຮີດຄອງປະເພນີ. ບາງຢ່າງກໍອາດເປັນປໂຍດ, ບາງຢ່າງກໍບໍ່ເປັນປໂຍດ. ມະນຸດເຮົາສ່ວນຫຼາຍ ມັກຈະສ້າງກົດເກນຂຶ້ນໃຫ້ເປັນຈຸດສູນລວມໃສ່ກັບຕົວເອງຫຼາຍກວ່າຈະສຸມໃຈໃສ່ພຣະເຢຊູຄຣິດ ຮີດຄອງປະເພນີມີຄ່າເທົ່າທຽມຫຼືມີຄວາມສຳຄັນຫຼາຍກວ່າພຣະຄຳຂອງພຣະເຈົ້າ. ຄວາມເຊື່ອແບບຜິວເຜີນແມ່ນຂຶ້ນຢູ່ກັບຫຼັກການປະຕິບັດພາຍນອກ ເປັນສັດຕຣູຕໍ່ສູ້ກັບຄວາມເຊື່ອທີ່ແທ້ຈິງ. ຈຸດປະສົງໃນຄຳຖາມຂອງພຣະເຢຊູໃນຕອນນີ້ທີ່ເປັນໜ້າຍ້ານແລະເປັນການກ່າວເຖິງຄວາມຜິດໃນມັດທາຍ 15:3 ແມ່ນໃຫ້ພວກເຮົາໄດ້ຍິນແລະໃຫ້ເຮົາຕອບ!

ບົດຮຽນນີ້ໃຫ້ຄຳແນະນຳຢູ່ສາມຢ່າງເພື່ອຈະປະເມີນເບິ່ງການປະຕິບັດຕາມພິທີທາງສາສນາໂດຍອີງໃສ່ພຣະຄຳຂອງພຣະເຈົ້າແລະປັບປຸງຄຸນຄ່າຂອງເຂົາເພື່ອປະຕິບັດທາງສາສນາ.

- ❖ ອັນທີນຶ່ງ, ຮຽນຮູ້ແລະດຳລົງຊີວິດຕາມພຣະຄຳຂອງພຣະເຈົ້າ, ບໍ່ແມ່ນຕາມຮີດຄອງປະເພນີຂອງມະນຸດທີ່ພຽງແຕ່ສຸມຈຸດສົນໃຈໃສ່ແຕ່ບາງຂໍ້. ສິ່ງທີ່ທ່ານຄວນເຮັດແມ່ນຮຽນຮູ້ແລະປະຕິບັດຕາມຄຳສອນຂອງພຣະເຈົ້າທີ່ເປັນຄວາມປາຖນາທີ່ສຸດຍອດ.
- ❖ ອັນທີສອງ, ຈົ່ງຫຼີກລ້ຽງຈາກຄວາມໜ້າຊື່ໃຈຄົດ(ຊຶ່ງເປັນການຫຼອກລວງ). ຄົນໜ້າຊື່ໃຈຄົດອ້າງຕົນເອງວ່າເປັນຄົນດຳລົງຊີວິດຕາມມາດຕະຖານຂອງຄວາມຊອບທັມ ແຕ່ບໍ່ແມ່ນ.
- ❖ ອັນທີສາມ, ຢ່າຄິດວ່າພຣະເຈົ້າຈະພໍພຣະທັຍກັບຄຣິສຕຽນຜູ້ທີ່ນຳເອົາການປະຕິບັດທາງສາສນາເຂົ້າມາພົວພັນຖ້າຈິດໃຈຂອງເຂົາຫາກບໍ່ຖືກຕ້ອງເປັນທັມ.

ໂຮງຮຽນວັນອາທິດ

ວັນອາທິດ ທີ 10 ເດືອນມີນາ 2013(3- 10- 2013)

ບໍ່ເຕັມໃຈຫຼືອຸທິດຕົນຢ່າງສົ້ນເຊີງ?

ຂໍ້ພຣະຄັມພີໃນບົດຮຽນ: ລູກາ. 9:20-26, 57-62

ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດທ່ານໄດ້ຢ່າງໃດ ?

ບົດຮຽນນີ້ສາມາດຊ່ວຍທ່ານປະເມີນຜົນຂອງລະດັບການອຸດທິດຖວາຍຕົວຂອງທ່ານໃຫ້ກັບພຣະເຢຊູຄຣິດແລະການເລືອກທີ່ຈະຕິດຕາມພຣະອົງດ້ວຍຄວາມຮັບຜິດຊອບທັງໝົດ.

ບົດຮຽນນີ້ເວົ້າກ່ຽວກັບຫຍັງ:

ການຕິດຕາມພຣະເຢຊູດ້ວຍຄວາມຮັບຜິດຊອບທັງໝົດ. ບົດຮຽນນີ້ຈະສຸມຈິດໃຈໃສ່ຄຳຖາມ, " ຖ້າຜູ້ໃດຈະໄດ້ສິ່ງຂອງໝົດທັງໂລກແຕ່ຈະເຮັດໃຫ້ຕົວເອງຈິບຫາຍຫຼືເສັງໄປຜູ້ນັ້ນຈະໄດ້ປໂຍດອັນໃດ? (ລູກາ. 9: 25).

ບົດຮຽນນີ້ມີຄວາມສຳຄັນຫຍັງ

ໃນທຸກວັນນີ້ມີຫຼາຍຄົນມີຄວາມສົນໃຈໃນພຣະເຢຊູຄຣິດ, ແຕ່ບໍ່ມີໃຜທີ່ຈະໃຫ້ຄຳໝັ້ນສັນຍາກັບພຣະອົງຢ່າງຈິງຈັງ. ພຣະເຢຊູໄດ້ຮຽກຮ້ອງໃຫ້ພວກເຮົາເຮັດຫຼາຍກວ່າທີ່ເຮົາຈະຕອບຄຳຖາມທີ່ພຣະອົງໄດ້ຖາມພວກເຮົາ. ພວກເຮົາຕ້ອງມີຄຳຕອບທີ່ຖືກຕ້ອງແລະມີຄວາມຮັບຜິດຊອບຕໍ່ຄຳສັນຍາທັງໝົດ.

ບີເວີຣີ ໄປໂບດ ລາວມີຄວາມເຊື່ອໃນພຣະເຢຊູຄຣິດ. ເຖິງແມ່ນວ່າ ບາງເວລາລາວມີຄວາມຮູ້ສຶກຢາກໃຫ້ຄຳສັນຍາກັບອົງພຣະຜູ້ເປັນເຈົ້າກໍເປັນແຕ່ບາງຄັ້ງບາງຄາວ. ຄວາມເຊື່ອຂອງ ບີເວີຣີ, ກໍເໝືອນກັບເພື່ອນຄຣິສຕຽນຄົນອື່ນໆ ລາວປະສົບກັບຄວາມຫຼົ້ມເຫລວໃນຄຳໝັ້ນສັນຍາທີ່ໃຫ້ໄວ້ກັບພຣະເຈົ້າ. ລາວບໍ່ໄດ້ຕຽມພ້ອມທີ່ຈະຕິດຕາມພຣະເຢຊູຄຣິດເທື່ອ ເມື່ອເວລາລາວມີຄວາມຕັ້ງໃຈທີ່ຈະເຮັດລາວກໍສູນເສັງເພື່ອນຂອງລາວ. ບໍ່ວ່າຈະເປັນທາງດ້ານຄວາມຮູ້ສຶກຫຼືດ້ານການພົວພັນ, ປາກົດວ່າມີການກະທົບກະເທືອນ, ຫຼືບໍ່ກໍຮ້ອງໄຫ້ຢູ່ຄົນດຽວແລະມີຄວາມເປົ່າປ່ຽວ. ດັ່ງນັ້ນໃນທຸກມື້ນີ້ກໍຄືກັນ ບີເວີຣີ ຈະຕິດຕາມພຣະເຢຊູຄຣິດແບບເຄິ່ງໆ ກາງໆ ແລະບໍ່ຍອມຮັບແບກເອົາໄມ້ກາງແຂນຂອງພຣະອົງ.

ບາງເທື່ອເປັນເວລາທີ່ທ່ານຈະຖາມຄຳຖາມ, ຂ້າພຣະເຈົ້າຈະເຮັດແນວໃດທີ່ຈະມີຄວາມໝາຍຫຼາຍກວ່າການໃຫ້ຄຳສັນຍາກັບອົງພຣະຜູ້ເປັນເຈົ້າ? ບົດຮຽນນີ້ສາມາດຊ່ວຍທ່ານໃຫ້ປະເມີນເບິ່ງລະດັບການອຸທິດຖວາຍຕົນຕໍ່ອົງພຣະເຢຊູຄຣິດແລະຕັດສິນໃຈທີ່ຈະຕິດຕາມດ້ວຍຄຳໝັ້ນສັນຍາທຸກປະການ.

ສຶກສາພຣະຄັມພີ

1. ຮັບເອົາການອຸທິດຕົນຢ່າງສົ້ນເຊີງ: (ລູກາ 9:20- 23)

ຍອມເສັງສຣະ. ຍອມທົນທຸກທໍຣະມານ. ຍອມສຣະພຣະຊົນ. ແນ່ນອນສິ່ງເຫຼົ່ານີ້ມີຢູ່ໃນຄວາມຕັ້ງໃຈຂອງພຣະເຢຊູໃນວັນເວລາທີ່ພຣະອົງໄດ້ສິດສອນເຫຼົ່າອັຄສາວົກກ່ຽວກັບຄວາມໝາຍວ່າຢ່າງໃດໃນການຕິດຕາມພຣະອົງໃນທຸກຄຳໝັ້ນສັນຍາ.

ວັນນຶ່ງເມື່ອພຣະອົງຢູ່ກັບພວກສາວົກເປັນການສ່ວນຕົວ ພຣະເຢຊູໄດ້ຖາມ, "ປະຊາຊົນເວົ້າກັນວ່າເຮົາແມ່ນຜູ້ໃດ?" (ລູກາ. 9:18). ພວກສາວົກມີຄວາມເຫັນແຕກຕ່າງກັນລະຫວ່າງໂຍຮັນບັບຕິສໂຕ, ເອລີຢາ, ແລະ " ນຶ່ງໃນຜູ້ປະກາດພຣະທັມໃນສມັຍບູຮານ " ຈາກປຶ້ມພັນທະສັນຍາເດີມ(ຂໍ້ 19).

ຕໍ່ມາຄຳຖາມທີສອງ: "ພວກທ່ານເດ ວ່າເຮົາແມ່ນໃຜ?" ເປໂຕທູນຕອບວ່າ, "ພຣະເມຊີອາທີ່ມາຈາກພຣະເຈົ້າ!" ພວກອັຄສາວົກຕ່າງກໍມີຄວາມສັບສົນເມື່ອໄດ້ຍິນຄຳສັ່ງຂອງພຣະເຢຊູ " ບໍ່ໃຫ້ບອກເຣື່ອງນີ້ແກ່ຜູ້ໃດ."

ດ້ວຍສາຍເຫດອັນໃດອົງພຣະຜູ້ເປັນເຈົ້າຈຶ່ງຍັງບໍ່ຕ້ອງການໃຫ້ພວກອັຄສາວົກບອກຄວາມຈິງເຣື່ອງຂອງພຣະອົງ? ຄວາມກຽດຊັງເກີດມີຂຶ້ນໃນຊາວໂຣມັນ ແລະຕ້ອງການໃຫ້ກອງທັບທະຫານແລະພວກຜູ້ປົກຄອງກຳຈັດພຣະອົງອອກໃຫ້ພົ້ນຈາກທາງຂອງເຂົາ. ພວກເຂົາໄດ້ກໍ່ຕົວຂຶ້ນຕໍ່ສູ້ຂັບໄລ່ໃຫ້ພຣະອົງອອກຈາກທີ່ນັ້ນ. ຖ້າສາວົກແລະພວກຢິວເວົ້າກັນວ່າພຣະເຢຊູແມ່ນກະສັດຜູ້ຊົງເມດຕາດ້ວຍຄວາມຕັ້ງໃຈ ພວກທະຫານໂຣມັນກໍຈະເຂົ້າຈັບກຸມພຣະອົງທັນທີ. ເຖິງຢ່າງໃດກໍຕາມ, ພຣະເຢຊູບໍ່ໄດ້ມາເພື່ອນຳພາເຂົາໃຫ້ພົ້ນຈາກພລັງຄວາມກົດດັນຂອງອຳນາດການປົກຄອງແຕ່ພຣະອົງມາເພື່ອນຳທາງເຂົາຂ້າມຜ່ານຄວາມບາບດ້ວຍຄວາມອົດທົນ. ຈົນກວ່າວັນນັ້ນຈະມາເຖິງ, ພຣະເຢຊູມີຄວາມຮູ້ສຶກວ່າມັນເປັນການດີທີ່ສຸດທີ່ສາວົກບໍ່ໄດ້ເປີດເຜີຍພຣະອົງຕໍ່ຝູງຊົນ ພຽງຮູ້ວ່າພຣະອົງຄືພຣະເມຊີອາຂອງອິສຣາເອນ.

ພຣະເຢຊູໄດ້ຕິດຕາມສັນຍານທີ່ເຕືອນເຖິງເຫດຮ້າຍຂອງພຣະອົງດ້ວຍການເລີ້ມຕົ້ນດ້ວຍຂໍ້ຄວາມ " ພຣະບຸດຂອງພຣະເຈົ້າຈຳຕ້ອງທົນທຸກທໍຣະມານຫຼາຍໆປະການແລະຈະຖືກປະຕິເສດໂດຍພວກເຖົ້າແກ່, ພວກປະໂຣຫິດ, ແລະພວກນັກທັມ[ແລະ] ຈະຂ້າ." ຄຳວ່າ **ທົນທຸກທໍຣະມານ, ບໍ່ຍອມຮັບ, ຂ້າ** ບໍ່ໄດ້ຕົງກັບຄວາມຄິດຂອງພວກອັຄສາວົກ ດ້ວຍເຫດອັນໃດກະສັດຂອງຊາດອິສຣາເອນຈຶ່ງຈະປະສົບກັບເຫດຮ້າຍນີ້. ແຕ່ພຣະເຢຊູຄຣິດໄດ້ເວົ້າວ່າ**ພຣະອົງຈຳຕ້ອງ** ; ພຣະອົງມີຊີວິດຢູ່ໂດຍບໍ່ໄດ້ສົງສັຍໃນເຣື່ອງນີ້. ດັ່ງນັ້ນພຣະອົງຫວັງວ່າຈະເປັນທີ່ເຕືອນຈິດໃຈຂອງພວກເຂົາເມື່ອໄດ້ຍິນການທຳນວາຍກ່ຽວເຣື່ອງພຣະອົງແລະຄຳສັນຍາວ່າພຣະອົງ " ຈະເປັນຄືນມາໃນວັນຖ້ວນສາມ." ໃນຄວາມຄິດຂອງພວກສາວົກມີຄວາມແນ່ໃຈວ່າຈະຕ້ອງເກີດຄວາມສັບສົນຊົ່ວລະຍະນຶ່ງກ່ຽວກັບງອົງພຣະຜູ້ເປັນເຈົ້າຂອງພວກເຂົາ

ພຣະເຢຊູມີຫຼາຍສິ່ງທີ່ຈະບອກແລະເປັນສິ່ງທີ່ກ່ຽວຂ້ອງກັບເຂົາຫຼາຍກວ່າເຣື່ອງຂອງພຣະອົງ. "ຖ້າຜູ້ໃດຈະຕິດຕາມເຮົາມາຜູ້ນັ້ນຕ້ອງປະຕິເສດຕົນເອງແລະຮັບແບກໄມ້ກາງແຂນຂອງຕົນທຸກວັນ, ແລະຕິດຕາມເຮົາມາ."

ລູກສິດຂອງພຣະຄຣິດບໍ່ສົມຄວນຈະເປັນເໝືອນຜູ້ທີ່ເດີນເຂົ້າໄປໃນສວນສາທາຣະນະເພື່ອຈະຊອກເອົາສິ່ງໃດສິ່ງນຶ່ງ ຜູ້ຕິດຕາມໃນພັນທະສັນຍາໃໝ່ກໍບໍ່ຕ່າງຫັງກັບຜູ້ທີ່ເຊື່ອໃນທຸກມື້ນີ້. ພຣະເຢຊູໄດ້ຮຽກຮ້ອງໃຫ້ຜູ້ຕິດຕາມພຣະອົງເຮັດສາມສິ່ງ. ອັນທີນຶ່ງ, "ປະຕິເສດ" ຕົວເອງ. ຊຶ່ງກ່ຽວຂ້ອງກັບການປະຕິເສດການດຳລົງຊີວິດທີ່ເຫັນແກ່ໂຕ ຄວາມຜິດຫວັງແລະເຫັນແກ່ປໂຍດສ່ວນຕົວໃຫ້ຫັນມາເອົາຄວາມຕັ້ງໃຈແລະຄຳສອນຂອງພຣະເຢຊູຄຣິດ. ອັນທີສອງ, ຜູ້ທີ່ເຊື່ອຈຳຕ້ອງ "ແບກເອົາໄມ້ກາງແຂນຂອງຕົນທຸກວັນ," ມີຄວາມໝາຍວ່າຈະຍອມຮັບການຖືກຂົ່ມເຫງ, ຄວາມອັບອາຍ, ຄວາມເຈັບປວດ, ແລະແມ່ນກະທັ້ງຄວາມທົນທຸກທໍຣະມານ! "ໄມ້ກາງແຂນ"ບໍ່ແມ່ນເຣື່ອງທັມດາ, ການຖືກທົດລອງແຕ່ລະວັນແລະບັນຫາເຊັ່ນການເຈັບເປັນ, ຄວາມໂສກເສົ້າ, ແລະຄວາມຜິດຫວັງ. ແບກເອົາກາງແຂນຂອງທ່ານແມ່ນມີຄວາມໝາຍວ່າກອດໂອບເອົາແຜນການຂອງພຣະເຈົ້າເຂົ້າໃນການດຳລົງຊີວິດຂອງທ່ານ. ອັນທີສາມ, ລູກສິດມີຄວາມໝາຍວ່າຜູ້ເຊື່ອຖືໃນຄຳສອນຂອງພຣະເຢຊູຄຣິດໃນຂະນະທີ່ດຳລົງຊີວິດຢູ່ ມື້ນີ້,ມື້ອື່ນ, ຕລອດໄປ.

2. <u>ສັນນະສູດຕົນເອງກັບພຣະເຢຊູຄຣິດ</u>: (ລູກາ.9: 24- 26)

ພຣະເຢຊູໄດ້ມອງເຫັນສີໜ້າທີ່ຢາກເຂົ້າໃຈຢ່າງແຈ່ມແຈ້ງຂອງພວກສາວົກກ່ຽວກັບຄວາມຮັບຜິດຊອບອັນໃຫງ່ທັງໝົດຂອງອົງພຣະຄຣິດ. ດັ່ງນັ້ນພຣະອົງຈຶ່ງຊີ້ໃຫ້ເຫັນຜົນແຫ່ງຄວາມຈິງທີ່ເຂົາຈະໄດ້ຮັບແລະຜົນເສັງຫາຍຕລອດໄປຂອງຜູ້ທີ່ດຳລົງຊີວິດເພື່ອຕົນເອງ.

ຄຳສອນຂອງພຣະເຢຊູໃນຂໍ້ 24 ເປັນປິສນາ ເປັນຄຳເວົ້າທີ່ເບິ່ງເໝືອນວ່າມີຂໍ້ຂັດແຍ້ງກັນ ທີ່ປາກົດເບິ່ງຄືເປັນຄຳເວົ້າທີ່ກົງກັນຂ້າມ. ຖ້າຜູ້ໃດ "ຢາກຊ່ວຍຊີວິດຂອງຕົນໃຫ້ພົ້ນ,"ຜົນກໍຄື "ຜູ້ນັ້ນຈະຕ້ອງເສັງຊີວິດ," ແຕ່ວ່າຖ້າ "ຜູ້ໃດຈະເສັງຊີວິດຂອງຕົນເພາະເຫັນແກ່" ພຣະຄຣິດ, ຜົນກໍຄືຜູ້ນັ້ນ "ຈະໄດ້ຮັບຄວາມລອດພົ້ນ" ມັນຈະເປັນໄປໄດ້ຢ່າງໃດ?

ເມື່ອເຮົາພະຍາຍາມທີ່ຈະຕໍ່ສູ້ເພື່ອໃຫ້ໄດ້ຊີວິດທີ່ດີຢູ່ໃນໂລກນີ້ສຳລັບຕົວເຮົາເອງ, ໃນທີ່ສຸດເຮົາກໍຈະສູນເສັງໄປໝົດ. ແຕ່ຖ້າວ່າຄົນຜູ້ນຶ່ງ "ໄດ້ສິ່ງຂອງທັງໝົດໃນໂລກນີ້," ໃນພາຍຫຼັງເມື່ອພຣະເຢຊູ "ສະເດັດມາໃນສະງ່າຣາສີຂອງພຣະອົງແລະຂອງພຣະບິດາແລະຝູງເທວະດາທີ່ບໍຣິສຸດ," ຄົນຜູ້ນັ້ນ "ຈະສູນເສັງຫຼືຈົບຫາຍໄປ." ເຊັ່ນບຸກຄົນທີ່ບໍ່ໄດ້ດຳລົງຊີວິດຢູ່ເພື່ອພຣະຄຣິດຜູ້ທີ່ອ້າງຕົນວ່າເປັນຜູ້ອຸທິດຖວາຍຕົວ, ແຕ່ເຮັດເພື່ອຕົນເອງລາວກໍທ້ອນໂຮມສິ່ງຂອງທັງໝົດໃນໂລກໄວ້ເພື່ອຈະສູນເສັງໃນເວລາສຸດທ້າຍ. ບໍ່ວ່າຄົນຜູ້ນນັ້ນຈະຮັ່ງມີຊັບສິ່ງຂອງຫຼາຍປານໃດໃນຊີວິດນີ້ລາວກໍຈະຈົບຫາຍໄປຖ້າລາວຕາຍໂດຍປາສຈາກພຣະຄຣິດໃນຊີວິດນີ້. ຈົ່ງພິຈາຣະນາເບິ່ງຄົນທີ່ເຫັນແກ່ຕົວ, "ພຣະບຸດຂອງພຣະບິດາກໍຈະປະຕິເສດ."

ພຣະເຢຊູເວົ້າວ່າຜູ້ທີ່ "ສູນເສັງຊີວິດເພາະເຫັນແກ່ເຮົາ ຜູ້ນັ້ນກໍຈະໄດ້ຊີວິດ" ຕລອດໄປເປັນນິດ. ຄຳສັນຍາທັງໝົດຕໍ່ພຣະຄຣິດແມ່ນມີຂອງລາງວັນຕໍ່ຜູ້ທີ່ຜ່ານຜ່າຄວາມທົນທຸກລຳບາກ ອຸທິດຖວາຍຕົວໃນຄວາມຮັກແລະຮັບໃຊ້ເພື່ອພຣະຄຣິດຈະ "ໄດ້ຊີວິດ" ເຂົາຈະໄດ້ຮັບຄວາມຊົມຊື່ນໃນຊີວິດຕລອດໄປເປັນນິດ.

ຄຳສອນຂອງພຣະເຢຊູຊີ້ໃຫ້ເຫັນທັງສອງຢ່າງມີທັງສິ່ງທີ່ເປັນໜ້າຢ້ານກົວແລະສິ່ງທີ່ມີສະງ່າຣາສີ. ອີກດ້ານນຶ່ງພຣະອົງໄດ້ເຕືອນເຮົາໃຫ້ເຫັນເຖິງການສູນເສັງອັນຍິ່ງໃຫຍ່. ອີກດ້ານນຶ່ງພຣະອົງໄດ້ຮຽກເອີ້ນເຮົາໃຫ້ມີຄວາມຮັກແລະດຳລົງຊີວິດເພື່ອພຣະອົງ, ການອຸທິດຖວາຍຕົວແລະການປະຕິບັດຮັບໃຊ້ຂອງພວກເຮົາກໍມີຄຸນຄ່າສຳລັບພຣະອົງ. ນີ້ເປັນພຣະພອນທີ່ພິເສດຫຼາຍປານໃດສຳລັບພວກເຮົາ.

ບາງເທື່ອຄຳອ້ອນວອນອະທິຖານຂອງເຮົາກໍເວົ້າວ່າ, " ອົງພຣະເຢຊູຄຣິດ ຂ້ານ້ອຍຈະຕິດຕາມພຣະອົງ, ແຕ່ກ່ອນອື່ນໝົດຂໍໃຫ້ຂ້ານ້ອຍເຮັດສິ່ງນີ້ຫຼືສິ່ງນັ້ນກ່ອນ."ເງື່ອນໄຂທີ່ພວກເຮົານຳມາສເນີເປັນການຮຽກຮ້ອງສິດທິພິເສດຂອງຕົນຢູ່ເໝືອການຊົງຮຽກເອີ້ນຂອງພຣະເຈົ້າ. ຄວາມເພິ່ງພໍໃຈຂອງເຮົາ "ກ່ອນສິ່ງອື່ນ" ຄວາມໝັ້ນຄົງດ້ານການເງິນ, ການສົມຣົດ, ການລ້ຽງດູລູກ, ກິລາທີ່ມັກຫຼືບັນຫາເຣື່ອງສຸຂພາບ ເຖິງແມ່ນເຮົາຈະເລື່ອນເວລາຂອງຄຳສັນຍາອອກໄປໄດ້, ເຮົາກໍເປັນຜູ້ດຳລົງຊີວິດຢູ່ດ້ວຍການບໍ່ເຊື່ອຟັງ, ແທນທີ່ພວກເຮົາຈະເລືອກເອົາສິ່ງທີ່ດີທີ່ສຸດ ຕິດຕາມອົງພຣະເຢຊູຄຣິດແລະຄຳສອນຂອງພຣະອົງມາກ່ອນເປັນອັນດັບນຶ່ງ. ພຣະເຢຊູສາມາດເຮັດໃຫ້ທຸກສິ່ງສຳເຣັດເພື່ອເຮົາ, ດັ່ງນັ້ນຈົ່ງມອບບັນຫາທີ່ມີໄວ້ໃນອົ້ງພຣະຫັດຂອງພຣະອົງ.

3. <u>ປະຕິເສດທຸກຂໍ້ແກ້ຕົວ</u>: (ລູກາ. 9: 57-62)

ຂ່າວປະເສີດໃນພຣະທັມລູກາໃນຕອນນີ້ຊີ້ໃຫ້ເຫັນວ່າ, ເປັນເວລາຂອງອົງພຣະເຢຊູຄຣິດທີ່ຈະເລີ້ມອອກເດີນທາງໄປຍັງກຸງເຢຣູຊາເລັມແລະສລະຊີວິດຂອງພຣະອົງໃນການຕາຍໄຖ່ເອົາຄົນບາບ. ຂັ້ນຕອນທີນຶ່ງພຣະອົງໄດ້ມຸ້ງເດີນໄປຂ້າງໜ້າຫາໄມ້ກາງແຂນດ້ວຍໃຈກ້າຫານ, ສາວົກຂອງພຣະອົງໄດ້ຕິດຕາມພຣະອົງໄປ.

"ໃນຂະນະທີ່ເຂົາກຳລັງໄປຕາມທາງຢູ່ນັ້ນມີຄົນນຶ່ງທູນພຣະອົງວ່າ, ຂ້າພຣະອົງຈະຕິດຕາມພຣະອົງໄປໃນທຸກທີ່ທຸກບ່ອນທີ່ທ່ານໄປ." ເຖິງຢ່າງໃດກໍຕາມ ພຣະເຢຊູຄຣິດຊົງຮູ້ວ່າຊາຍຄົນນີ້ບໍ່ໄດ້ເຂົ້າໃຈໃນຄວາມຮຽກຮ້ອງຕ້ອງການຂອງຜູ້ຕິດຕາມພຣະຄຣິດ ການຮັບໃຊ້, ການເສັງສະລະ, ການປະຕິເສດຕົນເອງ, ແລະການທົນທຸກທໍຣະມານ! ຄຳຕອບຂອງອົງພຣະຜູ້ເປັນເຈົ້າແມ່ນຈ້ອງມອງເບິ່ງ.

ໝາຈິ້ງຈອກກໍມີຮູແລະນົກປ່າກໍຍັງມີຮັງ, " ແຕ່ບຸດມະນຸດບໍ່ມີແມ່ນແຕ່ບ່ອນຈະວາງຫົວນອນ," ຄຳຕອບຂອງພຣະເຢຊູ. ພວກເຮົາຈຳຕ້ອງພິຈາຣະນາເບິ່ງຄວາມເປັນຈິງໃນຄວາມຍາກລຳບາກທີ່ຜູ້ຕິດຕາມພຣະເຈົ້າຈະໄດ້ເຂົ້າສ່ວນພົວພັນນຳ. ບໍ່ໄດ້ເປັນທີ່ໜ້າຍິນດີ້ອງໂຄຣິບບູຊາ, ແລະບໍ່ໄດ້ເປັນທີ່ນິຍົມຊົມຊອບ.

ພຣະເຢຊູບອກເຖິງຂໍ້ທີສອງ "ຕາມເຮົາມາ" ແຕ່ວ່າຊາຍຄົນນັ້ນບໍ່ໄດ້ຕຽມຕົວໄວ້ໃຫ້ພ້ອມ. ລາວຈຶ່ງມີຂໍ້ແກ້ຕົວທີ່ລາວຈະເຮັດຢູ່ຫຼາຍຢ່າງ "ອັນທີນຶ່ງ" ທີ່ລາວຈະເຮັດກ່ອນສິ່ງອື່ນໝົດ " ຂ້ານ້ອຍຂໍໄປຝັງສົບພໍ່ຂ້ານ້ອຍກ່ອນ."ຂໍ້ຮຽກຮ້ອງຂອງຊາຍຄົນນີ້ເບິ່ງຄືວ່າເປັນເຫດຜົນທີ່ຖ່ວງດຶງເວລາ ແຕ່ພໍ່ຂອງລາວຈະປ່ວຍຫຼືບໍ່ປ່ວຍຈິງ. ສຸຂພາບຂອງພໍ່ລາວບໍ່ໄດ້ເປັນບັນຫາສຳຄັນ; ຜູ້ຕິດຕາມມີຄວາມສຳຄັນກວ່າ. (ເບິ່ງໃນ ລູກາ. 14: 26.) **ຄວາມສັດຊື່ຈິງຮັກຫັກດີຕໍ່ຄອບຄົວຈະຕ້ອງບໍ່ຢູ່ເໜືອຄວາມຈິງຮັກພັກດີໃນການມີຊີວິດຢູ່ເພື່ອພຣະຄຣິດ. ລາວແລະພຣະເຈົ້າເທົ່ານັ້ນ ທີ່ເປັນທີນຶ່ງ.**

ພຣະເຢຊູສັ່ງຜູ້ນັ້ນວ່າ "ໃຫ້ຄົນຕາຍ(ຕາຍຝ່າຍວິນຍານ)ຝັງກັນເອງ, ແຕ່ໃຫ້ເຈົ້າໄປແລະປະກາດເຣື່ອງອານາຈັກຂອງພຣະເຈົ້າ." ຄວາມໝາຍໃນການຕິດຕາມພຣະເຢຊູບໍ່ມີການຈັບຈອງ, ບໍ່ມີເງື່ອນໄຂ, ຫຼືຄຸນວຸດທິ.

ຄົນທີສາມ, ຄືກັບຄົນທີສອງ, ມີເງື່ອນໄຂທີ່ຈະສັດຊື່ຕໍ່ພຣະເຢຊູ. ລາວເວົ້າວ່າ. ຂ້ານ້ອຍຈະຕາມພຣະອົງ, ພຣະອົງເຈົ້າຂ້າ, ແຕ່ກ່ອນອື່ນ...."ຂໍ້ແກ້ຕົວຂອງຜູ້ນີ້ແມ່ນລາວຢາກໄປ "ສັ່ງລາ" ໃຫ້ກັບຄອບຄົວຂອງລາວ. ນີ້ກໍເປັນອີກເຫດຜົນນຶ່ງ. ພຣະເຢຊູຮູ້ວ່າລາວຕ້ອງການທີ່ຈະບອກກັບທຸກຄົນທີ່ຢູ່ໃນເຮືອນຫຼືລາວຄິດຮອດບ້ານ ຜູ້ທີ່ເອົາມືຈັບງ້ອນໄຖແລ້ວຫລຽວຄືນຫຼັງແມ່ນຜູ້ທີ່ມີສອງໃຈ ບໍ່ມີຜູ້ໃດຕິດຕາມພຣະເຢຊູດ້ວຍສອງໃຈ. ຜູ້ໃດເຮັດຢ່າງນັ້ນ " ກໍບໍ່ສົມກັບຣາຊອານາຈັກຂອງ ພຣະເຈົ້າ,"

ໂອກາດໃນການຕິດຕາມພຣະເຢຊູແມ່ນເໜືອກວ່າສິ່ງອື່ນໃດທັງໝົດແລະເໜືອກວ່າຂໍ້ແກ້ຕົວໃດໆ. ພວກເຮົາຈະຕ້ອງບໍ່ເປັນຄົນປົ້ນຄວາມ, ບໍ່ຕ້ອງໃຊ້ເວລາໃນການຕັດສິນ, ບໍ່ຂາດຄວາມໝັ້ນໃຈໃນການອຸທິດຖວາຍຕົວແກ່ພຣະເຈົ້າ. ພຣະເຢຊູຄຣິດເປັນອົງພຣະຜູ້ເປັນເຈົ້າ! ພຣະອົງສົມຄວນໄດ້ຮັບທຸກຄຳສັນຍາຂອງພວກເຮົາ.

ບົດຮຽນແຫ່ງຊີວິດ.

ພຣະເຢຊູໄດ້ຖາມວ່າ ອັນໃດຄືສິ່ງທີ່ທຸ້ມຮັດຜູ້ຕິດຕາມພຣະອົງ. ມັນເປັນນຶ່ງໃນຈຳນວນ 100 [1ໃນ 94] ຄຳຖາມໃນເຣື່ອງຄຳສອນຂອງພຣະເຢຊູໃນພຣະທັມລູກາລວມໄປເຖິງການບັນທຶກຄຳສອນຂອງພຣະເຈົ້າ. ຄຳຖາມໄດ້ຖາມໃນສັດຕະວັດທີ 1ແມ່ນຍັງມີຄວາມສຳຄັນເຖິງສັດຕະວັດທີ 21: "ຖ້າວ່າຜູ້ນຶ່ງໄດ້ສິ່ງຂອງໝົດທັງໂລກ ແຕ່ຈະເຮັດໃຫ້ຕົວເອງຈົບຫາຍເສັ້ງໄປຜູ້ນັ້ນຈະໄດ້ປໂຍດອັນໃດ?" ຄຳຖາມຂອງພຣະເຢຊູໄດ້ເຮັດໃຫ້ເຮົາພິຈາຣະນາເບິ່ງອັນໃດຄືຂອງໂລກນີ້ທີ່ເປັນຢູ່ຊົ່ວຄາວ ຄວາມຮັ່ງມີໃນໂລກນີ້ກັບຄວາມສູນເສັ້ງຄວາມຮັ່ງມີໃນຟ້າສວັນ: ຜູ້ທີ່ດຳລົງຊີວິດທີ່ມີຄວາມສັມພັນກັບພຣະຄຣິດກໍຈະໄດ້ຮັບຄວາມຮັ່ງມີຕລອດໄປ.

ຄຳສອນຂອງພຣະເຢຊູເຕືອນໃຫ້ເຮົາພິຈາຣະນາເບິ່ງອັນໃດທີ່ເຮັດໃຫ້ເຮົາມີໃຈໃຫ້ກັບພຣະຄຣິດພຽງແຕ່ເຄິ່ງດຽວ ຫຼືໃຫ້ຄຳໝັ້ນສັນຍາກັບພຣະອົງດ້ວຍຄວາມຮັກແລະຮັບໃຊ້. ພິຈາຣະນາເບິ່ງຂໍ້ຄວາມສຳຄັນດັ່ງຕໍ່ໄປນີ້.

- ❖ ຈົ່ງເຂົ້າໃຈວ່າພຣະເຢຊູຄຣິດເອີ້ນທ່ານມາເພື່ອປ່ຽນແປງຄວາມຮັບຜິດຊອບຕໍ່ພຣະອົງ.
- ❖ ອັນໃດຄືຄວາມໝາຍສຳຄັນຂອງຄວາມຮັບຜິດຊອບ. ອັນໃດທີ່ເຮັດໃຫ້ທ່ານປ່ຽນແປງໃນຊີວິດຂອງທ່ານ?ອັນໃດທີ່ເຮັດໃຫ້ທ່ານຮັກສາຄຳສັນຍາທີ່ມີກັບອົງພຣະເຢຊູ?
- ❖ ຮັບຜິດຊອບ(ຫຼືພິຈາຣະນາອີກຄັ້ງ)ເພື່ອຕິດຕາມພຣະເຢຊູໂດຍປາສຈາກເງື່ອນໄຂໃດໆທັງສິ້ນ
- ❖ ຈົ່ງເຂົ້າໃຈວ່າອັນໃດຄືຈຸດມຸ້ງໝາຍທີ່ສຳຄັນຂອງພຣະເຈົ້າແລະສິ່ງທີ່ຕາມມາ
- ❖ ອັນໃດເປັນຄວາມຈິງທີ່ສາມາດສະແດງວ່າທ່ານບໍ່ໄດ້ລະອາຍໃນເຣື່ອງຂອງພຣະເຢຊູ?
- ❖ ເລືອກເອົາການກະທຳອັນນຶ່ງທີ່ເປັນການດຳເນີນຊີວິດທີ່ດີໃນທິດນີ້ທີ່ເປັນມູນຄ່າທີ່ບໍ່ມີການປ່ຽນແປງ.
- ❖ ປະເມີນຜົນຂໍ້ແກ້ຕົວທີ່ເຮັດໃຫ້ທ່ານຫຼົບຫຼີກຄວາມຮັບຜິດຊອບທັງໝົດຕໍ່ພຣະເຢຊູຄຣິດ.
- ❖ ຢືນຢັນຄວາມປາຖນາທີ່ຈະຕິດຕາມພຣະຄຣິດ ໂດຍບໍ່ໄດ້ຄຳນຶງເຖິງຂໍ້ອ້າງໃດໆ

ໂຮງຮຽນວັນອາທິດ

ວັນອາທິດ ທີ 17 ເດືອນມີນາ 2013(3- 17- 2013)

ເມີນເສີຍຫຼືສະແດງຄວາມເຫັນໃຈ?

ຂໍ້ພຣະຄັມພີໃນບົດຮຽນ: ລູກາ 10: 25- 37

ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດທ່ານໄດ້ຢ່າງໃດ ?

ບົດຮຽນນີ້ຈະຊ່ວຍທ່ານໃຫ້ເລືອກທີ່ຈະດຳລົງຊີວິດຢູ່ຢ່າງເຫັນໃຈຄົນອື່ນ

ບົດຮຽນນີ້ເວົ້າກ່ຽວກັບຫຍັງ:

ພຣະເຈົ້າຄາດຫວັງໃຫ້ໄພ່ພົນຂອງພຣະອົງພິສູດວ່າເຂົາມີຄວາມຮັກຕໍ່ທຸກຄົນ. ບົດຮຽນນີ້ໄດ້ແນໃສ່ຄຳຖາມທີ່ວ່າ, "ໃນສາມຄົນນີ້ທ່ານເຫັນວ່າຄົນໃດເປັນເພື່ອນບ້ານຂອງຄົນທີ່ຕົກໃນມືພວກປຸ້ນນັ້ນ?" (ລູກາ 10:36)

ບົດຮຽນນີ້ມີຄວາມສຳຄັນຫຍັງ?

ຄົນທັງຫຼາຍໄດ້ພະຍາຍາມຢູ່ເລື້ອຍໆທີ່ຈະອະທິບາຍວ່າເຂົາຂາດຄວາມຮັກຄວາມເອົາໃຈໃສ່ຕໍ່ຄົນອື່ນ. ແຕ່ເຂົາບໍ່ເຄີຍຊອກຫາເຫດຜົນທີ່ແທ້ຈິງຂອງຄວາມຫຼົ້ມເຫຼວໃນຄວາມຮັກ. ຄວາມຮັກແມ່ນພິສູດໄດ້ໂດຍການກະທຳຂອງເຮົາ.

ບາງເທື່ອຄຣິສຕຽນກໍເບິ່ງໄປທາງອື່ນເມື່ອມີໂອກາດທີ່ຈະໃຫ້ຄວາມຊ່ວຍເຫຼືອຄົນອື່ນ, ລວມໄປເຖິງຄົນແປກໜ້າທີ່ປາກົດຢູ່ຕໍ່ໜ້າເຂົາ. ແອດເວີດຮູ້ວ່ານັ້ນບໍ່ແມ່ນທາງຂອງພຣະເຢຊູຄຣິດ ລາວຮູ້ວ່າການດຳເນີນຊີວິດຄຣິສຕຽນແມ່ນພ້ອມທີ່ຈະໃຫ້ຄວາມຊ່ວຍເຫຼືອກັບທຸກຄົນທີ່ຕ້ອງການຄວາມຊ່ວຍເຫຼືອ ເມື່ອລາວຮູ້ວ່າຄົນໃດຕ້ອງການໆຊ່ວຍເຫຼືອ ລາວກໍຊ່ວຍເຂົາໃນທັນທີໂລດ. ແອດເວີດ ບໍ່ໄດ້ໃຫ້ໂອກາດນັ້ນຜ່ານໄປໂດຍທີ່ບໍ່ໄດ້ສະແດງຄວາມຮັກຕໍ່ເພື່ອນບ້ານຂອງລາວເໝືອນກັບລາວຮັກຕົວລາວເອງ. ທຸກໆແລງວັນອັງຄານລາວນຸ່ງຖືແບບສະບາຍແລະອອກໄປຢ້ຽມຢາມຕາມໂຮງພຍາບານແລະມູນນິທິທ້ອງຖິ່ນ ໃນທີ່ນັ້ນລາວໄດ້ແບ່ງປັນການກະທຳແລະຄວາມຮັກຂອງຄຣິສຕຽນຕໍ່ທຸກຄົນ ຊຶ່ງລາວບໍ່ຄິດວ່າຈະໄດ້ຮັບສິ່ງໃດຕອບແທນຈາກເຂົາເຈົ້າ.

ໃນຂະນະທີ່ທ່ານສຶກສາບົດຮຽນນີ້, ທ່ານຈະຄົ້ນພົບວ່າການເລືອກທີ່ຈະດຳລົງຊີວິດຄຣິສຕຽນໃນທາງທີ່ມີຄວາມເຫັນອົກເຫັນໃຈນັ້ນຈະສາມາດຊ່ວຍທ່ານປ່ຽນຈາກການເປັນຄົນທີ່ບໍ່ມີຄວາມສົນໃຈ ກາຍມາເປັນຄົນທີ່ມີຄວາມເຫັນໃຈຄົນອື່ນ.

ສຶກສາພຣະຄັມພີ

1. **ຖາມຄຳຖາມທີ່ຖືກຕ້ອງ:** (ລູກາ. 10: 25-29)

ຂະນະທີ່ພຣະເຢຊູຄຣິດກຳລັງເດີນທາງໄປຍັງກຸງເຢຣູຊາເລັມ, "ມີຜູ້ຊ່ຽວຊານດ້ານກົດໝາຍຜູ້ນຶ່ງ" ດັ່ງທີ່ລູກາໄດ້ບັນທຶກເຣື່ອງຂອງລາວ, ໄດ້ເຂົ້າໄປພົບອົງພຣະຜູ້ເປັນເຈົ້າດ້ວຍການໃຊ້ຄຳຖາມຈາກຈຸດສູງສຸດສູ່ຈຸດຕ່ຳສຸດ ລາວມີຄວາມຮູ້ກ່ຽວກັບກົດພຣະບັນຍັດຂອງໂມເຊແລະລາວໄດ້ສິດສອນຄົນທັງຫຼາຍໃຫ້ເຊື່ອຟັງຄຳສັ່ງຂອງພຣະບັນຍັດນັ້ນ. ຊາຍຜູ້ຊ່ຽວຊານໃນພຣະຄັມພີພາກພັນທະສັນຍາເດີມຜູ້ນີ້ມີເຈດຕະນາ "ຕ້ອງການທົດສອບພຣະອົງ." ບາງທີນັກກົມບັນດິດຜູ້ນີ້ຕ້ອງການຢາກຈະເຫັນພຣະເຢຊູຜິດພາດໃນການໃຫ້ຄຳຕອບເພື່ອຈະເປັນໂອກາດໃຫ້ລາວເອົາພຣະເຈົ້າມາອວດ.

ທັມບັນດິດໄດ້ຄຳຖາມວ່າ: “ອາຈານເອີຍ, ຂ້ານ້ອຍຈະຕ້ອງເຮັດແນວໃດຈຶ່ງຈະໄດ້ຊີວິດອັນຕລອດໄປເປັນນິດ?” ເຮັດໃຫ້ພຣະເຢຊູປລາດໃຈ ແລະພຣະອົງຊົງຖາມລາວຄືນດ້ວຍສອງຄຳຖາມນີ້: “ໃນພຣະບັນຍັດໄດ້ຂຽນໄວ້ຢ່າງໃດ?” ແລະ “ທ່ານໄດ້ອ່ານແລ້ວເຂົ້າໃຈຢ່າງໃດ?” ອີງຕາມຄຳຖາມຂອງພຣະເຢຊູ ຖ້ອຍຄຳທີ່ “ຂຽນໄວ້” ໃນບັນຍັດຂອງໂມເຊໃນພາກພັນທະສັນຍາເດີມເປັນທີ່ຍອມຮັບແລະເຊື່ອຖືໄດ້ວ່າເປັນຄຳຕອບທີ່ຖືກຕ້ອງຂອງຄຳຖາມນັ້ນ.

ນັກທັມບັນດິດໄດ້ຕອບຢູ່ໃນພຣະທັມພາກພັນທະສັນຍາເດີມສອງບົດ (ພຣະບັນຍັດສອງ 6:5; ລະບຽບພວກເລວີ 19:18) ນຶ່ງໃນສີ່ຖ້ອຍຄຳທີ່ໃຊ້ຢ່າງຊຽ່ວຊານ “ ດ້ວຍສຸດຈິດ” ພຣະຄັມພີໄດ້ສອນກ່ຽວກັບຄວາມຮັກຂອງເຮົາຕໍ່ອົງພຣະຜູ້ເປັນເຈົ້າ. ຈຸດປະສົງແມ່ນພວກເຮົາຈະຕ້ອງຮັກພຣະເຈົ້າດ້ວຍສຸດໃຈ, ດ້ວຍສຸດກຳລັງສຸດຄວາມຄິດຂອງພວກເຮົາ; ແລະຮັກເພື່ອນບ້ານເໝືອນຮັກຕົນເອງ. ເຖິງຢ່າງໃດກໍຕາມ ນັກທັມບັນດິດກໍຍັງມີບັນຫາ. ລາວເຫັນພ້ອມໃນຂໍ້ບັນຍັດຂອງໂມເຊກ່ຽວກັບຄວາມຮັກແຕ່ບໍ່ແມ່ນໝົດທຸກຂໍ້ ຄວາມມືດທ່າງຝ່າຍຈິດວິນຍານຍັງຄອບງຳລາວຢູ່

ພຣະເຢຊູພໍໃຈໃນຄຳຕອບຂອງນັກທັມແລະແນະນຳລາວວ່າ “ ທ່ານຕອບຖືກແລ້ວ....ຈົ່ງເຮັດຢ່າງນີ້ແລ້ວທ່ານຈະໄດ້ຊີວິດ!” ຄຳສອນພຣະເຢຊູ “ຈົ່ງເຮັດຢ່າງນີ້ແລະທ່ານຈະໄດ້ຊີວິດ” ເປັນພຣະບັນຍັດຂໍ້ໃຫຍ່. ຖ້າລາວໄດ້ເຮັດຖືກຕ້ອງ ເຊື່ອຟັງຂໍ້ພຣະບັນຍັດກໍຈະເຮັດໃຫ້ລາວໄດ້ຮັບຊີວິດອັນຕລອດໄປເປັນນິດ. ເຖິງຢ່າງໃດກໍຕາມ ບັນຫາມີຢູ່ວ່າ ນັກທັມບັນດິດປະຕິບັດຕາມພຣະບັນຍັດໄດ້ໃນເຣື່ອງຄວາມຮັກຂອງລາວຕໍ່ພຣະເຈົ້າ ແຕ່ລາວບໍ່ມີຄວາມຮັກໃຫ້ກັບຄົນອື່ນໄດ້ຄືກັບລາວຮັກຕົວລາວເອງ. ລາວຄືກັບໂປໂລຜູ້ຊຶ່ງເວົ້າກ່ຽວກັບພຣະບັນຍັດແລະຂໍ້ບົກຜ່ອງຂອງລາວຕໍ່ພຣະບັນຍັດ," ພຣະບັນຍັດແມ່ນຝ່າຍພຣະວິນຍານແຕ່ຕົວເຮົາເປັນມະນຸດທັມມະດາ, ຊຶ່ງຖືກຂາຍໃຫ້ຢູ່ໃຕ້ຄວາມຜິດບາບ" (ໂຣມ 7:14). ຜູ້ນັບຖືສາສນາຄືກັບເຮົາທັງຫຼາຍໃນທຸກວັນນີ້ບໍ່ເຄີຍປະຕິບັດແລະບໍ່ເຄີຍໃຫ້ຄວາມຮັກຢ່າງຖືກຕ້ອງ.

ນັກທັມບັດດິດບໍ່ໄດ້ຄິດສົງສັຍວ່າລາວກຳລັງຖືກພຣະເຢຊູທົດສອບ. ລາວຮູ້ວ່າລາວບໍ່ໄດ້ປະຕິບັດຢ່າງຖືກຕ້ອງຄົບຖ້ວນຕໍ່ທຸກຄົນ. ລາວຕົກໃນສະຖານະການທີ່ຍາກລຳບາກແລະຕ້ອງການເອົາຕົວເອງຫລົບຫຼີກຈາກບັນຫາໃຫ້ໄວທີ່ສຸດ ຈະດ້ວຍວິທີໃດກໍຕາມ ພຣະຄັມພີຕອນນີ້ໄດ້ສອນໃຫ້ລາວຮູ້ວ່າ “ຈະຕ້ອງພິສູດຕົວເອງ," ມີຄວາມໝາຍວ່າຍອມຮັບໃນຂໍ້ຜິດພາດຂອງຕົວເອງເຣື່ອງຄວາມຮັກດັ່ງທີ່ກົດບັນຍັດບົ່ງໄວ້.

ນັກທັມບັນດິດເປັນຜູ້ຊ່ຽວຊານດ້ານກົດໝາຍ ລາວໄດ້ທູນຖາມວ່າ “ ແລະແມ່ນໃຜເປັນເພື່ອນບ້ານຂອງຂ້ານ້ອຍ?” ອີກຢ່າງນຶ່ງ ລາວໄດ້ຖາມວ່າລາວຈະຕ້ອງຮັກຄົນນານປານໃດຈຶ່ງຈະຖືວ່າຮັກສາພຣະບັນຍັດ? ນີ້ເປັນຄຳຖາມທີ່ຜິດ. ຖ້າຄຳຕອບຂອງພຣະເຢຊູຈຳກັດຄວາມໝາຍຄຳວ່າ ”ເພື່ອນບ້ານ” ລາວກໍຕອບຜິດໄປ ເພາະວ່ານັກທັມຮູ້ກັບຄົນສ່ວນຫລາຍທີ່ລາວຄິດວ່າບໍ່ແມ່ນເພື່ອນບ້ານ ຊາວຊາມາເຣັງກໍເປັນຄົນນຶ່ງໃນຈຳນວນຄົນເຫລົ່ານັ້ນ.

2. <u>ຮູ້ຈັກຄວາມຕ້ອງການຂອງບຸກຄົນ</u>: (ລູກາ. 10: 30- 32)

ໃນການຕອບຄຳຖາມຂອງນັກທັມບັນດິດ “ ໃຜຄືເພື່ອນບ້ານຂອງຂ້ານ້ອຍ?” (ລູກາ. 10: 29) ພຣະເຢຊູໄດ້ຍົກຄຳອຸປະມາເຣື່ອງນຶ່ງກ່ຽວກັບຊາຍຄົນນຶ່ງທີ່ຖືກເຄາະຮ້າຍຈາກພວກປຸ້ນໃນຂະນະເດີນທາງ ແລະການຕອບສນອງທີ່ແຕກຕ່າງກັນລະຫວ່າງຊາຍສາມຄົນ. ເປັນຄຳສອນສັ້ນໆເຣື່ອງຊາວຊາມາເຣັງຜູ້ໃຈດີທີ່ສະແດງໃຫ້ເຫັນສອງຝ່າຍ: ການກະທຳຂອງຄົນທີ່ບໍ່ມີຄວາມຮັກແລະຄົນທີ່ມີຄວາມຮັກ.

ເລີ້ມເຣື່ອງດ້ວຍເຫດການທີ່ໂຊກຮ້າຍຂອງຊາຍຄົນນຶ່ງທີ່ເດີນທາງຄົນດຽວ “ ລົງໄປຈາກກຸງເຢຣູຊາເລັມໄປເມືອງເຢຣິໂກ” 17 ໄມ ເປັນການເດີນທາງລົງຈາກພູຈາກທີ່ສູງສຸດຫາທີ່ຕ່ຳສຸດ, 2,500 ຟີດລະດັບນ້ຳທະເລທີ່ກຸງເຢຣູຊາເລັມຫາ 800 ຟີດລະດັບນ້ຳທະເລທີ່ເຢຣິໂກ. ລັກສະນະພູມີປະເທດມີຂຸມເປັນຫລຸບເປັນໂນນແລະເຕັມໄປດ້ວຍຫີນ, ແລະມັກມີ “ໂຈນ” ລີ້ຊ່ອນຕົວຢູ່ຫຼັງໂງ່ນຫີນເພື່ອລໍຖ້າຜູ້ໂຊກຮ້າຍທີ່ຈະມາເຖິງ.

ໃນທັນໃດ ໂຈນປຸ້ນກໍໄດ້ບຸກເຂົ້າທຸບຕີຜູ້ໂຊກຮ້າຍ. ທຳອິດ "ເຂົາເປືອຍກາຍລາວ" ຖອດເອົາເຄື່ອງນຸ່ງແລະຂອງທີ່ມີຄ່າ. ຕໍ່ມາເຂົາໄດ້ທາລຸນລາວ "ທຸບຕີລາວຈົນສລົບໄປ. ໃນທີ່ສຸດ, ເຂົາກໍປະຖິ້ມໄວ້ເກືອບຕາຍ "ນອນສລົບ" ຢູ່ຂ້າງທາງ.

ອັນໃດຄວນຈະເກີດຂຶ້ນກັບຊາຍຄົນນີ້? ພຣເຢຊູສືບຕໍ່ເລົ່າເຣື່ອງ, ໂດຍບັງເອີນມີ "ປະໂຣຫິດ" ໄດ້ " ລົງໄປທາງນັ້ນ" ແລະໄດ້ເຫັນຊາຍນັ້ນນອນຢູ່ທີ່ຫີນທາງ. ບາງທີປະໂຣຫິດອາດໄດ້ຍິນສຽງຄວນຄາງຄ່ອຍໆ, ຖ້າບໍ່ລະມັດລະວັງກໍອາດຍ່າງໄປຕຳເອົາລາວ. ປະໂຣຫິດອາດຈະຄິດຫາຂໍ້ແກ້ຕົວທີ່ຈະບໍ່ເຂົ້າໄປຫຍຸ້ງກ່ຽວ. ພຣະເຢຊູໄດ້ຊີ້ໃຫ້ເຫັນວ່ານັ້ນເປັນເຫດຜົນອັນໃດທີ່ປະໂຣຫິດບໍ່ເຂົ້າຫຍຸ້ງກ່ຽວ ເພາະວ່າລາວບໍ່ໄດ້ຮັກເພື່ອນບ້ານຂອງລາວບໍ?

ຕໍ່ມາມີຄົນເລວີ(ເປັນຄົນຍິວທີ່ເຮັດວຽກຊ່ວຍປະໂຣຫິດທີ່ວິຫານໃນກຸງເຢຣູຊາເລັມ) ຜ່ານກາຍມາຄົນດຽວ ໄດ້ເຫັນເໝືອນກັນແລະກໍຫລີກໄປ ຕ່າງຄົນກໍບໍ່ມີຄຸນສົມບັດພຽງພໍທີ່ຈະເປັນເພື່ອນບ້ານ. ແມ່ນຜູ້ຈັ່ງໃດທີ່ຈະຢຸດແລະໃຫ້ຄວາມຊ່ວຍເຫຼືອຊາຍຄົນນີ້?

ພຽງແຕ່ເຫັນຄວາມຕ້ອງການກໍບໍ່ພຽງພໍ ຖ້າພວກເຮົາບໍ່ໄດ້ຕອບສນອງຄວາມຮຽກຮ້ອງຕ້ອງການພວກເຮົາກໍບໍ່ໄດ້ປະຕິບັດຄຳສັ່ງຂອງພຣະເຈົ້າຢ່າງເຕັມທີ່ ທີ່ໃຫ້ເຮົາຮັກເພື່ອນບ້ານຂອງພວກເຮົາ. ພວກເຮົາຄວນມີຄວາມຮູ້ສຶກເຖິງຄວາມຮຽກຮ້ອງຕ້ອງການຂອງບຸກຄົນແລະຊອກຫາໂອກາດທີ່ຈະໃຫ້ຄວາມຊ່ວຍເຫຼືອພວກເຂົາ.

3. <u>ຕອບສນອງພຣະປະສົງຂອງພຣະເຈົ້າ</u>: (ລູກາ. 10: 33- 37)

ຄົນເດີນທາງຜູ້ທີສາມເປັນຊາວຊາມາເຣັງ ໄດ້ຜ່ານກາຍມາໃນພາຍຫຼັງ "ເມື່ອລາວໄດ້ພົບເຫັນຊາຍຄົນນັ້ນ." ຄວາມຮູ້ສຶກຂອງລາວເປັນທີ່ສັງເກດໄດ້ເພາະມີຄວາມແຕກຕ່າງ. "ລາວມີໃຈເມດຕາ," ພຣະເຢຊູເວົ້າ, ແລະໃນທັນທີທັນໃດລາວກໍໄດ້ສະແດງຄວາມຮັກຄວາມເມດຕາໂດຍບໍ່ໄດ້ຄຳນຶງເຖິງຄວາມປອດພັຍຫຼືຄວາມເສັ່ງຫາຍໃດໆຂອງຕົນເອງ, ເວລາບໍ່ສະດວກ ຫຼືແມ່ນກະທັ້ງຄົນນັ້ນເປັນຄົນຍິວຫຼືຄົນອິສຣາເອັນ. ຈະເຫັນໄດ້ຢ່າງຊັດແຈ້ງວ່າຈິດໃຈຂອງຊາວຊາມາເຣັງມີຄວາມເມດຕາສົງສານຕໍ່ຊາຍແປກໜ້າຜູ້ທີ່ຂາດຄວາມຊ່ວຍເຫຼືອຄົນນັ້ນ.

ຢ່າງທີນຶ່ງ ປະໂຣຫິດແລະພວກເລວີລົງໄປທາງນັ້ນແລະເຫັນແລ້ວກໍເວັ້ນກາຍໄປທາງອື່ນ, ຊາວຊາມາເຣັງ "ເຂົ້າໄປຫາລາວ." ຢ່າງທີສອງ, ລາວນຳເອົາເຄື່ອງໃຊ້ສ່ວນຕົວອອກມາແລ້ວລ້າງບາດໃຫ້ຊາຍຄົນນັ້ນດ້ວຍເຫຼົ້າແວງ, (ເປັນການຂ້າເຊື້ອ) ແລະນ້ຳມັນ(ເປັນການລະງັບຄວາມເຈັບປວດແລະບວບຊ້ຳ). ຢ່າງທີສາມ, ຊາວຊາມາເຣັງ "ພັນບາດແຜຂອງລາວ." ຢ່າງທີສີ່, ລາວ "ໂຈມຂຶ້ນຂີ່ສັດຂອງລາວເອງ" ເພາະຊາຍຄົນນັ້ນອ່ອນແຮງແລະຍ່າງໄປເຖິງເຢຣິໂກກໍຍັງອີກໄກ. ຢ່າງທີຫ້າ, ຊາວຊາມາເຣັງ " ພາລາວໄປເຖິງໂຮງແຮມ" ບ່ອນທີ່ລາວໄດ້ "ເອົາໃຈໃສ່ບົວລະບັດຄົນເຈັບ." ຕໍ່ມາໃນມື້ໜ້າລາວໄດ້ຈ່າຍເງິນໃຫ້ເຈົ້າຂອງໂຮງແຮມໃຫ້ເອົາໃຈໃສ່ບົວລະບັດຊາຍຄົນນີ້ເປັນຈຳນວນ "ສອງເດນາຣິອັນ" (ເປັນຄ່າຈ້າງສອງມື້ໃນການທຳງານ) ໃຫ້ "ເບິ່ງແຍງລາວ" ຊາວຊາມາເຣັງຍັງບອກກັບຜູ້ດູແລໂຮງແຮມວ່າຖ້າມີການໃຊ້ຈ່າຍເກີນໄປ "ເມື່ອເຮົາກັບມາເຮົາຈະໃຊ້ໃຫ້ຕາມທີ່ທ່ານໄດ້ຈ່າຍເກີນ."

ບາງເທື່ອເມື່ອຈ້ອງເບິ່ງຕາຂອງນັກທັມແລ້ວ ພຣະເຢຊູຊົງຖາມເທື່ອທີສາມວ່າ: "ໃນສາມຄົນນີ້ທ່ານເຫັນວ່າຄົນໃດເປັນເພື່ອນບ້ານຂອງຄົນທີ່ຕົກໃນມືຂອງພວກປຸ້ນນັ້ນ?"

ຄຳຖາມຂອງອົງພຣະຜູ້ເປັນເຈົ້າໄດ້ຊີ້ໃຫ້ເຫັນເຖິງຄຳຖາມຂອງທັມບັນດິດທີ່ໄດ້ຖາມວ່າ, "ແລະໃຜຄືເພື່ອນບ້ານຂອງຂ້ານ້ອຍ?" ຊຶ່ງເປັນຄຳຖາມທີ່ບໍ່ຖືກຕ້ອງເພາະວ່າມັນເປັນຄຳຖາມທີ່ມີຊ່ອງຫວ່າງເພື່ອຈະຫຼີກລ້ຽງທີ່ຈະບໍ່ສະແດງຄວາມເມດຕາຕໍ່ຄົນທີ່ຕົນບໍ່ເພິ່ງປາຖນາເຊັ່ນຄົນຊະມາເຣັງ ທີ່ຄົນຍິວດູຖູກຢຽບຫຍາມ. **ຄຳຖາມທີ່ຖືກຕ້ອງນັ້ນແມ່ນ, ຄົນທີ່ຂັດສົນນັ້ນຕ້ອງການຫຍັງ ຂ້ອຍສາມາດແບ່ງປັນສິ່ງທີ່ຂ້ອຍມີກັບລາວໄດ້ບໍ່? ຄຳຖາມນີ້ຍັງຄົງເປັນຄຳຖາມທີ່ຖືກຕ້ອງສຳລັບບັນດາຜູ້ທີ່ເຊື່ອໃນສມັຍນີ້ເໝືອນກັນ.**

ນັກທັມ ຕົກໃຈສັ່ນສາຍຕໍ່ເຣື່ອງທີ່ພຣະເຢຊູໄດ້ເລົ່ານັ້ນ, ຄຳຕອບມີພຽງທາງດຽວ, ລາວບໍ່ສາມາດຍອມຮັບວ່າບຸກຄົນສຳຄັນໃນເຣື່ອງນີ້ແມ່ນຊາວຊາມາເຮັງ ຊຶ່ງເປັນບຸກຄົນທີ່ລາວດູຖູກຢຽບຫຍາມ. ເຮັດໃຫ້ລາວຕົກໃຈ(ເພາະຄຳຕອບນັ້ນແມ່ນ, "ຜູ້ທີ່ສະແດງຄວາມເມດຕາຕໍ່ຄົນທີ່ຖືກປຸ້ນ" ລາວຕອບຖືກແລ້ວ, ແລະພຣະເຢຊູຊົງຢືນຢັນຕໍ່ຄຳຕອບນັ້ນ: "ຈົ່ງໄປເຮັດຢ່າງນັ້ນເໝືອນກັນ" ພຽງແຕ່ເຮັດດັ່ງນັ້ນລາວກໍມີຊີວິດຢູ່ຕາມພຣະປະສົງຂອງພຣະເຈົ້າ.

ເພາະວ່າ, ການເຊື່ອຟັງຄຳສັ່ງຂອງພຣະເຢຊູ "ຈົ່ງໄປແລະເຮັດຢ່າງນັ້ນເໝືອນກັນ" ບໍ່ໄດ້ໝາຍຄວາມວ່າພວກເຮົາ ຕ້ອງເອົາເງິນໃຫ້ທຸກຄົນທີ່ຂໍ ຫລືໃຫ້ເງິນແກ່ຄົນຕິດເຫຼົ້າເພື່ອໃຫ້ລາວຊື້ເຫຼົ້າກິນ ຫຼືເວົ້າຕົວະໃນໃບສະມັກງານຂອງເພື່ອນເພື່ອໃຫ້ເພື່ອນໄດ້ເຮັດງານ ນັ້ນບໍ່ແມ່ນຄວາມໝາຍຂອງພຣະເຢຊູ. ການບໍຣິຈາກແລະສະຕິປັນຍາຈະຕ້ອງໄປນຳກັນ ເພື່ອຕອບສນອງຕໍ່ພຣະປະສົງຂອງພຣະເຈົ້າ.

ບົດຮຽນແຫ່ງຊີວິດ.

ພຣະເຢຊູມັກຈະຖາມຄຳຖາມທົດສອບໃນຖານະທີ່ພຣະອົງເປັນຜູ້ດູແລຊີວິດຈິດວິນຍານແລະຄວາມຕ້ອງການຝ່າຍເນື້ອໜັງຂອງມະນຸດ. ບົດຮຽນໃນເດືອນມີນານີ້ສຸມຈຸດໃສ່ຫ້າຢ່າງ, ແລະການສຶກສາໃນອາທິດນີ້ແມ່ນແນໃສ່ຄຳຖາມນຶ່ງທີ່ອົງພຣະເຢຊູຖາມຄົນນຶ່ງຊຶ່ງເປັນຜູ້ຊ່ຽວຊານໃນບັນຍັດຂອງໂມເຊ. ອົງພຣະຜູ້ເປັນເຈົ້າໄດ້ຖາມລາວວ່າ "ໃນສາມຄົນນີ້ທ່ານເຫັນວ່າຄົນໃດເປັນເພື່ອນບ້ານ?" ອີກປະການນຶ່ງສຳລັບພວກເຮົາທຸກຄົນໃນວັນນີ້ຄຳຖາມນັ້ນໄດ້ຖາມວ່າ " ທ່ານເມີນເສີຍຕໍ່ຄວາມຂາດເຂີນຂອງເພື່ອນບ້ານບໍ່ ຫຼືທ່ານໄດ້ຊ່ວຍເຫຼືອເພື່ອນບ້ານຂອງທ່ານດ້ວຍໃຈເມດຕາ ບໍ່ວ່າຄົນໆ ນັ້ນຈະເປັນຜູ້ໃດ?

ເຣື່ອງທີ່ພຣະເຢຊູເລົ່າແລະຄຳຖາມທີ່ຖາມນັກທັມວ່າສາມຄົນນັ້ນໃຜເປັນເພື່ອນບ້ານຊາຍທີ່ຖືກປຸ້ນໃນລະຫว่ານການເດີນທາງ ຊີ້ໃຫ້ເຫັນເຖິງຄວາມຮັບຜິດຊອບໃນການເຮັດກັບເພື່ອນບ້ານດ້ວຍຄວາມຮັກຄວາມເມດຕາ ນີ້ແມ່ນຂໍ້ໃຫຍ່ໃຈຄວາມຂອງຄຳສອນໃນເຣື່ອງນີ້ທີ່ເຮົາຄວນຈື່ຈຳ.

- ຢ່າໃຫ້ເຮົາພຍາຍາມທີ່ຈະເລືອກໃຫ້ຄວາມຮັກຄວາມເມດຕາກັບຜູ້ທີ່ຕ້ອງການການຊ່ວຍເຫຼືອ
- ຈົ່ງເຂົ້າໃຈວ່າການຕອບຄຳຖາມທີ່ຖືກຕ້ອງນັ້ນບໍ່ພຽງພໍເທື່ອ; ພວກເຮົາຕ້ອງແນ່ໃຈວ່າພວກເຮົາຖາມຄຳຖາມທີ່ຖືກຕ້ອງ ດ້ວຍການໃຫ້ຄຳຕອບທີ່ຖືກຕ້ອງນຳ.
- ມີຄວາມຮູ້ສຶກໄວຕໍ່ຜູ້ຕ້ອງການການຊ່ວຍເຫຼືອແລະຫາໂອກາດໃຫ້ຄວາມຊ່ວຍເຫຼືອແກ່ຜູ້ຂໍຄວາມຊ່ວຍເຫຼືອ.
- ຈົ່ງຮູ້ແຈ້ງແລະປະຕິເສດ ຕໍ່ຂໍ້ແກ້ຕົວຂອງເຮົາທີ່ເຮັດໃຫ້ພາດໂອກາດທີ່ຈະຊ່ວຍເຫຼືອຄົນອື່ນ.
- ຢ່າໃຫ້ແຜນການສ່ວນຕົວຂອງເຮົາຂັດຂວາງໂອກາດທີ່ຈະໃຫ້ຄວາມຊ່ວຍເຫຼືອແກ່ຜູ້ທີ່ຂໍຄວາມຊ່ວຍເຫຼືອ.
- ປະຕິເສດການໃຊ້ລັກສະນະພາຍນອກ(ເຊັ່ນ ເຊື້ອຊາດ, ເພດ, ຖານະເສດຖະກິດ, ຄວາມຄິດເຫັນທາງການເມືອງ ຫລື ສາສນາ) ເປັນການຕັດສິນວ່າຜູ້ໃດທີ່ເຮົາຄວນຕອບສນອງຕໍ່ຄວາມຂາດເຂີນຂອງເຂົາເຈົ້າ.
- ຖາມຕົວເອງດ້ວຍຄຳຖາມເຫລົ່ານີ້: ເຮົາຈະຕອບສນອງດ້ວຍຄວາມຮັກຢ່າງໃດ? ຜູ້ໃດເປັນເພື່ອນບ້ານຂອງເຮົາໃນອາທິດນີ້? ຂ້າພະເຈົ້າຈະເຮັດໃນສິ່ງທີ່ພຣະເຈົ້າຕ້ອງການໃຫ້ຂ້າພະເຈົ້າເຮັດຫຼາຍສໍ່າໃດ?

ອຸປຖັມໂດຍລາວຊາວເທີນບັບຕິດສັມພັນwww.lsbf.orgແປໂດຍLLBC.

ໂຮງຮຽນວັນອາທິດ

ວັນອາທິດ ທີ 24 ເດືອນມີນາ 2013(3- 24 - 2013)

ເປັນຜູ້ໃຊ້ຫຼືເປັນຜູ້ຮັບໃຊ້?

ຂໍ້ພຣະຄັມພີໃນບົດຮຽນ: ລູກາ 22:19-30

ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດທ່ານໄດ້ຢ່າງໃດ ?

ບົດຮຽນນີ້ສາມາດຊ່ວຍທ່ານໃຫ້ປະສົບຜົນສຳເຣັດໃນຄວາມສັດຊື່ດ້ວຍການດຳລົງຊີວິດທີ່ຖ່ອມຕົວລົງຮັບໃຊ້.

ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:

ຄວາມສັດຊື່ແມ່ນຕ້ອງການຄວາມອ່ອນນ້ອມຖ່ອມຕົວແລະມີໃຈພ້ຳພ້ອມໃນການຮັບໃຊ້. ຈົ່ງຈື່ວ່າພຣະເຢຊູໄດ້ກະທຳສິ່ງໃດເພື່ອພວກເຮົາທີ່ເປັນສິ່ງຊ່ວຍສົ່ງເສີມໃນການປັບປຸງຄຸນນະພາບຊີວິດເຮົາ. ບົດຮຽນນີ້ຈະສຸມຈຸດສົນໃຈໃສ່ຄຳຖາມທີ່ວ່າ "ດ້ວຍວ່າໃຜເປັນຜູ້ໃຫຍ່ ແມ່ນຜູ້ທີ່ນັ່ງຢູ່ໂຕະຫຼືຜູ້ທີ່ຮັບໃຊ້?" (ລູກາ. 22:27)

ບົດຮຽນນີ້ມີຄວາມສຳຄັນຫຍັງ?:

ພວກເຮົາດຳລົງຊີວິດຢູ່ໃນສັງຄົມວັທນະທັມທີ່ມີຂໍ້ກຳນົດກົດເກນຂອງການປົກຄອງແລະຕຳແໜ່ງໜ້າທີ່ຊຶ່ງໄດ້ສະແດງອອກໃຫ້ເຫັນວ່າບຸກຄົນທີ່ຈະຮັບໃຊ້ຕ້ອງເປັນຜູ້ປະສົບຄວາມສຳເຣັດອັນໃດອັນນຶ່ງທີ່ມີຄວາມສຳຄັນ ຫຼືບໍ່ກໍຕ້ອງເປັນຜູ້ທີ່ມີຊື່ສຽງ. ພຣະເຢຊູໄດ້ສະແດງໃຫ້ເຫັນຄວາມແຕກຕ່າງກ່ຽວກັບການເປັນຜູ້ຮັບໃຊ້ ຜູ້ທີ່ຕິດຕາມພຣະເຢຊູຈະຕ້ອງດຳເນີນຊີວິດຕາມມາຕະຖານຂອງພຣະອົງ; ຜູ້ໃດກໍຕາມທີ່ຮັບໃຊ້ຕ້ອງເປັນຕົວຢ່າງອັນດີແລະຮັບໃຊ້ດ້ວຍໃຈຮັກ.

ໂຈແອວ ແລະ ແອເລັນ ມີຄວາມຄິດເຫັນກ່ຽວກັບຄວາມໝາຍຂອງຊີວິດວ່າແມ່ນການໄຕ່ເຕົ້າໄປສູ່ຜົນສຳເຣັດໃຫ້ສູງທີ່ສຸດແລະໃຫ້ເຖິງຈຸດໝາຍປາຍທາງໄວທີ່ສຸດເທົ່າທີ່ເຂົາຈະເຮັດໄດ້ ບໍ່ວ່າຈະເປັນດ້ານການເງິນ, ຊື່ສຽງ, ອຳນາດ, ການປະສົບຜົນສຳເຣັດໃນໜ້າທີ່ການງານ, ຫຼືເປັນຜູ້ທີ່ມີຄວາມນິຍົມຊົມຊອບເປັນພິເສດ. ແນ່ນອນ, ໃນທ້າສິ່ງນີ້ອາດເປັນສິ່ງທີ່ດີເພາະເຮົາສາມາດປະສົບກັບຜົນສຳເຣັດ ແຕ່ເມື່ອສິ່ງເຫຼົ່ານີ້ກາຍມາເປັນຄວາມພາກພູມໃຈຂອງເຮົາ ມັນກໍກາຍເປັນຄຸນສົມບັດທີ່ໜ້າກຽດຂອງຄົນທີ່ເຫັນແກ່ຕົວຄື "ຜົນສຳເຣັດ."

ພຣະເຈົ້າຈັດຫາທົນທາງທີ່ດີໃຫ້: **ດຳລົງຊີວິດເໝືອນເປັນຜູ້ຮັບໃຊ້; ເປັນຜູ້ໃຫ້ແທນທີ່ຈະເປັນຜູ້ຮັບ, ເປັນຜູ້ອວຍພອນຄົນອື່ນແທນທີ່ຈະໃຊ້ຄົນອື່ນ.** ບົດຮຽນນີ້ໄດ້ທ້າທາຍພວກເຮົາໃຫ້ສຳຣວດເບິ່ງຊີວິດຕົວເອງໃນການຊອກຫາໂອກາດໃຫ້ເຮົາເປັນຄົນໃຫ້ແທນທີ່ຈະເປັນຄົນພາກພູມໃຈໃນຄວາມເຫັນແກ່ຕົວ.

ສຶກສາພຣະຄັມພີ

1. ເຮັດຕາມແບບຢ່າງຂອງພຣະເຢຊູ: (ລູກາ. 22: 19- 23)

ການຮັບຫລືການໃຫ້? ເປັນຜູ້ໃຊ້ຫລືເປັນຜູ້ຮັບໃຊ້? ແມ່ນຫຍັງຄືເປົ້າໝາຍຊີວິດຂອງທ່ານ? ໃນບາງຄັ້ງຄຣິສຕຽນຕ້ອງຕອບຄຳຖາມທີ່ວ່າ ໃຜຈະຮັບໃຊ້ໃຜ ຮັບໃຊ້ຕົນເອງຫລືຮັບໃຊ້ຄົນອື່ນ? ຫລືຈະຖາມອີກຢ່າງນຶ່ງນັ້ນກໍຄື, ຂ້ອຍຈະນຳພາຊີວິດດ້ວຍຕົນເອງຫລືຈະໃຫ້ພຣະຄຣິດເປັນຜູ້ນຳພາຊີວິດຂອງຂ້ອຍ?

ເຖິງແມ່ນໄດ້ອ່ານໃນພຣະຄັມພີ ກ່ຽວກັບພຣະເຈົ້າຮຽກເອີ້ນມະນຸດໃຫ້ຮັບໃຊ້ພຣະອົງແທນທີ່ຈະຮັບໃຊ້ຕົວເອງ ມີບຸກຄົນທີ່ເປັນຕົວຢ່າງທີ່ມີຊື່ສຽງໃນສມັຍພຣະຄັມພີເດີມຄື ອັບຣາຮາມແລະເອັສເຕີ, ແລະໃນພຣະຄັມພີໃໝ່ແມ່ນ ມາຣີອາແລະໂປໂລ. ເພາະວ່າພຣະເຢຊູເປັນແບບຢ່າງທີ່ຄົບຖ້ວນສົມບູນ.

ພຣະເຢຊູໄດ້ຕັ້ງພຣະທັຍກຳນົດຊີວິດຂອງພຣະອົງເອງບໍ່ໃຫ້ການມີຣິດອຳນາດ, ຊື່ສຽງ, ຫຼືຄວາມມັ່ງຄັ່ງຢູ່ເໜືອ ກວ່າການຮັບໃຊ້. ພຣະອົງເວົ້າວ່າ “ບຸດມະນຸດບໍ່ໄດ້ມາເພື່ອໃຫ້ຄົນອື່ນບົວລະບັດຕົນ, ແຕ່ໄດ້ມາເພື່ອຈະບົວລະບັດເຂົາ ແລະປະທານຊີວິດຂອງຕົນໃຫ້ເປັນຄ່າໄຖ່ຄົນຈຳນວນຫຼາຍ” (ມັດທາຍ. 20:28). ໃນຂະນະທີ່ພວກເຮົາຄົ້ນຄວ້າສຶກ ສາບົດຮຽນໃນອາທິດນີ້ ພຣະເຢຊູໄດ້ພິສູດຕົວເອງ “ເປັນເໝືອນຜູ້ຮັບໃຊ້” (ລູກາ. 22:27)

ພຣະເຢຊູໄດ້ພິສູດໃຫ້ເຫັນໂດຍກ່າວຄວາມຈິງທຸກຢ່າງກ່ຽວກັບພຣະອົງໃນມື້ຄືນກ່ອນທີ່ຈະຖືກຄຶງໄວ້ເທິງໄມ້ກາງ ແຂນເພື່ອຕາຍໄຖ່ບາບແກ່ທຸກຄົນ. ຝ່າຍຫົວໜ້າຜູ້ນຳທາງສາສນາໃນກຸງເຢຣູຊາເລັມກໍໄດ້ຊອກຫາອົງພຣະເຢຊູຄຣິດ ເພື່ອຫາທາງທີ່ຈະກຳຈັດພຣະອົງອອກໄປຈາກທາງຂອງພວກເຂົາຢ່າງສິ້ນເຊີງ. ເຂົາໄດ້ພົບກັບຢູດາ ຜູ້ເປັນສິດຄົນນຶ່ງ ຂອງພຣະເຢຊູ ຜູ້ຊຶ່ງໄດ້ຕົກລົງຣາຄາໃນການມອບຕົວອົງພຣະເຢຊູຄຣິດໃຫ້ພວກທີ່ຈະຂ້າພຣະອົງ. ຫຼັງຈາກຕົກລົງຣາ ຄາແລ້ວ ຢູດາກໍອອກຈາກພວກເຂົາມາຮ່ວມຢູ່ນຳພຣະເຢຊູແລະອັຄສາວົກ ເພື່ອຮ່ວມສເລີມສລອງວັນເທສການ ກິນ ເຂົ້າຈີທີ່ບໍ່ມີເຂືອແປ້ງ (ລູກາ. 22: 1- 6)

ພຣະເຢຊູແລະອັຄສາວົກຂອງພຣະອົງກຳລັງກິນປັສຄາເພື່ອລະນຶກເຖິງວັນທີ່ພຣະເຈົ້ານຳຊາວອິສຣາເອັນອອກ ຈາກການເປັນທາດໃນອີຢິບ ຊຶ່ງອາດເປັນເຂົ້າຄາບສຸດທ້າຍຂອງພຣະເຢຊູຄຣິດທີ່ຈະກິນຮ່ວມກັບເຂົາ “ຈົນກວ່າຈະ ສຳເຣັດຄວາມໝາຍຂອງປັສຄານັ້ນໃນຣາຊແຜ່ນດິນຂອງພຣະເຈົ້າ” (ລູກາ.22: 16), ພາຍໃນນຶ່ງຊົ່ວໂມງຂ້າງໜ້າອົງ ພຣະຜູ້ເປັນເຈົ້າກໍຈະຕາຍ ການກິນປັສຄາກໍມີຈຸດປະສົງມຸ້ງຕົງໄປທີ່ການສະເດັດມາຂອງພຣະຄຣິດແລະການຕາຍໄຖ່ ບາບກໍໃກ້ຈະມາເຖິງ. ດັ່ງນັ້ນ ພຣະເຢຊູຈຶ່ງຕັ້ງພິທີມະຫາສນິດກັບພວກສາວົກຂອງພຣະອົງຄັ້ງທຳອິດ ໂດຍທີ່ພຣະອົງ ໄດ້ເວົ້າວ່າ “ນີ້ຄືຄຳສັນຍາໃໝ່.” ສຳລັບຜູ້ເຊື່ອໃນທຸກວັນນີ້ ພິທີມະຫາສນິດແມ່ນໃຫ້ເຮົາຫວນຄືນໄປເບິ່ງການວາຍ ພຣະຊົນຂອງອົງພຣະເຢຊູຄຣິດເພື່ອພວກເຮົາແລະການມາຕັ້ງຢູ່ຂອງຣາຊອານາຈັກຂອງພຣະອົງ.

ຄວາມຈິງຂອງສິນມະຫາສນິດແມ່ນໃຫ້ເຮົາລະນຶກເຖິງພຣະເຢຊູຄຣິດແລະການວາຍພຣະຊົນຂອງພຣະອົງເພື່ອ ພວກເຮົາ. ເຂົ້າຈີ່ແມ່ນແທນພຣະກາຍຂອງພຣະເຢຊູ, ແລະຈອກໝາຍເຖິງພຣະໂລຫິດຂອງພຣະອົງ (ພຽງແຕ່ເປັນສັນ ລາລັກເທົ່ານັ້ນ ເພາະພຣະເຢຊູຄຣິດຍັງຢູ່ນຳພວກເຂົາ). ພຣະເຈົ້າຂອງພວກເຮົາມັກຈະໃຊ້ຄຳອຸປະມາເພື່ອອ້າງເຖິງ ຕົວພຣະອົງເອງເຊັ່ນ “ເຂົ້າຈີ່ແຫ່ງຊີວິດ” (ໂຍຮັນ. 6:35), “ປະຕູ” (ຢຮ. 10:9), “ເຮົາເປັນເຄືອອະງຸ່ນແທ້”(ຢຮ.15:1). ໃນທັນທີ ທີ່ພຣະເຢຊູຄຣິດໄດ້ເວົ້າວ່າການຈາກໄປຂອງເຮົາກໍໃກ້ເຂົ້າມາແລ້ວ: “ແຕ່ເບິ່ງແມ, ມືຂອງຜູ້ທີ່ທໍຣະຍົດຕໍ່ເຮົາ ກໍຢູ່ກັບເຮົາເທິງໂຕະນີ້!”

ຫຼັງຈາກນັ້ນພວກອັຄສາວົກສິບສອງຄົນ “ ໄດ້ເລີ້ມຖົກຖຽງກັນວ່ານຶ່ງໃນພວກເຂົາແມ່ນຜູ້ໃດທີ່ເຮັດເຊັ່ນນີ້” ຜູ້ທໍຣະຍົດແມ່ນຢູດາ, ຄວາມມືດເປັນຕົວຢ່າງຂອງຄົນທີ່ຮັບໃຊ້ຕົວເອງບໍ່ຮັບໃຊ້ຄົນອື່ນ, ຜູ້ທີ່ເປັນຄົນຕອບຄຳຖາມນີ້ “ສິ່ງທີ່ຢູ່ ຢູ່ໃນນັ້ນ ແມ່ນສຳລັບຂ້ອຍບໍ?”

ເພາະວ່າຊື່ **ຢູດາ** ມີຄວາມໝາຍວ່າ “ຜູ້ທໍຣະຍົດ,” ລາວຮັບໃຊ້ຕົວລາວເອງແທນທີ່ຈະຮັບໃຊ້ຄົນອື່ນຫຼືພຣະເຈົ້າ. ນັ້ນຄືການຕັດສິນໃຈສຸດທ້າຍຂອງຢູດາຕໍ່ຊາຕາກັມຂອງລາວ: “
ຄວາມໂສກເສົ້າຈິ່ງເກີດຂຶ້ນກັບລາວດ້ວຍວ່າລາວໄດ້ທໍຣະຍົດຕໍ່ພຣະເຈົ້າ”
ຄົນທີ່ເອົາຕົວເອງເປັນຈຸດສູນກາງຈະສູນເສັຍທຸກຢ່າງໃນເວລາສຸດທ້າຍ ຜູ້ທີ່ເຮັດຕາມແບບຢ່າງຂອງພຣະຄຣິດຄືເຫັນ ແກ່ຄົນອື່ນກ່ອນ ກໍຈະໄດ້ຮັບການເຫັນດີຈາກພຣະອົງໃນການຮັບໃຊ້.

2. <u>ຫຼີກເວັ້ນຈາກຄວາມຄິດຢ່າງໂລກ:</u> (ລູກາ. 22:24- 27)

ພວກອັຄສາວົກສິບສອງຄົນໄດ້ຖົກຖຽງກັນໃນເຣື່ອງແມ່ນໃຜເປັນຜູ້ທໍຣະຍົດຕໍ່ພຣະເຢຊູ ພຣະເຢຊູເວົ້າວ່າມີຜູ້ນຶ່ງ ໃນຖ້າມກາງພວກເຂົາ. ເຂົາບໍ່ຮູ້ວ່າແມ່ນໃຜ! ຢູດາສາມາດເຊື່ອງສົ້ນຄວາມບໍ່ເຊື່ອຟັງແລະຄວາມເຫັນແກ່ຕົວໄດ້ສໍາ ເຣັດບໍໃນລະຍະເວລາສາມປີ? ລອງວາດພາບເບິ່ງການປະຕິເສດຂອງແຕ່ລະຄົນທີ່ນັ່ງຢູ່ອ້ອມໂຕະ. ຢູດາກໍຄືກັນ, ສະ ແດງສີໜ້າຕາຕີ່, ຄື້ວສົນ, ອາດເປັນໄປໄດ້ທີ່ຈະຢືນຢັນວ່າລາວບໍ່ແມ່ນຄົນທໍຣະຍົດໂດຍຖາມວ່າ "ບໍ່ແມ່ນຂ້ານ້ອຍຕີ, ອາຈານເອີຍ?" (ມັດທາຍ. 26:25).

ໃນອີກບໍ່ນານເຊື່ອວ່າພຣະເຢຊູຄຣິດຈະສະແດງຣາຊອານາຈັກຂອງພຣະອົງ, ພວກອັຄສາວົກຍັງສົນໃຈໃນການ "ຖົກຖຽງ" ແຕ່ໃນເວລານີ້ເຂົາກັບເປັນຫ່ວງເປັນໃຍໃນລະຫວ່າງພວກເຂົາວ່າ "ໃຜຈະເປັນຜູ້ໃຫຽ່ກວ່າໝູ່." ຄວາມເຫັນ ແກ່ຕົວຂອງພວກເຂົາພຸ່ງຂຶ້ນສູງ, ດັ່ງນັ້ນພຣະເຢຊູຈຶ່ງເຂົ້າແກ້ໄຂໃນທັນທີພຣະອົງໄດ້ສົມທຽບໃຫ້ເຫັນຄວາມແຕກ ຕ່າງ ລະຫວ່າງຄຸນຄ່າຂອງໂລກແລະຄວາມໝາຍການເປັນໃຫຽ່ໃນຣາຊອານາຈັກຂອງພຣະເຈົ້າ. ພວກອັຄສາວົກມີ ຄວາມກັງວົນຕໍ່ສະພາບການໃນຂະນະທີ່ຕິດຕາມພຣະຄຣິດ.

ອັນທີນຶ່ງ, ພຣະເຢຊູສໍາແດງໃຫ້ເຫັນວ່າ "ກະສັດຂອງຄົນຕ່າງຊາດຈະປົກຄອງ" ທຸກຄົນທີ່ຢູໃຕ້ອໍານາດຂອງເຂົາ, ອໍານາດສັ່ງການຂອງເຂົາກໍຍິ່ງໃຫຽ່, ໂຫດຮ້າຍ, ເຖິງປານນັ້ນ, ພວກຜູ້ກົດຂີ່ເຫຼົ່ານີ້ຍັງຄິດວ່າຕົນເອງ "ເປັນເຈົ້າບຸນເຈົ້າ ຄຸນ" ມີຄວາມໝາຍວ່າ "ເປັນຄົນດີ."

ດັ່ງນັ້ນຈຶ່ງເຮັດໃຫ້ພຣະເຢຊູສະດຸ້ງ: "ແຕ່ໃນພວກທ່ານບໍ່ເປັນດັ່ງນັ້ນ." ອັຄສາວົກຈະຕ້ອງຫຼີກເວັ້ນຄວາມຄິດທາງ ໂລກ ໃນຣາຊະອານາຈັກຂອງພຣະເຢຊູຜູ້ເປັນຜູ້ໃຫຽ່ແມ່ນ "ຜູ້ທີ່ນ້ອຍສຸດ " ໝາຍຄວາມວ່າມີຊື່ສຽງທາງໂລກນ້ອຍທີ່ ສຸດ; ແລະຜູ້ໃດເປັນຜູ້ນໍາກໍແມ່ນໃຫ້ຜູ້ນັ້ນເປັນຜູ້ຮັບໃຊ້. **ເປັນຜູ້ໃຫຽ່ແມ່ນເປັນຜູ້ຮັບໃຊ້.**

ອັນທີສອງ, ເພື່ອເນັ້ນໜັກຫຼາຍຂຶ້ນພຣະເຢຊູໄດ້ຖາມວ່າ, "ໃຜເປັນຜູ້ໃຫຽ່ແມ່ນຜູ້ທີ່ນັ່ງຢູ່ໂຕະຫຼືຜູ້ທີ່ຮັບໃຊ້?" ສໍາລັບ ພວກສາວົກ ຄໍາຕອບທີ່ຊັດເຈນແມ່ນຜູ້ທີ່ນັ່ງຢູ່ໂຕະ; ແລະເຂົາກໍຕອບຖືກເມື່ອເບິ່ງໄປເຖິງການມີຊື່ສຽງຂອງໂລກ. ພຣະ ເຢຊູຕອບດ້ວຍຄໍາຖາມຂອງພຣະອົງວ່າ "ແມ່ນຜູ້ທີ່ນັ່ງຢູ່ໂຕະບໍ?"

ໃນປໂຍກຕໍ່ໄປຂອງອົງພຣະຜູ້ເປັນເຈົ້າເຮັດໃຫ້ພວກສາວົກມີດງຽບຢູ່, ເພາະພຣະອົງໄດ້ເປີດເຜີຍຕົນເອງວ່າພຣະ ອົງບໍ່ແມ່ນກະສັດຍິ່ງໃຫຽ່ຜູ້ທີ່ໂຫດຮ້າຍແລະຜູ້ທີ່ເຫັນແກ່ຕົວຫຼືຜູ້ທີ່ນັ່ງໃນງານລ້ຽງທີ່ມີໜ້າມີຕາ, ແຕ່ໃນທາງກົງກັນຂ້າມ "ພຣະອົງເປັນຜູ້ຮັບໃຊ້." ພາຍໃນອີກບໍ່ເທົ່າໃດຊົ່ວໂມງກະສັດຂອງກະສັດທັງປວງກໍຈະຮັບໃຊ້ຄົນບາບດ້ວຍການໃຫ້ຊີ ວິດຂອງພຣະອົງຕາຍເທິງໄມ້ກາງແຂນ!

3. <u>ມີສ່ວນຮ່ວມໃນຣາຊອານາຈັກຂອງພຣະເຈົ້າ</u>: (ລູກາ. 22: 28- 30)

ພຣະເຢຊູໄດ້ເນັ້ນໜັກໃນຄໍາສອນຂອງພຣະອົງວ່າພຣະອົງໄດ້ເອີ້ນພວກສາວົກໃຫ້ເຂົ້າມາຮັບໃຊ້, ບໍ່ແມ່ນຊອກ ຫາປໂຍດໃສ່ຕົວເອງ ແຕ່ເຂົາຈະຕ້ອງບໍ່ຄິດວ່າການຮັບໃຊ້ມີແຕ່ໃຫ້ ບໍ່ມີການຮັບ. ພຣະເຢຊູໄດ້ບອກໃຫ້ເຂົາຮູ້ວ່າ ເຖິງ ແມ່ນລາງວັນຂອງຜູ້ຮັບໃຊ້ຍັງບໍ່ແມ່ນໃນເວລານີ້, ແຕ່ເຂົາຈະບໍ່ຖືກປະຕິເສດ(ເຂົາຈະໄດ້ຮັບ).

ຢ່າງແລກທີ່ພຣະເຢຊູຊົງຮູ້ຄືຄວາມຈົງຮັກພັກດີຂອງພວກສາວົກຍັງມີຢູ່ນັບຕັ້ງແຕ່ວັນທີ່ພຣະອົງໄດ້ເອີ້ນເອົາເຂົາ ແຕ່ລະຄົນ. ບໍ່ເປັນໜ້າສົງສັຍໃນຄວາມຮູ້ສຶກອັນດີເມື່ອໄດ້ຍິນອົງພຣະຜູ້ເປັນເຈົ້າກ່າວຍົກຍ້ອງ "ຝາຍພວກທ່ານເປັນຜູ້ ທີ່ຕິດໝັ້ນຢູ່ກັບເຮົາໃນຄາວທີ່ເຮົາຖືກທົດລອງ." ລວມໄປເຖິງຄວາມອົດທົນຂອງພຣະເຢຊູຕໍ່ຜູ້ທີ່ບໍ່ເຊື່ອຟັງຄໍາສັ່ງສອນ ຂອງພຣະອົງແລະຜູ້ນໍາສາສນາຂອງຊາວຢິວທີ່ຍັງສືບຕໍ່ເປັນສັດຕຣູກັບພຣະອົງ. ຕໍ່ເຫດການທັງໝົດນີ້ເຂົາບໍ່ເຄີຍປະ ຖິ້ມພຣະອົງ ເຂົາແຕ່ລະຄົນໄດ້ຫຼົບຫຼີກຄວາມຍາກລໍາບາກດ້ວຍຖານະອັນຕໍ່າຕ້ອຍແລະພຣະອົງກໍຍ້ອງຍໍໃນຄວາມຈົງ ຮັກພັກດີຂອງພວກເຂົາ. ແນ່ນອນພວກສາວົກຈະຕ້ອງມີຄວາມຊົມຊື່ນຍິນດີທີ່ໄດ້ຍິນຄໍາຍ້ອງຍໍຈາກພຣະເຢຊູຍ້ອນ ຄວາມເຊື່ອທີ່ໝັ້ນຄົງແລະຄວາມຮັກທີ່ຈົງຮັກພັກດີ.

ຕໍ່ມາພຣະເຢຊູໄດ້ໃຫ້ສັນຍາກັບພວກສາວົກว่าแม่นอนพวกเขาจะได้ຮັບລາງວັນອັນໃຫຍ່ ບໍ່ແມ່ນດຽວນີ້ແຕ່ໃນພາຍຫຼັງແລະບໍ່ແມ່ນໃນຊີວິດປັດຈຸບັນແຕ່ໃນຊີວິດທີ່ຈະມາພາຍຫຼັງ. ເຂົາຈະມີປະສົບການທີ່ກ້າວໜ້າເປັນພິເສດໃນການແບ່ງປັນຄວາມຊົມຊື່ນຍິນດີຮ່ວມກັບພຣະເຢຊູໃນ "ຣາຊອານາจักร" ຂອງພຣະອົງ. ດັ່ງນັ້ນຊີວິດຄວນໄດ້ຮັບການສົ່ງເສີມດ້ວຍຄຳສັນຍາຂອງພຣະເຢຊູ "ພວກທ່ານຈະກິນແລະດື່ມຮ່ວມໂຕະກັບເຮົາໃນຣາຊແຜ່ນດິນຂອງເຮົາ." ແຕ່ຍັງບໍ່ພຽງແຕ່ເທົ່ານັ້ນ ລາງວັນຂອງພວກສາວົກແມ່ນຈະໄດ້ "ນັ່ງເທິງບັນລັງພິພາກສາສິບສອງຕະກຸນຂອງຊົນຊາດອິສຣາເອັນ" ມີຄວາມໝາຍວ່າເຂົາຈະເປັນຜູ້ນຳໃນຣາຊອານາจักรของพระคริต. ດັ່ງນັ້ນ, ສາວົກຂອງພຣະເຢຊູຈຶ່ງບໍ່ມີຄວາມຄາດຫວັງຕໍ່ອຳນາດແລະທຸກສິ່ງທີ່ເກີດຂຶ້ນໃນໂລກນີ້ແຕ່ມີສິ່ງທີ່ດີກວ່າລໍຢູ່ຂ້າງໜ້າ ນັ້ນແມ່ນຄວາມຊົມຊື່ນຍິນດີໃນພຣະຄຣິດອັນຕລອດໄປໃນຣາຊແຜ່ນດິນຂອງພຣະເจ้าและในฟ้าสวันตลอดไปเป็นนิด.

ພຣະເຢຊູໃຫ້ຄຳສັນຍາວ່າຜູ້ທີ່ເຊື່ອທຸກຄົນຈະໄດ້ຮັບລາງວັນໃນພາຍໜ້າ. ຜູ້ຮັບໃຊ້ຂອງພຣະຄຣິດຕ້ອງຕັ້ງໝັ້ນຄົງໃນຄວາມເຊື່ອແລະການຂອບພຣະຄຸນດ້ວຍຄວາມຈິງໃຈຂອງພວກເຂົາໃນການມີສ່ວນຮ່ວມໃນຣາຊແຜ່ນດິນຂອງພຣະເจ้า ເຊັ່ນຄຳສັນຍາໃນລາງວັນອັນຍິ່ງໃຫຍ່ ບັດນີ້ໃຫ້ພວກເຮົາຕອບຄຳຖາມ ຈະເປັນຜູ້ໃຊ້ຫຼືຜູ້ຮັບໃຊ້? ດ້ວຍການອະທິຖານດ້ວຍຄວາມຈິງໃຈ "ຂໍໃຫ້ອົງພຣະຜູ້ເປັນເจ้าเธอให้ข้าน้อยเป็นผู้รับใช้ของพระอิง."

ບົດຮຽນແຫ່ງຊີວິດ.

ອີງຕາມຄຳສັ່ງສອນຂອງພຣະເຢຊູຄຣິດ ການທີ່ຈະເປັນໃຫຍ່ໃນຣາຊອານາจักรของพระอิงจะต้องเป็นคนที่ຖ່ອມຕົວແລະມີຈິດໃຈເປັນຄົນຮັບໃຊ້ ເໝືອນດັ່ງການຮັບໃຊ້ຂອງພຣະເຢຊູຄຣິດ ພຣະອົງໄດ້ຖວາຍຊີວິດເທິງໄມ້ກາງແຂນ ພວກເຮົາສົມຄວນໄດ້ຮັບແຮງບັນດານໃຈໃຫ້ດຳເນີນຊີວິດເປັນຜູ້ຮັບໃຊ້. ພຣະເຢຊູຄຣິດໄດ້ສັນຍາໃຫ້ເຮົາມີຄວາມຊົມຊື່ນຍິນດີແລະສືບຕໍ່ໃນການຮັບໃຊ້ໃນຣາຊອານາจักรของพระอิง ທັງໝູນໃຈເຮົາໃຫ້ເດີນຕາມຮອຍພຣະບາດຂອງພຣະອົງ ພວກເຮົາຕ້ອງຕັດສິນໃຈໂດຍການປະເຊີນໜ້າກັບຄຳຖາມທີ່ພຣະອົງຖາມພວກອັຄສາວົກ: "ດ້ວຍວ່າໃຜເປັນຜູ້ໃຫຍ່ແມ່ນຜູ້ທີ່ນັ່ງໃນໂຕະຫຼືຜູ້ທີ່ຮັບໃຊ້?" ຈົ່ງໃຫ້ການເລືອກຂອງເຮົາເປັນເໝືອນຄຳຕອບຂອງພຣະເຢຊູ: "ແຕ່ຝ່າຍເຮົາຢູ່ຖ້ານກາງພວກທ່ານເປັນເໝືອນຜູ້ຮັບໃຊ້"

ຈົ່ງຖາມຕົວທ່ານເອງว่า ข้าพะเจ้าจะเป็นผู้รับใช้ที่ดีได้ย่างใด? ນີ້ແມ່ນການກະທຳບາງຢ່າງທີ່ທ່ານຕ້ອງເລີ່ມຕົ້ນເຮັດຫຼືຮັກສາການດຳເນີນຊີວິດຕາມການຮຽກເອີ້ນຂອງພຣະຄຣິດໃຫ້ເປັນຜູ້ຮັບໃຊ້.

- ຈົ່ງຄຳນຶງເຖິງສິ່ງທີ່ພຣະຄຣິດໄດ້ກະທຳເພື່ອທ່ານ,
  ພິເສດສຸດແມ່ນການສິ້ນພຣະຊົນຂອງພຣະອົງທີ່ໄມ້ກາງແຂນ.
- ພິຈາຣະນາເປັນພິເສດໃນການດຳລົງຊີວິດຂອງທ່ານ "ໃຫ້ລະນຶກເຖິງພຣະອົງ."
- ປະຕິເສດທັສນະຄະຕິໃນຄວາມເປັນໃຫຍ່ຂອງໂລກນີ້.
- ຂອກສແວງຫາການຮັບໃຊ້ດ້ວຍການຖ່ອມຕົວເໜືອກว่าการเป็นใหญ่และกงดตียิด.
- ຍອມຮັບว่า ส่วนใดในชีวิดของ
  ท่านที่มีข้บิกพ่องที่ต้องยอมจำนินต่บันยัดของพระเยซูและเชื่อฟังตามพระปะสิงของพระอิง.
- ໃຫ້ຄຳໝັ້ນສັນຍาว่าจะรับใช้อิงพระผู้เป็นเจ้าย่างสัดซื่.
- ຈົ່ງເຂົ້າໃຈว่าการรับใช้ด้วยความสัดซื่นั้นจะได้รับลางวันในแผ่นดินสวัน.
- ຈົດຈຳເອົາຂໍ້ພຣະຄັມພີທີ່ພຣະເຢຊູໄດ້ບັນຍາຍເຖິງພຣະອົງເອງ
  "ฝ่านเธ้าอยู่ท้ามกางพวกท่านเป็นเหมือนผู้รับใช้."(ລູກາ. 22:27)

ອຸປຖັມໂດຍລາວຊາວເທີນບັບຕິດສັມພັນwww.lsbf.orgแปโดย VR.

ໂຮງຮຽນວັນອາທິດ

ວັນອາທິດທີ 31 ເດືອນມີນາ 2013(3-31-2013)

ເຫັນລ້າງໆຫຼືຈື່ຈຳໄດ້?

ຂໍ້ພຣະຄັມພີໃນບົດຮຽນ: ໂຍຮັນ. 20: 1-18

ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດທ່ານໄດ້ຢ່າງໃດ ?

ບົດຮຽນນີ້ຈະຊ່ວຍໃຫ້ທ່ານຍອມຮັບແລະເຊື່ອວ່າພຣະເຢຊູເປັນຄືນມາຈາກຕາຍ ແລະການເປັນຄືນຈາກຕາຍຂອງພຣະອົງນັ້ນໄດ້ປ່ຽນແປງທຸກຢ່າງ.

ບົດຮຽນນີ້ເວົ້າກ່ຽວກັບຫຍັງ:

ການຍອມຮັບແລະເຊື່ອໃນການຄືນພຣະຊົນຂອງພຣະເຢຊູຄຣິດໄດ້ປ່ຽນແປງຊີວິດຂອງພວກເຮົາ. ບົດຮຽນນີ້ສຸມຈຸດສົນໃຈໃສ່ໃນຄຳຖາມທີ່ວ່າ, “ແມ່ນຜູ້ໃດທີ່ທ່ານກຳລັງຊອກຫາ?” (ໂຍຮັນ. 20:15)

ບົດຮຽນນີ້ມີຄວາມສຳຄັນຫຍັງ

ຫຼາຍຄົນກຳລັງຊອກຫາບາງສິ່ງບາງຢ່າງ ຫຼືຊອກຫາບາງຄົນ ເພື່ອໃຫ້ຊີວິດຂອງເຂົາມີຄວາມແຕກຕ່າງ. ເຂົາອາດຈະບໍ່ຍອມຮັບວ່າສິ່ງທີ່ເຂົາກຳລັງຊອກຫາຢູ່ນັ້ນເຂົາສາມາດພົບເຫັນໃນພຣະເຢຊູຄຣິດ.

ເຈແລະຈີນ ກຳລັງເລີ້ມຕົ້ນສຶກສາວ່າເປັນຫຍັງຄຣິສຕຽນຈຶ່ງເຊື່ອວ່າພຣະເຢຊູຄຣິດຊົງພຣະຊົນຢູ່ແລະຢາກຮູ້ວ່າດ້ວຍເຫດໃດການຄືນພຣະຊົນຂອງພຣະອົງຈຶ່ງມີຄວາມສຳຄັນຫຼາຍສຳລັບເຂົາ. ພວກເຂົາໄດ້ອ່ານພຣະຄັມພີກ່ຽວກັບການຊອກຫາພຣະເຢຊູໃນອຸບໂມງວ່າງເປົ່າຂອງພວກສາວົກແລະເຣື່ອງທີ່ອົງພຣະຜູ້ເປັນເຈົ້າໄດ້ປາກົດຕົວຕໍ່ໜ້າມາຣີອາ. ເຈແລະຈີນໄດ້ຕັ້ງຄຳຖາມ, “ພວກເຮົາຈະພົບເຫັນພຣະອົງໃນວັນໃດວັນນຶ່ງບໍ່?” ຫຼັງຈາກໄດ້ສຶກສາຫຼາຍຂຶ້ນແລະອະທິຖານ, ເຖິງຢ່າງໃດກໍຕາມ ການປະຕິເສດຂອງພວກເຂົາແລະການສົງສັຍໃນການສິ້ນພຣະຊົນແລະຄວາມເຊື່ອໃນການຄືນພຣະຊົນຂອງພຣະເຢຊູຄຣິດໄດ້ເກີດຂຶ້ນໃນຈິດໃຈຂອງພວກເຂົາ.

ພວກເຮົາສຸມໃຈໃສ່ສຶກສາໃນພຣະທັມໂຍຮັນ 20:1- 18 ໃນບົດນີ້ສາມາດຊ່ວຍໃຫ້ເຮົາຮູ້ວ່າພຣະເຢຊູຄຣິດຊົງພຣະຊົນຢູ່ແລະການຄືນພຣະຊົນຂອງພຣະອົງໄດ້ປ່ຽນແປງທຸກຢ່າງ. ບົດຮຽນນີ້ສາມາດຊ່ວຍເຮົາໃຫ້ເຂົ້າໃຈຫຼາຍຂຶ້ນໃນເຣື່ອງຄວາມໄວ້ວາງใจ.

ສຶກສາພຣະຄັມພີ

1. ຊອກຫາພຣະເຢຊູ:(ໂຍຮັນ. 20:1- 4)

ໂຍຮັນ ຜູ້ຂຽນພຣະທັມຄຳສອນຂອງພຣະເຢຊູຜູ້ທີສີ່, ໄດ້ຂຽນກ່ຽວກັບປະສົບການຂອງເພີ່ນໃນການເຫັນອຸບໂມງທີ່ວາງພຣະສົບຂອງພຣະເຢຊູຫວ້າງເປົ່າ ເຊັ່ນດຽວກັນກັບມາຣີອາໄທມັກດາລາແລະຊີໂມເປໂຕເຫັນ, ໂຍຮັນໄດ້ຂຽນບັນທຶກຄວາມຈິງຕາມທີ່ເພີ່ນ, ມາຣີອາ, ແລະເປໂຕເຫັນ ໃນທຸກວັນນີ້ ຕຸຣາການໃຫ້ຕັດສິນຂໍ້ເທັດຈິງດ້ວຍການໃຊ້ຫຼັກຖານແລະຜູ້ເຫັນເຫດການເປັນເຫດຜົນໃນການຕັດສິນຂອງເຂົາ. ໃນຂະນະທີ່ທ່ານສຶກສາການບັນທຶກປະວັດຕິສາດກ່ຽວກັບບຸກຄົນຜູ້ທີ່ເຫັນອຸບໂມງຝັງສົບຫວ້າງເປົ່າຂອງພຣະເຢຊູແລະມາຣີອາຜູ້ໄດ້ເຫັນແລະໄດ້ເວົ້າລົມກັບພຣະເຢຊູຄຣິດໃນມື້ນັ້ນ ພວກເຂົາທຸກຄົນໄດ້ເຫັນແລະເຊື່ອຢ່າງດຽວກັນວ່າພຣະອົງຊົງພຣະຊົນຢູ່.

ເຫດການທີ່ເກີດຂຶ້ນກ່ອນຮຸ່ງແຈ້ງຂອງວັນຖ້ວນສາມຫຼັງຈາກພຣະເຢຊູສິ້ນພຣະຊົນແລະວາງພຣະສົບໄວ້ໃນອຸບໂມງ. ມາຣີອາໄດ້ເລີ້ມອອກເດີນທາງ "ໃນເວລາເຊົ້າມືດຢູ່," ແຕ່ເຫດການໄດ້ເລີ້ມເກີດຂຶ້ນເມື່ອນາງມາຮອດອຸບໂມງ. ແມ່ນມາຣີອາຜູ້ທີ່ພຣະເຢຊູຂັບຜີອອກ(ລູກາ. 8:2) "ມາຣີອາຄົນທີ່ເປັນແມ່ຂອງຢາໂກໂບແລະນາງຊາໂลເມ" (ມາຣະໂກ. 16:1) ແລະ "ໂຢຮັນນາ" ພ້ອມກັບ "ພວກຜູ້ຍິງຄົນອື່ນໆ" (ລູກາ. 24:10) ທີ່ເດີນທາງໄປກັບນາງ.

ແນ່ນອນພວກຜູ້ຍິງເຫຼົ່ານີ້ຕ້ອງຕະລຶງຕົກໃຈເມື່ອເຫັນ "ກ້ອນຫີນກີ້ງອອກຈາກປາກອຸບໂມງ" (ໂຢຮັນ. 20:1) ດັ່ງນັ້ນ, ພວກຜູ້ຍິງເຫຼົ່ານັ້ນຈຶ່ງເຂົ້າໄປໃນອຸບໂມງຊອກຫາພຣະສົບຂອງພຣະເຢຊູບໍ່ເຫັນ!

ໃນທັນໃດມາຣີອາໄດ້ແລ່ນໄປຫາ "ຊີໂມນເປໂຕແລະສາວົກຄົນອື່ນໆ, ຜູ້ທີ່ພຣະເຢຊູຊົງຮັກ" ໂດຍສະເພາະໂຢຮັນ. ລາວອາດຈະແລ່ນກັບໄປເຢຣູຊາເລັມພຽງຄົນດຽວແລະບອກກັບພວກສາວົກດ້ວຍຄວາມຕື່ນຕົກໃຈ "ເຂົາໄດ້ເອົາພຣະສົບຂອງພຣະອາຈານອອກຈາກອຸບໂມງແລ້ວ ແລະພວກເຮົາກໍບໍ່ຮູ້ຈັກວ່າເຂົາເອົາໄປໄວ້ທີ່ໃດ!" ມາຣີອາແນ່ໃຈວ່າ "ພວກເຂົາ" ສັດຕຣູຂອງພຣະເຢຊູໄດ້ຂະໂມຍພຣະສົບຂອງພຣະອາຈານອອກໄປຈາກອຸບໂມງ. ເປໂຕແລະໂຢຮັນຈຶ່ງພາກັນ "ແລ່ນອອກໄປພ້ອມກັນ" ໂຢຮັນແລ່ນບໍ່ໄວ, "ເປໂຕກັບສາວົກຄົນອື່ນຈຶ່ງມາຮອດອຸບໂມງກ່ອນ."

ໃນເວລານີ້ພວກສາວົກແລະພວກຜູ້ຍິງເຫຼົ່ານັ້ນບໍ່ໄດ້ຄິດເລີຍວ່າພຣະເຢຊູຈະເປັນຄືນມາຈາກຕາຍ. ເຖິງຢ່າງໃດກໍຕາມ, ໃນອີກບໍ່ນານພວກເຂົາກໍຈະຮູ້ວ່າພຣະອົງໄດ້ເປັນຄືນມາຈາກຕາຍ. ພວກເຂົາໄດ້ຊອກຫາພຣະອົງໃນສະຖານທີ່ຕ່າງໆ ໃນອຸບໂມງ ແລະເໝືອນຊອກຫາຊາກສົບທຳມະດາ. ໃນທັນໃດການຊອກຫາພຣະເຢຊູຄຣິດຂອງພວກເຂົາກໍສິ້ນສຸດລົງ, ເມື່ອພຣະອົງໄດ້ປາກົດຕົວຢູ່ຕໍ່ໜ້າເຂົາ! ຄົນເຮົາໃນທຸກມື້ນີ້ກໍຍັງປະເຊີນກັບຄຳຖາມ, ພຣະເຢຊູຍັງຊົງພຣະຊົນຢູ່ບໍ່? ພວກເຂົາຕ້ອງການຄຳຕອບ ແລະພວກທ່ານເດ.

2. <u>ພິສູດຕາມຫຼັກຖານ:</u> (ໂຢຮັນ. 20:5- 10)

ເປໂຕແລະໂຢຮັນບໍ່ຮູ້ວ່າແມ່ນຫຍັງຈະຖືກເປີດເຜີຍໃນນາທີຕໍ່ໄປ ແຕ່ພວກເຂົາໄດ້ຄົ້ນພົບ. ໃນເວລາເຊົ້າມືດຕາເວັນກໍຍັງບໍ່ສ່ອງແສງແจ້ງເທື່ອ ໃນອຸບໂມງກໍເຫັນພໍມົວໆ ໂຢຮັນກົ້ມລົງເບິ່ງໃກ້ໆ "ເຫັນແຕ່ຜ້າປ່ານກອງຢູ່ທີ່ນັ້ນ" ຊຶ່ງແຕ່ກ່ອນໄດ້ພັນພຣະສົບຂອງພຣະເຢຊູ. ທີ່ມາຣີອາໄດ້ບອກນັ້ນແມ່ນຖືກຕ້ອງ: ພຣະສົບຂອງພຣະເຢຊູບໍ່ໄດ້ຢູ່ທີ່ນັ້ນ! ໂຢຮັນໄດ້ຢູ່ຫ່າງຈາກທາງເຂົ້າອຸບໂມງປະມານສອງກ້າວ, ຍືນຢູ່ທີ່ນັ້ນ, ແລະໄດ້ຄິດຢ່າງໜັກກ່ຽວກັບຄວາມໝາຍຂອງການຫາຍໄປຂອງພຣະສົບຂອງພຣະເຢຊູ.

ໃນທີ່ສຸດເປໂຕກໍໄປຮອດທັນແລະດ້ວຍຄວາມກ້າຫານ, ເພີ່ນໄດ້ຜ່ານກາຍໂຢຮັນ "ເຂົ້າໃນອຸບໂມງ." ເພີ່ນໄດ້ "ເຫັນຜ້າປ່ານກອງຢູ່ທີ່ນັ້ນ." ແຕ່ໜ້າແປກ ເປໂຕສັງເກດເຫັນວ່າ "ຜ້າປົກພຣະສົງນຂອງພຣະອົງ ບໍ່ໄດ້ກອງຢູ່ກັບຜ້າປ່ານພັນພຣະສົບ ແຕ່ໄດ້ພັບກອງໄວ້ຕ່າງຫາກ."

ເຫດການນີ້ເໝືອນກັບວ່າມີບາງຄົນເປັນຜູ້ເອົາຜ້າທີ່ພັນພຣະສົບຂອງພຣະເຢຊູອອກຈາກພຣະກາຍແລ້ວເອົາໄປວາງໄວ້ບ່ອນທີ່ເອົາພຣະສົບຂອງພຣະອົງປົງໄວ້. ເປໂຕບໍ່ໄດ້ສົງສັຍກ່ຽວກັບການຫາຍໄປຂອງພຣະສົບຂອງພຣະເຢຊູ ແລະຈຸດປະສົງຜ້າປ່ານພັນພຣະສົບຍັງຢູ່ທີ່ນັ້ນ. ຫຼັງຈາກນັ້ນໂຢຮັນໄດ້ "ເຂົ້າໄປໃນອຸບໂມງ," ໄດ້ສັງເກດເບິ່ງຜ້າປ່ານພັນພຣະສົບແລະຮູ້ວ່າບໍ່ມີຂະໂມຍຜູ້ໃດທີ່ຈະໃຊ້ເວລາແກ້ຜ້າພັນພຣະສົບອອກ ສິ່ງສຳຄັນອີກອັນນຶ່ງກໍຕ້ອງໃຊ້ເວລາທີ່ຈະພັບ "ຜ້າປົກພຣະສົງນຂອງພຣະອົງ," ແລະວາງໄວ້ຕ່າງຫາກ.

ມີໃຜຜູ້ນຶ່ງບໍທີ່ເຮັດສິ່ງນີ້ ແຕ່ແມ່ນຜູ້ໃດ? ບໍ່ແມ່ນທະຫານໂຣມັນ, ເພາະປີລາດໄດ້ບອກພວກທະຫານຍາມຈົ່ງເຝົ້າຍາມຢ່າງແຂງແຮງ ເຝົ້າເບິ່ງດ້ານໜ້າທາງເຂົ້າອຸບໂມງ(ມັດທາຍ.27: 65- 66). ບໍ່ແມ່ນຄຳສັ່ງຂອງພວກຜູ້ນຳສາສນາຢິວ, ເພື່ອຄວາມແນ່ໃຈເຂົາຢ້ານວ່າສາວົກຈະມາລັກເອົາພຣະສົບແລະເພື່ອຈະສ້າງເຣື່ອງຂຶ້ນມາວ່າເປັນການຄືນມາຈາກຕາຍຂອງພຣະເຢຊູຄຣິດ. ດັ່ງນັ້ນຈຶ່ງບໍ່ແມ່ນພວກສາວົກ ເພາະພວກເຂົາບໍ່ມີກຳລັງພໍທີ່ຈະຕໍ່ສູ້ກັບທະຫານໂຣມັນທີ່ເຝົ້າຍາມແລະການສິ້ນພຣະຊົນຂອງພຣະເຢຊູກໍບໍ່ໄດ້ເປັນການສ້າງຂຶ້ນເພື່ອຫຼອກລວງ.

ຄວາມຈິງເຫຼົ່ານີ້ ມີພຽງເຫດຜົນດຽວທີ່ສາມາດອະທິບາຍເຖິງເຣື່ອງອຸບໂມງຫວ້າງເປົ່າແລະຫຼັກຖານຄວາມກະຕືລືລົ້ນຂອງຜູ້ທີ່ເຊື່ອວ່າພຣະເຈົ້າໄດ້ດົນບັນດານໃຫ້ພຣະເຢຂູເປັນຄືນມາຈາກຕາຍ, ແລະການຈັດວາງຜ້າພັນຕົວແລະຜ້າປົກພຣະສຽນຂອງພຣະອົງ.

ການຄືນພຣະຊົນຂອງພຣະເຢຂູໄດ້ພິສູດໃຫ້ເຫັນການເປັນພຣະເຈົ້າຂອງພຣະອົງ, ຊຶ່ງພຣະເຢຂູຄຣິດມັກຈະເອີ່ຍເຖິງພຣະຣາຊະກິດຂອງພຣະອົງກ່ອນທີ່ພຣະອົງຈະໄປທີ່ໄມ້ກາງແຂນ. ພຣະເຈົ້າຊົງເປັນຜູ້ຢູ່ເບື້ອງຫຼັງຂອງການສຳແດງຄວາມເປັນພຣະເຈົ້າຂອງພຣະເຢຂູໂດຍການດົນບັນດານໃຫ້ພຣະອົງຊົງເປັນຄືນມາຈາກຕາຍ. ໂປໂລໄດ້ກ່າວວ່າ "ດ້ວຍຣິດອຳນາທີ່ຊົງດົນບັນດານໃຫ້ເປັນຄືນມາຈາກຕາຍຂອງພຣະບຸດຂອງພຣະເຈົ້ານັ້ນ ຈຶ່ງຊົງເປີດເຜີຍລັກສະນະຄວາມເປັນພຣະເຈົ້າຂອງພຣະອົງ" ໂຣມ. 1:4)

ໃນຂະນະເປທີ່ໂຕກຳລັງຄິດເຣື່ອງພຣະສົບຂອງພຣະເຢຂູທີ່ຫາຍໄປແລະຜ້າປ່ານທີ່ກອງຢູ່ໃນອຸບໂມງນັ້ນ ແນ່ນອນຕ້ອງມີເຈດຕະນາຢ່າງໃດຢ່າງນຶ່ງ, ໂຢຮັນໄດ້ເບິ່ງອີກເທື່ອນຶ່ງແລະໄດ້ "ເຊື່ອ" ເຫດການນີ້ໄດ້ກ່າວຢ້ຳຫຼາຍໆຄັ້ງໃນພຣະທັມໂຢຮັນ ມີພຽງແຕ່ໂຢຮັນເທົ່ານັ້ນທີ່ເຊື່ອຫຼັງຈາກເຫັນອຸບໂມງຫວ້າງເປົ່າ.

ເປໂຕແລະໂຢຮັນກໍໄປຈາກອຸບໂມງແລະ "ກັບບ້ານອີກຄັ້ງ"; ພວກເຂົາ "ຍັງບໍ່ທັນໄດ້ເຂົ້າໃຈພຣະຄຳທີ່ວ່າພຣະອົງຈະຕ້ອງເປັນຄືນມາຈາກຕາຍ" (ໃນພຣະທັມພາກພັນທະສັນຍາເດີມໄດ້ສອນເຖິງການເປັນຄືນມາຂອງພຣະຄຣິດ: ເພງສັຣເສີນ. 16:10- 11; 110:1,4; 118: 22-24; ເອຊາຢາ. 53: 11-12).

3. <u>ຕອບຮັບພຣະເຢຂູ:</u> (ໂຢຮັນ. 20: 11- 18)

ຫຼັງຈາກສາວົກສອງຄົນອອກໄປ, ມາຣີອາໄດ້ "ກົ້ມຫຼຽວໄປທາງອຸບໂມງ," ໃນທີ່ນັ້ນ "ນາງໄດ້ເຫັນເທວະດາສອງຕົນນັ່ງຢູ່ບອນທີ່ເຂົາວາງພຣະສົບຂອງພຣະເຢຂູ" ເທວະດາທັງສອງໄດ້ຖາມມາຣີອາ, "ນາງເອີຍ, ເຈົ້າຮ້ອງໄຫ້ເຮັດຫຽງ? "ລາວໄດ້ຕອບທັງຮ້ອງໄຫ້ວ່າ " ເຂົາໄດ້ເອົາສົບພຣະອາຈານຂອງຂ້ານ້ອຍໄປແລ້ວ... ແລະຂ້ານ້ອຍບໍ່ຮູ້ວ່າເຂົາເອົາໄປວາງໄວ້ບ່ອນໃດ." ລາວໄດ້ຊອກຫາຊາກສົບຄົນຕາຍ, ບໍ່ແມ່ນຊອກຫາພຣະເຈົ້າຜູ້ຊົງພຣະຊົນຢູ່. ລາວບໍ່ຮູ້ເລີຍວ່າພຽງອີກໜ້ອຍດຽວຄວາມທຸກໂສກອັນໃຫຽ່ຂອງນາງຈະກັບກາຍເປັນຄວາມຊົມຊື່ນຍິນດີ.

ບາງທີມາຣີອາອາດມີຄວາມຮູ້ສຶກວ່າມີໃຜຜູ້ນຶ່ງຢູ່ຄຽງຂ້າງລາວ. "ລາວຫັນຫຼັງກັບມາເຫັນພຣະເຢຂູຢືນຢູ່ທີ່ນັ້ນ" ແຕ່ຕອນນີ້ລາວຈື່ຈຳອົງພຣະເຢຂູຄຣິດບໍ່ໄດ້ ໃນຄວາມຄິດຂອງລາວແມ່ນສັບສົນ ມາຣີອາຄິດວ່າ "ພຣະອົງແມ່ນຄົນເຝົ້າສວນ." ແຕ່ເມື່ອພຣະເຢຂູເອີ້ນຊື່ຂອງລາວ, "ມາຣີອາ," ລາວກໍຈື່ພຣະອົງໄດ້ໃນທັນທີ! ບໍ່ແມ່ນຄົນເຝົ້າສວນເລີຍ, ແຕ່ ແມ່ນພຣະເຢຂູຄຣິດພຣະເຈົ້າຂອງລາວ ພຣະອົງບໍ່ໄດ້ຕາຍແຕ່ຍັງມີຊີວິດຢູ່! ມາຣີອາບໍ່ພຽງແຕ່ມີຄວາມຊົມຊື່ນຍິນດີເທົ່ານັ້ນ ລາວຍັງໄດ້ຮ້ອງອອກມາເປັນພາສາເຮັບເຣີວ່າ: "ຮັບໂບນີ" ແປວ່າ "ພຣະອາຈານ" ຊຶ່ງໂຢຮັນອະທິບາຍ ວ່າ, "ພຣະອາຈານ" (ຖ້າໃຫ້ຖືກຕາມຕົວອັກສອນແລ້ວແມ່ນ "ພຣະອາຈານຂອງຂ້ານ້ອຍ").

ປາກົດວ່າ, ມາຣີອາໄດ້ໜ່ວງດຶງພຣະເຢຂູຫຼືກົ້ມຂາບລົງທີ່ພຣະບາດຂອງພຣະເຢຂູ, ເພາະວ່າພຣະເຢຂູໄດ້ກ່າວກັບລາວຢ່າງອ່ອນໂຍນວ່າ. "ຢ່າຂູ່ໜ່ວງດຶງເຮົາ" ພຣະເຢຂູໄດ້ອະທິບາຍຕໍ່ໄປວ່າ: "ເພາະເຮົາຍັງບໍ່ໄດ້ຂຶ້ນເມືອຫາພຣະບິດາຂອງເຮົາເທື່ອ."

ພຣະເຢຂູໝາຍເຖິງຄວາມສຳພັນການດຳລົງຊີວິດທີ່ເຄີຍມີມາແຕ່ກ່ອນລະຫວ່າງພວກເຂົາກັບພຣະອົງນັ້ນຈະບໍ່ເໝືອນເດີມ. ເພາະອີກບໍ່ດົນພຣະອົງກໍຈະສະເດັດຂຶ້ນໄປສວັນ. ພຣະອົງຈະບໍ່ຢູ່ທີ່ນີ້ອີກຕໍ່ໄປພຣະອົງດຳລົງຊີວິດປະຈຳວັນນຳສາວົກໃນເວລານີ້ກໍດ້ວຍສະພາບຮ່າງກາຍທີ່ສາມາດເບິ່ງເຫັນໄດ້ ຄວາມສຳພັນຂອງຜູ້ເຊື່ອຄວນເປັນຄວາມຈິງອັນສົມບູນເກີນກ່ວາການເປັນເພື່ອນສນິດ ນັ້ນແມ່ນການມີສ່ວນຮ່ວມກັບພຣະອົງໂດຍທາງຄວາມເຊື່ອຜ່ານທາງຈິດວິນຍານ.

ຄວາມສຳພັນທີ່ໃກ້ຊິດສນິດແໜ້ນທີ່ພຣະເຢຊູກ່າວເຖິງແມ່ນ "ພຣະບິດາຂອງເຮົາແລະພຣະບິດາຂອງພວກທ່ານ.... ພຣະເຈົ້າຂອງເຮົາແລະພຣະເຈົ້າຂອງພວກທ່ານ ." **ພຣະເຢຊູແມ່ນບຸດຂອງພຣະເຈົ້າໂດຍກຳເນີດ;ຜູ້ທີ່ເຊື່ອແມ່ນລູກພຣະເຈົ້າໂດຍການທີ່ພຣະອົງຍອມຮັບເຂົາມາເປັນລູກຂອງພຣະອົງ.** ພຣະບິດາຂອງພຣະເຢຊູເປັນພຣະບິດາຂອງຜູ້ທີ່ເຊື່ອທຸກຄົນ. ມາຣີອາໄດ້ "ໄປ" ແລະ "ບອກ" ກັບ "ອ້າຍເອື້ອຍນ້ອງ" ຂອງພຣະອົງວ່າພຣະອົງຈະ "ສະເດັດຂຶ້ນໄປ" ຫາພຣະບິດາໃນຟ້າສວັນ. ມາຣີອາເຊື່ອຟັງແລະປະຕິບັດຕາມອົງພຣະຜູ້ເປັນເຈົ້າທຸກຢ່າງ ລາວໄດ້ອອກໄປຈາກພຣະອົງ, ອອກໄປຈາກອຸບໂມງຝັງສົບດ້ວຍຄວາມຊົມຊື່ນຍິນດີ ໄປແລະບອກພວກສາວົກ, "ຂ້ອຍໄດ້ພົບເຫັນອົງພຣະຜູ້ເປັນເຈົ້າ!" ຕໍ່ມາລາວໄດ້ບອກກັບພວກເຂົາທຸກໆສິ່ງທີ່ "ພຣະອົງຊົງກ່າວແກ່ລາວ."

ທ່ານໄດ້ "ເຫັນ" ພຣະເຢຊູເປັນຂຶ້ນມາຈາກຕາຍບໍ່? ຖ້າບໍ່ເຫັນ, ໃຫ້ຖາມຄຣູສອນພຣະຄັມພີວັນອາທິດອະທິບາຍເຮັດວິທີໃດຈຶ່ງຈະ "ເຫັນ" ພຣະອົງ. ຖ້າທ່ານເຫັນ, ຈົ່ງຈື່ໄວ້ຢ່າງນີ້ເໝືອນຢ່າງມາຣີອາ, ຜູ້ເຊື່ອໃນທຸກວັນນີ້ໄດ້ອອກໄປ ແລະບອກກັບຄົນອື່ນໆເຖິງການຄືນພຣະຊົນຂອງອົງພຣະຜູ້ເປັນເຈົ້າ.

ບົດຮຽນແຫ່ງຊີວິດ.

ພຣະເຢຊູໄດ້ຖາມເຮົາຢູ່ເລື້ອຍໆໃຫ້ສອນຄວາມຈິງເຣື່ອງພຣະວິນຍານແລະທ້າທາຍຕໍ່ຂໍ້ແກ້ຕົວຂອງສາສນາ. ບາງທີຄຳຖາມທີ່ສຳຄັນໃນບົດຮຽນວັນອາທິດໃນທ້າບົດທີ່ຜ່ານມາທີ່ເຮົາໄດ້ຮຽນ "ຄຳຖາມທີ່ພຣະເຢຊູຖາມ" ນີ້ແມ່ນຄຳຖາມສຸດທ້າຍ "ທ່ານຊອກຫາຜູ້ໃດ?" (ໂຍຮັນ. 20:15) ເພາະວ່າ, ໃນຕອນເຊົ້າຂອງວັນຄືນພຣະຊົນ ພຣະເຢຊູໄດ້ຖາມຄຳຖາມນີ້ກັບມາຣີອາຜູ້ທີ່ຊອກຫາສົບຂອງພຣະເຢຊູ. ຄຳຕອບທີ່ພຣະເຢຊູຕ້ອງການໄດ້ຍິນຈາກທ່ານໃນທຸກວັນນີ້ແມ່ນ, "ຂ້ານ້ອຍຊອກຫາພຣະເຢຊູຄຣິດ ພຣະເຈົ້າຜູ້ຊົງພຣະຊົນຢູ່."

ຈົ່ງທວນຄືນກຸນແຈແຫ່ງຄວາມຈິງທີ່ທ່ານຄົ້ນພົບໃນບົດຮຽນນີ້ທີ່ກ່ຽວຂ້ອງກັບວັນຄືນພຣະຊົນ. ຈົ່ງອ່ານແລະສຸມໃຈໃສ່ໃນແຕ່ລະຂໍ້ຕໍ່ລົງໄປນີ້.

- ຄິດເບິ່ງຄວາມໝາຍທີ່ເລິກເຊິ່ງຂອງອຸບໂມງທີ່ຫວ່າງເປົ່າຂອງພຣະເຢຊູ.
  ການຄືນພຣະຊົນໃຫ້ຄວາມຫວັງໃນພຣະເຢຊູ ທີ່ຢູ່ເໜືອການມີຊີວິດຢູ່ແລະຄວາມຕາຍ.
- ໃນເວລາມີບັນຫາ, ເກີດໂອລະທົນໃນຊີວິດ ຄົນເຮົາບໍ່ຮູ້ວ່າອັນໃດຄືສິ່ງທີ່ຕົນຊອກຫາ. ເຮົາຜູ້ທີ່ເຊື່ອສາມາດຊ່ວຍເຂົາເຈົ້າຊອກຫາສິ່ງທີ່ເຂົາເຈົ້າຕ້ອງການໃນອົງພຣະເຢຊູຄຣິດ".
- ໃນພຣະຄັມພີມີຫຼັກຖານອັນແຈ່ມແຈ້ງກ່ຽວກັບການຄືນພຣະຊົນຂອງພຣະເຢຊູ.
- ຊອກຫາຂໍ້ພຣະຄັມພີ, ໂດຍສະເພາະແມ່ນພຣະທັມມັດທາຍ, ມາຣາໂກ, ລູກາ, ແລະໂຍຮັນ, ເປັຍຫຼັກຖານແລະຢືນຢັນການຄືນພຣະຊົນຂອງພຣະເຢຊູ.
- ພວກເຮົາບໍ່ຈຳເປັນທີ່ຈະເຂົ້າໃຈທຸກສິ່ງກ່ຽວກັບພຣະເຢຊູກ່ອນທີ່ເຮົາຈະເຊື່ອໃນພຣະອົງ.
- ພວກເຮົາຕ້ອງແບ່ງປັນຂ່າວດີກ່ຽວກັບການຄືນພຣະຊົນໃຫ້ກັບຄົນອື່ນ.
- ພວກເຮົາສາມາດຕອບຄຳເຊື້ອເຊີນຂອງພຣະເຢຊູເພື່ອຈະເຊື່ອໃນພຣະອົງ. ພຣະເຢຊູໄດ້ຖາມເຮົາທຸກຄົນ, "ຜູ້ໃດ ຫຼືອັນໃດ ທີ່ທ່ານກຳລັງຊອກຫາ?" ແລະ "ທ່ານຮູ້ຈັກບໍ່ວ່າເຮົານີ້ລະແມ່ນຜູ້ທີ່ທ່ານກຳລັງຊອກຫາຢູ່?"

ອຸປຖັມໂດຍລາວຊາວເທີນບັບຕິດສັມພັນ www.lsbf.org ແປໂດຍ VR.

ບົດຮຽນໂຮງຮຽນວັນອາທິດ
ວັນອາທິດທີ 7 ເມສາ 2013 (4-7-2013)

ເອີ້ນໃຫ້ເປັນຜູ້ບໍຣິສຸດ

ຂໍ້ພຣະຄັມພີໃນບົດຮຽນນີ້: ອິບພະຍິບ 19:1-6,10-14, 16-19

ຄຳຖາມຊີວິດ: ບົດຮຽນນີ້ຈະຊ່ວຍທ່ານໃຫ້ຮູ້ຄຸນຄ່າຂອງຄວາມບໍຣິສຸດໃນຊີວິດປະຈຳວັນຂອງ ທ່ານ ຍ້ອນພລັງຂອງພຣະເຈົ້າພວກເຮົາຈຶ່ງເຮັດສິ່ງນີ້ໄດ້.

ພຣະຄັມພີແຫ່ງຄວາມຈິງ: ບົດຮຽນນີ້ແມ່ນສອນເຖິງຄວາມຮັບຜິດຊອບຂອງການເປັນຜູ້ບໍຣິສຸດໃຫ້ສົມກັບເປັນ ປະຊາກອນຂອງພຣະເຈົ້າ.

ຜົນສະທ້ອນຕໍ່ຊີວິດ: ຕາມສັງຄົມເຮົາໃນທຸກວັນນີ້ມັກຫົວຂວັນຕໍ່ການເປັນຜູ້ບໍຣິສຸດ ແລະກໍບໍ່ຢາກມີຊີວິດ ຢ່າງນັ້ນ. ເຖິງແມ່ນໃນຄຣິສຕະຈັກກໍຕາມມີຫລາຍຄົນຄິດວ່າການເປັນຜູ້ບໍຣິສຸດນັ້ນ ບໍ່ໝາຍເຖິງພວກເຂົາເຈົ້າເອງ, ແຕ່ມອບໃຫ້ພວກອາຊີບ ຫລືຄຣິສຕຽນຜູ້ເກົ່າງກ້າ. ແຕ່ ເຫັນວ່າພຣະຄັມພີຂອງພຣະເຈົ້າມີພຣະປະສົງຢາກໃຫ້ທຸກຄົນກາຍເປັນຜູ້ບໍຣິສຸດ.

ຄຳຖາມໃນຊີວິດ: ພຣະເຈົ້າຢາກໃຫ້ຄົນຂອງພຣະອົງເປັນຄົນຊະນິດໃດ?

ບົດນຳ

ການຊອກຫາຄວາມບໍຣິສຸດນັ້ນບໍ່ແມ່ນທາງໄປຫາພຣະເຈົ້າ-ແຕ່ພຣະເຈົ້າເປັນທາງໄປຫາຄວາມບໍຣິສຸດ. ອີງຕາມ ທຳນຽມຂອງພວກເຮົາແລ້ວເຫັນວ່າຄົນເຮົາມັກເຮັດຄວາມຜິດໃນສອງຢ່າງ: ນຶ່ງ, ບາງຄົນຄິດວ່າຄວາມບໍຣິສຸດນັ້ນນຳ ໄປເຖິງພຣະເຈົ້າ, ດັ່ງນັ້ນ, ພວກເຮົາຈຶ່ງມີຄວາມສັມພັນກັບພຣະເຈົ້າໂດຍມີຊີວິດຢູ່ຢ່າງບໍຣິສຸດ. ຖ້າເຮັດຢ່າງນີ້ກໍເປັນ ເໝືອນການຈັບເອົາລົມ. ເມື່ອເຮົາຄິດວ່າຊີວິດໃນດ້ານນີ້ດີແລ້ວ ແລະກໍເຫັນວ່າອີກດ້ານນຶ່ງຜິດພາດໄປ. ສອງ, ບາງ ຄົນຄິດວ່າພວກເຂົາສາມາດເຂົ້າຫາພຣະເຈົ້າໄດ້ໂດຍພຣະຄຸນຂອງພຣະອົງເທົ່ານັ້ນ ແລະຕໍ່ມາກໍມີຊີວິດທີ່ລາມົກໃນ ຕອນປາຍ. ຄວາມຈິງນັ້ນແມ່ນ ເມື່ອພວກເຂົາສແວງຫາພຣະເຈົ້າໂດຍຄວາມຕັ້ງໃຈແລ້ວ ພວກເຂົາກໍພະຍາຍາມມີຊີ ວິດຢູ່ໃຫ້ບໍຣິສຸດ.

ສາມເດືອນຫລັງຈາກໂມເຊໄດ້ນຳພາພວກອິສຣາເອັນອອກຈາກປະເທດເອຢິບ ພວກເຂົາໄດ້ຢຸດພັກທີ່ພູເຂົາຊີນາ ອີ ຊຶ່ງເປັນບ່ອນພຣະເຈົ້າເອີ້ນໂມເຊໃຫ້ສອນປະຊາກອນຂອງພຣະອົງໃຫ້ດຳລົງຊີວິດບໍຣິສຸດ. **ເພາະວ່າພຣະເຈົ້າເປັນ ອົງບໍຣິສຸແລະຊາວອິສຣາເອັນເປັນຕົວແທນຂອງພຣະເຈົ້າຕໍ່ຊາວໂລກ, ພວກເຂົາຈຳເປັນຕ້ອງມີຊີວິດທີ່ບໍຣິສຸດ.**

1. <u>ປະຊາກອນຂອງພຣະເຈົ້າຕ້ອງເຊື່ອຟັງພຣະອົງ</u>: (ອົບພະຍົບ 19:1-6)

ພຣະຄູນຂອງພຣະເຈົ້າທີ່ມີຕໍ່ພວກເຮົານັ້ນບໍ່ເຮັດໃຫ້ພວກເຮົາມີຂໍ້ແກ້ຕົວໃນການເປັນຄົນບໍລິສຸດຢ່າງເຊື່ອຟັງ. ກ່ອນພຣະເຈົ້າຊົງເອີ້ນໃຫ້ໂມເຊໄປປາກົດຕົວຕໍ່ພຣະພັກພຣະອົງທີ່ພູເຂົາ, ພຣະອົງເຈົ້າໄດ້ເລືອກເອົາພວກອິສຣາເອັນ ແລ້ວໃຫ້ເປັນປະຊາກອນຂອງພຣະອົງ. "ມັນເປັນເວລາສາມເດືອນແລ້ວທີ່ພວກເຂົາໄດ້ອອກຈາກປະເທດເອຢິບ" ແລະ ຕອນນີ້ພວກເຂົາມີເສຣີພາບໃນຖິ່ນກັນດານ ພວກເຂົາໄດ້ເດີນທາງເປັນເວລານຶ່ງວັນຈາກ ເຣຟີດິມ ໄປຍັງຖິ່ນກັນດານ ຂອງພູຊີນາອີເພື່ອໄປຕັ້ງຄ້າຍໃນທີ່ນັ້ນ ພຣະເຈົ້າມີແຜນການຈະໃຊ້ເວລານີ້ສິດສອນແລະສ້າງຄວາມສັມພັນກັບພວກ ເຂົາໃນອະນາຄົດ. ແຜນການນັ້ນປະກອບດ້ວຍສິດທິແລະຄວາມຮັບຜິດຊອບ. ພວກເຂົາຈະກາຍເປັນຄົນທີ່ພຣະເຈົ້າ ຊົງເລືອກເອົາໄວ້ຕ່າງຫາກ ແລະພວກເຂົາຈະເປັນຜູ້ຕ່າງໜ້າພຣະອົງເຈົ້າອີກຕໍ່ຊົນຊາດອື່ນໆໃນໂລກ.

ຢູ່ເທິງພູເຂົາພຣະເຈົ້າໄດ້ເຕືອນໃຫ້ໂມເຊຮູ້ວ່າພຣະເຈົ້າຈະທຳງານໃນນາມຂອງພວກອິສຣາເອັນ. ພຣະອົງຈະເຮັດ ໃຫ້ພວກເອຢິບໄດ້ຮັບພັຍຮ້າຍຕ່າງໆຈົນພວກເຂົາອອກຈາກປະເທດເອຢິບໄປ. ພຣະອົງໄດ້ບອກໂມຊາວ່າພຣະອົງ ຈະອູ້ມພວກເຂົາເໝືອນນົກອິນຊີ ແລະເອົາພວກເຂົາໄປຫາພຣະອົງ. ແມ່ນົກອິນຊີຍ່ອມເອົາລູກນ້ອຍຂອງຕົນເອງໄປ ໄວ້ໃນທີ່ປອດພັຍ (ອພ 32:11). ພຣະເຈົ້າຮັກສາພວກເຂົາເວລາຂ້າມນ້ຳທະເລແດງ ແລະເດີນທາງຜ່ານໄປເຖິງພູເຂົາ ຊີນາອີ. ຊາວອິສຣາເອັນໄດ້ເຫັນພຣະຫັດຂອງພຣະເຈົ້າຊ່ວຍແລະພວກເຂົາກໍຈະເພິ່ງພຣະອົງໃນອະນາຄົດຕໍ່ໄປ.

ຣາຊອານາຈັກຂອງປະໂຣຫິດ

ພຣະເຈົ້າໄດ້ສັ່ງໃຫ້ໂມເຊສອນປະຊາຊົນວ່າພຣະເຈົ້າໄດ້ເລືອກພວກເຂົາໃຫ້ເປັນ "ອານາຈັກປະໂຣຫິດ" (ອພ. 19: 6) ຖ້າພວກເຂົາເອົາໃຈໃສ່ໃນຄຳສອນ ແລະມີຊີວິດຢູ່ກັບຄຳສັນຍາຂອງພຣະອົງ. ໃນພຣະຄັມພີ ໃໝ່ເປໂຕໄດ້ກ່າວວ່າ ຜູ້ທີ່ເຊື່ອໃນພຣະເຈົ້າເປັນ "ປະໂຣຫິດຫລວງ" (1 ປຕ 2:9). ທັງສອງປຶ້ມຄືພຣະຄັມພີເດີມແລະພຣະຄັມພີໃໝ່ໄດ້ສອນ ເຖິງສິ່ງທີ່ພຣະເຈົ້າມີໄວ້ສຳລັບປະຊາກອນຂອງພຣະອົງຄືໃຫ້ເປັນຜູ້ຮັບໃຊ້.

ມັນມີຄວາມໝາຍແນວໃດທີ່ປະຊາກອນຂອງພຣະອົງໄດ້ຖືກເລືອກເອົາໄວ້ໃຫ້ເປັນຣາຊອານາຈັກປະໂຣຫິດ? ອະ ທິບາຍສັ້ນໄດ້ວ່າ, 1. ທຸກຄົນຜູ້ທີ່ເຊື່ອເປັນປະໂຣຫິດສາມາດເຂົ້າໄປຫາພຣະເຈົ້າໄດ້; 2. ເປັນປະໂຣຫິດສ່ວນຕົວແລະ ສ່ວນຮວມແລ້ວກາຍເປັນຕົວແທນຂອງພຣະເຈົ້າຕໍ່ຜູ້ປາຖນາຢາກໄດ້ຍິນພຣະສຸຣະສຽງຈາກພຣະເຈົ້າ. 3. ປະໂຣຫິດ ເປັນຜູ້ຈັດຄົນເຂົ້າຫາພຣະເຈົ້າເພື່ອສາລະພາບຜິດບາບ, ສາມັກຄີທັມ, ແລະຮັບເອົາການສິດສອນຕ່າງໆ.

ພຣະເຈົ້າບອກໃຫ້ໂມເຊແລະປະຊາກອນທັງຫລາຍຮັກສາຂໍ້ສັນຍາຕໍ່ພຣະອົງ. ພຣະອົງຕຽມຈະມອບພຣະບັນ ຍັດສິບປະການໃຫ້ພວກເຂົາ (ອພ 20:1-17) ນັ້ນເພື່ອສອນພວກເຂົາໃຫ້ຮູ້ຈັກວິທີດຳລົງຊີວິດ. ພຣະອົງປະທານພຣະ ບັນຍັດສິບປະການໃຫ້ເພື່ອພວກເຂົາຈະໄດ້ຮັບປໂຍດໂດຍຖືຮັກສາຂໍ້ບັນຍັດນັ້ນ. ພຣະອົງຮ້ອງພວກອິສຣາເອັນວ່າ, "ກັມມະສິດຂອງເຮົາ"; ຜູ້ຂຽນເພງສັຣເສີນກ່າວວ່າພຣະເຈົ້າໄດ້ເຮັດໃຫ້ພວກອິສຣາເອັນຢູ່ພາຍໃຕ້ການເປັນ "ກັມມະ ສິດ" ຂອງພຣະອົງ (ພສສ. 135:4).

ຈາກຫລາຍຊາດໃນໂລກພຣະເຈົ້າໄດ້ເລືອກເອົາພວກອິສຣາເອັນ ແຕ່ພຣະອົງບໍ່ໄດ້ຖືວ່າພວກເຂົາດີກວ່າຊາດ ອື່ນໆ ພຣະອົງຕ້ອງການໃຫ້ພວກອິສຣາເອັນເປັນຕົວແທນຂອງພຣະອົງຕໍ່ຊາດອື່ນໆ. ພວກເຂົາໄດ້ຮັບໃຊ້ເປັນ "ຣາຊ ອານາຈັກປະໂຣຫິດ ແລະເປັນຊາດບໍລິສຸດ"

ອິສຣາເອັນກາຍເປັນຕົວແທນໃນຖານະເປັນປະໂຣຫິດຢ່າງໜ້ອຍສີ່ທາງ: 1. ພວກເຂົາໄດ້ຮັບໃຊ້ເປັນຕົວຢ່າງຂອງ ຜູ້ບໍລິສຸດ. ຖ້າວ່າປະຊາກອນຂອງພຣະເຈົ້າບໍ່ດຳລົງຊີວິດບໍລິສຸດແລ້ວຄຳຖາມມີຢູ່ວ່າໃຜຈະເຫັນຄວາມບໍລິສຸດຂອງ ພຣະເຈົ້າ. 2. ພວກເຂົາຈະປະກາດຄວາມຈິງຂອງພຣະເຈົ້າຕໍ່ທຸກຊາດ ແລະເຊີນເອົາຊາດອື່ນໆ ເຂົ້າຮ່ວມກັບພຣະ

ເຈົ້າ. ການມີຊີວິດສົກກະປົກນັ້ນສາມາດລຶບລ້າງຂ່າວດີທີ່ພວກເຂົາປະກາດນັ້ນ. 3. ພວກເຂົາໃຫ້ຄົນເຂົ້າມາຫາພຣະເຈົ້າໂດຍການຖວາຍບູຊາ (ສັດແລະການປະພຶດ) ທີ່ນຳມະນຸດຜູ້ມີຄວາມຜິດບາບເຂົ້າເຖິງພຣະເຈົ້າ. 4. ພວກອິສຣາເອັນເປັນຜູ້ຮັກສາພຣະທັມຂອງພຣະເຈົ້າເພື່ອຜູ້ເກີດໃໝ່ໃຫຍ່ລຸນຈະຮູ້ຈັກທິນທາງຂອງພຣະເຈົ້າໄດ້.

ຜູ້ເຊື່ອໃນທຸກວັນນີ້ຖືວ່າຕົນເອງເປັນພາກສ່ວນຂອງປະໂຣຫິດຂອງພຣະເຈົ້າ. ພວກເຮົາຄວນຈຳໄວ້ວ່າພຣະຄຸນຂອງພຣະເຈົ້ານັ້ນບໍ່ເຮັດໃຫ້ພວກເຮົາມີຂໍ້ແກ້ຕົວຈາກຄວາມເຊື່ອຟັງເຖິງຄວາມບໍຣິສຸດ, ສິ່ງນີ້ເຮັດໃຫ້ພວກເຮົາກາຍເປັນຜູ້ເຊື່ອຟັງພຣະເຈົ້າຢ່າງຕາຍໃຈ.

2. <u>ປະຊາກອນຂອງພຣະເຈົ້າຕຽມຕົວເພື່ອພົບກັບພຣະອົງ</u>: (ອົບພະຍົບ 19:10-14).

ກ່ອນພຣະທັມບົດນີ້ພຣະເຈົ້າໄດ້ບອກກັບໂມເຊວ່າພຣະອົງຈະມາຫາ "ໃນເມກໜາ" ເພື່ອປະຊາຊົນຈະໄດ້ຍິນພຣະສຸຣະສຽງການສົນທະນາຂອງພຣະອົງ. (ອພ 19:9). ແຕ່ກ່ອນພວກເຂົາຈະໄດ້ພົບກັບພຣະອົງຈຳເປັນຕ້ອງມີການຈັດຕຽມກ່ອນ. ພວກເຂົາຕ້ອງຕຽມສາມຢ່າງ. 1. ພວກເຂົາຕ້ອງຊັກເຄື່ອງໃຫ້ສະອາດ ຄຳວ່າ "ຊຳຣະ" ໝາຍຄວາມວ່າແຍກຕົວເອງອອກຈາກໂລກ. ຢ່າເຂົ້າໃຈຜິດເລີຍພຣະເຈົ້າບໍ່ໄດ້ຖືເອົາເຣື່ອງສິ້ງເສື້ອເປື້ອນ ແຕ່ພຣະອົງເປັນຫ່ວງບໍ່ຢາກໃຫ້ຄົນປມາດບ່ອນນະມັສການ. ການຊຳຣະຢ່າງນີ້ຕ້ອງໃຊ້ເວລາສອງວັນເຕັມເພາະມີຄົນປະມານ 2.5 ລ້ານຄົນ ແລະນ້ຳກຳຫາຍຍາກ. 2. ຝູງຊົນຕ້ອງຕຽມຕົວນັ້ນຄືໃຫ້ນັບຖືຂອບເຂດທີ່ພຣະເຈົ້າຕັ້ງຂຶ້ນ. ພຣະເຈົ້າບອກໃຫ້ໂມເຊໃຫ້ຕັ້ງເຂດແດນຕາມພູເພື່ອບໍ່ໃຫ້ຜູ້ນຶ່ງຜູ້ໃດໄປໃກ້. ແຕ່ເມື່ອປະຊາຊົນໄດ້ຍິນສຽງແກດັງຂຶ້ນພວກເຂົາສາມາດເຂົ້າໄປຕີນພູໄດ້. ໃນສມັຍນີ້ພຣະເຈົ້າກໍມີເຂດຄືໃຫ້ຮູ້ຈັກອັນໃດຖືກແລະອັນໃດຜິດ. ພຣະເຈົ້າມີພຣະປະສົງຢາກໃຫ້ປະຊາກອນຂອງພຣະອົງມີຊີວິດບໍຣິສຸດ. ໂທດຂອງຜູ້ເຮັດຜິດກົດນີ້ຄື "ຖືກແກວ່ງກ້ອນຫີນໃສ່ ແລະຍິງດ້ວຍໜ້າທະນູ," ນັ້ນແມ່ນການລົງໂທດໜັກໃນເວລານັ້ນ.

ໃນທີ່ສຸດປະຊາຊົນໄດ້ຕຽມຕົວໄປພົບກັບພຣະເຈົ້າໂດຍບໍ່ມີການສົມສູ່ທາງເພດ. ເຫັນວ່າພຣະເຈົ້າບໍ່ໄດ້ເປັນຫ່ວງໃນເຣື່ອງນີ້ເໝືອນກັບເຣື່ອງເຄື່ອງຂອງເປື້ອນ. ແຕ່ພຣະເຈົ້າປະນາມເມື່ອຄົນບໍ່ໃຫ້ກຽດໃນບ່ອນນະມັສການເພາະເປັນບ່ອນບໍຣິສຸດ. ພຣະເຈົ້າຕ້ອງການໃຫ້ປະຊາຊົນເຂົ້າໃຈເຖິງຄວາມສຳຄັນໃນການປາ ກົດຕົວຕໍ່ພຣະພັກຂອງພຣະອົງ ບໍ່ໃຫ້ຖືວ່າເປັນຂອງທັມມະດາ ບໍ່ໃຫ້ຖືວ່າບໍ່ສຳຄັນ.

3. <u>ປະຊາກອນຂອງພຣະເຈົ້າປະສົບກັບການສະຖິດຢູ່ນຳຂອງພຣະອົງ</u>: (ອົບພະຍົບ 19:16-19)

ເພາະວ່າພຣະເຈົ້າໄດ້ເອີ້ນໃຫ້ປະຊາກອນໄປພົບແລະພວກເຂົາຕ້ອງຊຳຣະຕົນເອງໃຫ້ສະອາດເສັ້ງກ່ອນ. ພຣະເຈົ້າໄດ້ຕຽມພວກເຂົາໃນວິທີທາງອັນຍິ່ງໃຫຍ່ຂອງພຣະອົງໂດຍປາກົດຕົວໃຫ້ພວກເຮົາເຫັນ.

ພວກອິສຣາເອັນໄດ້ປະສົບກັບພຣະພັກຂອງພຣະເຈົ້າເທິງພູເຂົາ "ເປັນໄຟລົງມາ." ທີແລກພວກເຂົາໄດ້ເຫັນ "ຟ້າຮ້ອງແລະຟ້າແມບ" ສິ່ງນັ້ນໄດ້ເກີດຂຶ້ນກັບປະຊາກອນ. "ເມກໜາ" ຫຸ້ມດ້ວຍໄຟ ເພາະພຣະພັກຂອງພຣະເຈົ້າປົກຄຸມໝົດໜ່ວຍພູ. ພູນັ້ນກໍສະທ້ານຫວັ່ນໄຫວແລະມີສຽງແກດັງຈາກສວັນ. ແນ່ນອນນີ້ບໍ່ແມ່ນວັນທັມມະດາໃນຊີວິດຂອງພວກອິສຣາເອັນ ແຕ່ເຫັນວ່າພຣະເຈົ້າໄດ້ຕຽມພວກເຂົາໄວ້ສຳລັບວັນນີ້.

ພຣະລັກສະນະຂອງພຣະເຈົ້າບໍ່ໄດ້ປ່ຽນແປງເລີຍ. ພຣະອົງຕ້ອງການໃຫ້ຜູ້ຢາກເຂົ້າເຝົ້າພຣະອົງ ນັ້ນເປັນຄົນບໍຣິສຸດ ແລະວັນນີ້ພຣະອົງກໍຍັງມີພຣະປະສົງເໝືອນເດີມ. ການເຂົ້າຫາພຣະເຈົ້າໂດຍທີ່ບໍ່ຖືວ່າສຳຄັນນັ້ນເຮັດ
· ໃຫ້ຄວາມສັກສິດບໍ່ມີຄ່າຈົນເປັນຜົນສະທ້ອນໄປເຖິງຊີວິດປະຈຳວັນກໍເປັນໄດ້.

ບົດຮຽນໃນຊີວິດ

ບໍ່ມີຈັກຄົນໃນພວກເຮົາເປັນຄົນບໍຣິສຸດ, ແຕ່ພວກເຮົາຖືກເອີ້ນໃຫ້ເປັນຄົນບໍຣິສຸດ. ສິ່ງນີ້ເກີດຂຶ້ນໄດ້ເວລາພວກເຮົາຍອມຕໍ່ອົງພຣະເຢຊູຄຣິດ ແລະຮັບເອົາຊີວິດອັນຊອບທັມທີ່ມີຢູ່ໃນພຣະອົງ. ເມື່ອພວກເຮົາໄດ້ຂອງພຣະຣາຊທານນັ້ນແລ້ວພວກເຮົາມີຈິດໃຈຢາກເປັນຄົນບໍຣິສຸດເພາະພວກເຮົາຕ້ອງການໃຫ້ພຣະຜູ້ຊ່ວຍໃຫ້ພົ້ນພໍພຣະທັຍ. ການປະພຶດໃນການເປັນຄົນບໍຣິສຸດນັ້ນບໍ່ແມ່ນການສ້າງຄວາມສັມພັນອັນໃດກັບພຣະເຈົ້າເພາະພວກທັງຫລາຍຍັງເປັນຄົນຜິດບາບແລະຂາດຈາກພຣະຣັສມີຂອງພຣະເຈົ້າ (ໂຣມ 3:23). ຄວາມສັມພັນກັບພຣະເຈົ້າໄດ້ເກີດຂຶ້ນເມື່ອພວກເຮົາເຊື່ອຟັງພຣະຄຣິດເທົ່ານັ້ນ (ໂຣມ 10:9-10), ພຣະເຈົ້າມີພຣະປະສົງໃຫ້ປະຊາກອນຂອງພຣະອົງມີຊີວິດບໍຣິສຸດ. ແນ່ນອນພວກເຂົາໄດ້ຕົກອອກໄປຈາກຄວາມບໍຣິສຸດບາງຄັ້ງຄາວ, ແຕ່ພວກເຮົາພະຍາຍາມສແວງຫາຄວາມບໍຣິສຸດໃນການເດີນໄປກັບພຣະເຈົ້າ.

ໃນຊີວິດຂອງທ່ານນັ້ນເຫັນວ່າພຣະບັນຍັດຂໍ້ໃດເຮັດຍາກທີ່ສຸດ? ທ່ານຈະຕຽມຕົວໃນການອ້ອນວອນອະທິຖານແນວໃດ, ຮຽນພຣະຄັມພີແນວໃດ, ແລະເຂົ້ານະມັສການແນວໃດ?

ໃນບົດຮຽນວັນນີ້ຈະເອົາປະກອບໃຊ້ໃນຊີວິດແນວໃດ?

- ນຶ່ງ, ພວກເຮົາຈຳເປັນຕ້ອງເຫັນຄຸນຄ່າແລະສິດພິເສດໃນການເຂົ້າໄປຢູ່ຕໍ່ພຣະພັກຂອງພຣະເຈົ້າ. ເດັດຂາດພວກເຮົາບໍ່ຄວນຖືກວ່າການສິ້ນພຣະຊົນຂອງອົງພຣະເຢຊູນັ້ນບໍ່ມີຄ່າ ແຕ່ໃຫ້ຖືວ່າການສິ້ນພຣະຊົນນັ້ນໄດ້ເຮັດພວກເຮົາເຂົ້າໄປຫາພຣະເຈົ້າຜູ້ເປັນອົງບໍຣິສຸດ.
- ສອງ, ພວກເຮົາຄວນມີຈິດໃຈຢາກເຊື່ອຟັງພຣະເຈົ້າຍ້ອນສິ່ງທີ່ອົງພຣະເຢຊູໄດ້ເຮັດທີ່ໄມ້ກາງແຂນ. ກ່ອນທີ່ພຣະເຈົ້າຈະປະທານພຣະບັດຍັດສິບປະການ ພຣະອົງໄດ້ໃຫ້ເຫດຜົນຕໍ່ປະຊາກອນຂອງພຣະອົງແລ້ວເພື່ອໃຫ້ພວກເຂົາປະຕິບັດຕາມ. ພຣະເຈົ້າໄດ້ເລືອກເອົາພວກອິສຣາເອັນແລະນຳພວກເຂົາອອກຈາກການເປັນທາດຂອງເອຢິບ. ພຣະອົງໄດ້ອູ້ມພວກເຂົາເໝືອນກັບນົກອິນຊີເຮັດຕໍ່ລູກມັນ. ກົດຂອງພຣະເຈົ້າບອກສອນພວກເຮົາບ່ອນຂາດຕົກບົກພ່ອງ, ແຕ່ພຣະຄຸນຂອງພຣະເຈົ້າດົນໃຈໃຫ້ພວກເຮົາເດີນໄປເຖິງຄວາມບໍຣິສຸດ.
- ສາມ, ພວກເຮົາຕ້ອງຮູ້ວ່າພວກເຮົາບໍ່ເປັນຄົນບໍຣິສຸດໂດຍກຳເນີດ, ແຕ່ພວກເຮົາທຸກຄົນຖືກເອີ້ນໃຫ້ເປັນຄົນບໍຣິສຸດ ສິ່ງນີ້ເກີດຂຶ້ນໄດ້ເມື່ອພວກເຮົາຍອມຕໍ່ອົງພຣະເຢຊູຄຣິດ ແລະຮັບເອົາຄວາມບໍຣິສຸດຈາກພຣະອົງ.

ສອງສາມອາທິດຜ່ານມານີ້ມີຄົນນຶ່ງບໍ່ມີເຮືອນຢູ່ ລາວໄປຢາມຄຣິສຕະຈັກຂອງຂ້າພະຈົ້າໃນເວລານະມັສການ. ຊາຍຄົນນີ້ກັບຜູ້ສາວໄດ້ຍ້າຍຈາກຣັດອື່ນມາຊອກວຽກໃນເມືອງ. ພວກເຂົາໝົດຫວັງ ແຕ່ເມື່ອໄດ້ເຫັນຍອດໄມ້ກາງແຂນເທິງຕຶກພວກເຂົາເລີຍຕັດສິນໃຈມາຢາມ. ໃນທີ່ສຸດຊາຍຄົນນັ້ນໄດ້ຮັບເອົາອົງພຣະເຢຊູໂດຍການຖິ້ມໃຈເກົ່າແລະເອົາໃຈໃໝ່. ໃນຕອນແລງຂອງວັນນັ້ນລາວໄດ້ຮັບບັບຕິສະມາ ມື້ຕໍ່ມາລາວຂໍຢືມເງິນເພື່ອຈະໄປເອົາໃບທະບຽນສົມຣົດ ແຕ່ງງານກັນຢ່າງຖືກຕ້ອງ ເພາະລາວບໍ່ຢາກມີຊີວິດຢູ່ຢ່າງບໍ່ຖືກຕ້ອງ. ເມື່ອລາວໄດ້ພົບອົງພຣະເຢຊູແລ້ວ ລາວຕ້ອງການມີຊີວິດບໍຣິສຸດ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org.,by BV.

ບົດຮຽນໂຮງຮຽນວັນອາທິດ
ວັນອາທິດທີ 14 ເມສາ 2013 (4-14-2013)

ໃຫ້ກຽດຄວາມບໍຣິສຸດຂອງພຣະເຈົ້າ

ຂໍ້ພຣະຄັມພີໃນບົດຮຽນນີ້: ລະບຽບພວກເລວີ 5:1,4-5,14-16; 6:1-7

ຄຳຖາມຊີວິດ: ບົດຮຽນນີ້ຈະຊ່ວຍທ່ານໃຫ້ຮູ້ເຖິງຜົນສະທ້ອນຂອງການເຮັດຜິດຕໍ່ຄວາມບໍຣິສຸດຂອງພຣະເຈົ້າ, ເຖິງແມ່ນຈະເຮັດຜິດດ້ວຍຄວາມບໍ່ຕັ້ງໃຈ, ແລະປະຕິບັດເພື່ອສ້າງຄວາມສັມພັນຄືນໃໝ່ກັບສິ່ງທີ່ສູນເສັຍໄປແລ້ວ.

ພຣະຄັມພີແຫ່ງຄວມຈິງ: ບົດຮຽນນີ້ແມ່ນສອນເຖິງການໃຫ້ກຽດແດ່ຄວາມບໍຣິສຸດຂອງພຣະເຈົ້າກັບຄວາມສັມພັນຂອງເຮົາຕໍ່ຄົນອື່ນ.

ຜົນສະທ້ອນຕໍ່ຊີວິດ: ຍ້ອນພຣະໂລຫິດຂອງອົງພຣະເຢຊູໄດ້ຊຳຣະລ້າງພວກເຮົາຈາກຄວາມຜິດບາບທັງຫລາຍ (1 ໂຍຮັນ 1:9), ຄຣິສຕຽນສ່ວນຫລາຍເຂົ້າໃຈວ່າໃນເມື່ອເຮັດຜິດບາບແລ້ວ ຄິດວ່າສິ່ງຄວນເຮັດນັ້ນຄືໃຫ້ອ້ອນວອນ ແລະຂໍການໃຫ້ອະພັຍໂທດ. ແທ້ຈິ່ງພຣະເຈົ້າສາມາດອະພັຍໃຫ້ຢ່າງບໍ່ມີຂອບເຂດ, ແຕ່ພວກເຮົາຄວນເຂົ້າໃຈວ່າຄວາມຜິດບາບນັ້ນຕໍ່ສູ່ພຣະເຈົ້າຜູ້ບໍຣິສຸດ.

ຄຳຖາມໃນຊີວິດ: ອັນໃດເປັນບາດກ້າວໃນການກໍ່ສ້າງຄວາມສັມພັນຂຶ້ນໃໝ່ກັບພຣະເຈົ້າ?

ບົດນຳ

ທ່ານໄດ້ສັງເກດເບິ່ງເວລາພວກເຮົາໄດ້ເຮັດຜິດ ຫລືຜູ້ອື່ນເຮັດຜິດພວກເຮົາບໍ່ຢາກເຫັນໜ້າກັນແມ່ນບໍ່? ເຮົາຍັງມີຄວາມສັມພັນກັບຄົນນັ້ນຢູ່ແຕ່ຂາດຄວາມສາມັກຄີທັມກັນ. ບາງຄົນຖືວ່າປຶ້ມລະບຽບພວກເລວີນີ້ເປັນປຶ້ມເຕັມໄປດ້ວຍກົດບັນຍັດຕ່າງໆ; ຄວາມຈິງແລ້ວຊື່ຂອງປຶ້ມນີ້ກໍແມ່ນ "ຄວາມສັມພັນຂອງພວກເລວີ," ຜູ້ເປັນຕະກູນຂອງເລວີຜູ້ເປັນປະໂຣຫິດ. ປຶ້ມນີ້ໄດ້ສອນໃຫ້ຮູ້ວິທີການນະມັສການທີ່ດີ ແລະບອກເຖິງໜ້າທີ່ຂອງປະໂຣຫິດ. ແຕ່ຄວາມໝາຍຕົ້ນຕໍ່ແລ້ວແມ່ນສອນໃຫ້ຮູຈັກວິທີສາມັກຄີທັມກັບພຣະເຈົ້າ. ພຣະເຈົ້າໄດ້ບອກຢ່າງແຈ່ມແຈ້ງໃຫ້ຮູ້ຈັກວິທີຮັກສາຄວາມສາມັກຄີທັມກັບພຣະອົງ.

1. ຍອມຮັບຄວາມຜິດຂອງຕົນເອງ: (ລລວ 5:1,4)

ລະບຽບເລວີບົດ 5 ໄດ້ເວົ້າເຖິງຄະດີເຮັດຜິດບາບທີ່ຈຳເປັນຕ້ອງຖວາຍບູຊາ. ມີຫລາຍຕອນໄດ້ເວົ້າເຖິງການຖວາຍສັດທີ່ບໍ່ມີຕຳນິ. ມະຫາປະໂຣຫິດເປັນຜູ້ຖວາຍງົວເຖີກ, ກະສັດຖວາຍແບ້ຜູ້, ແລະຄົນສາມັນຖວາຍແບ້ແມ່ຫລືແກະ. ຄົນທຸກຍາກຖວາຍນົກເຂົາຫລືນົກກາງແກ, ຄົນສິ້ນເນື້ອຍປະດາຕົວຖວາຍແປ້ງ. ຄຳຖາມມີຢູ່ວ່າຍາມໃດຈຳເປັນຕ້ອງຖວາຍ?

ມີຢູ່ໃນສອງຂໍ້ສຳຄັນໄດ້ເວົ້າເຖິງເວລາທີ່ຄວນຖວາຍເພື່ອຂໍອະພັຍບາບ. ກ່ອນອື່ນແມ່ນເມື່ອຄົນນຶ່ງຄົນໃດເຮັດຜິດພາດຈາກສິ່ງຖືກຕ້ອງ (ຂໍ້ 1) ແລະສອງແມ່ນເມື່ອຄົນນຶ່ງໄດ້ເຮັດຜິດ (ຂໍ້ 4). ສອງຂໍ້ນີ້ແມ່ນຄວາມຜິດທີ່ບໍ່ໄດ້ຮູ້ສຶກຕົວ. ໃນສອງເຣື່ອງນີ້ຈຳເປັນຕ້ອງມີການຖວາຍເພື່ອຂໍອະພັຍໃນຄວາມຜິດບາບ.

ຄວາມຜິດບາບທີ່ບໍ່ຮູ້ໃນຂໍ້ນຶ່ງໄດ້ເວົ້າເຖິງຄວາມຜິດທີ່ສາມາດເປັນພະຍານ ແລະຍົກເອົາຂໍ້ມູມຂຶ້ນມາເປັນຫລັກຖານໃນສານແລະອຳພາງສິ່ງທີ່ຕົນຮູ້ໃນການເປັນພະຍານນັ້ນແມ່ນເຮັດຜິດຕໍ່ພຣະເຈົ້າ ແລະຄົນອື່ນໆ.

ໃນພຣະຄັມພີໃໝ່ທີ່ເນັ້ນວ່າການບໍ່ຍອມເຮັດສິ່ງຖືກຕ້ອງແມ່ນການເຮັດຜິດຕໍ່ພຣະເຈົ້າ. ຢາໂກໂບກ່າວວ່າ, "ເຫດສັນນີ້ຜູ້ໃດຮູ້ວ່າອັນໃດເປັນການດີ ແລະບໍ່ເຮັດຜູ້ນັ້ນຈຶ່ງມີບາບ" (ຢາໂກໂບ 4:17). ໃນຄະດີນີ້ເມື່ອຄົນໃດໄດ້ຍິນຮູ້ຈັກເຣື່ອງລາວແລະບໍ່ຍອມເປັນພະຍານໃນສານຄົນນັ້ນບໍ່ໄດ້ໃຫ້ກຽດແດ່ພຣະເຈົ້າເພາະລາວຮູ້ສິ່ງດີແລະບໍ່ຍອມເຮັດ.

ລະບຽບພວກເລວີ 5:4, ເປັນຕົວຢ່າງຂອງຄົນຜູ້ກ່າວໂຫດຮ້າຍຫລືສັນຍາຢ່າງບໍ່ລະວັງແລະໃນທີ່ສຸດບໍ່ຮັກສາຄຳສັນຍານັ້ນ. ໃນກໍຣະນີນີ້ຄົນນັ້ນບໍ່ໄດ້ລືມ ແຕ່ມີການກະທຳຢ່າງຜິດພາດ. ຄຳເວົ້າວ່າ ໂຫດຮ້າຍແມ່ນເຮັດໃຫ້ເຈັບປວດດ້ວຍຄຳເວົ້າ. ການສັນຍາຕໍ່ພຣະພັກຂອງພຣະເຈົ້ານັ້ນແມ່ນການຮັບຜິດຊອບໜັກ ເມື່ອຄົນທີ່ສັນຍາຮູ້ວ່າຕົວເອງເປັນຄົນຜິດແລ້ວຈຳເປັນຕ້ອງມີການຖວາຍເພື່ອຂໍອພັຍໂທດຄວາມບາບນັ້ນເພາະຄົນນັ້ນໄດ້ຝ່າຝືນຄວາມສາມັກຄີທັມກັບພຣະເຈົ້າເໝືອນກັບເດັກນ້ອຍຖືກຈັບໄດ້ຄາມືຢູ່ແກ້ວໂຖໃສ່ເຂົ້າໝົມ. ຄົນທີ່ມັກເຮັດຄວາມບາບບໍ່ຕ້ອງການໄປປາກົດຕົວຕໍ່ພຣະພັກຂອງພຣະເຈົ້າ ຫລື "ເບິ່ງຕາຕໍ່ຕາ." ການເຮັດຜິດຕ້ອງມີການຖວາຍຖ້າຕ້ອງການຄືນດີກັບພຣະເຈົ້າອີກ.

ເມື່ອພວກເຮົາບໍ່ຖວາຍພຣະກຽດຕໍ່ຄວາມບໍຣິສຸດຂອງພຣະເຈົ້າແລ້ວ ພວກເຮົາຕ້ອງຮູ້ຈັກສິ່ງທຳອິດຄວນຈະເຮັດຖ້າຢາກຄືນດີກັບພຣະອົງຄືການຖວາຍ. ຂອບພຣະຄູນຕໍ່ອົງພຣະເຢຊູທີ່ພຣະອົງໄດ້ກະທຳຕໍ່ຄົນບາບທັງຫລາຍ (1 ຕມທ 1:15). ໃຫ້ຮູ້ວ່າຄວາມບາບໄດ້ທຳລາຍຄວາມສາມັກຄີທັມກັບພຣະເຈົ້າ ແລະຕ້ອງມີການສາລະພາບຍອມຜິດໂດຍການຖິ້ມໃຈເກົ່າແລະເອົາໃຈໃໝ່ ຈຳເປັນຕ້ອງເຮັດໃຫ້ຖືກຕ້ອງກັບພຣະເຈົ້າ.

2. <u>ເຮັດກັບພຣະເຈົ້າຢ່າງຖືກຕ້ອງ</u>: (ລລວ 5:5,14-16)

ເພາະພຣະເຈົ້າຖືວ່າຄວາມບາບນັ້ນຜິດຕໍ່ພຣະອົງແລະຍັງທຳລາຍການສາມັກຄີທັມກັບພຣະອົງອີກ. ສິ່ງນັ້ນເລີ້ມດ້ວຍການເອີ້ນໃຫ້ "ສາລະພາບໃຫ້ຍອມວ່າຕົນຜິດ." ຄຳເວົ້າສາລະພາບມີຄວາມໝາຍວ່າ "ສັຣເສີນດ້ວຍສຽງດັງ," ໝາຍຄວາມວ່າຄົນນັ້ນຍອມຮັບວ່າຕົນເອງເຮັດຜິດບາບຕໍ່ພຣະພັກຂອງພຣະເຈົ້າ. ໝາຍເຖິງການສາລະພາບນັ້ນຕ້ອງເວົ້າຈຳເພາະ ບໍ່ແມ່ນເວົ້າທົ່ວໄປ. ເມື່ອພວກອິສຣາເອັນເຮັດຜິດຕໍ່ຄວາມບໍຣິສຸດຂອງພຣະເຈົ້າພຣະອົງໄດ້ຈັດຫາທາງໃຫ້ຄືນດີກັບພຣະອົງໂດຍເລີ້ມຈາກການສາລະພາບ ແລະຍອມຮັບວ່າໄດ້ເຮັດຜິດບາບ. ສິ່ງນີ້ຕ້ອງແມ່ນການສາລະພາບດ້ວຍຄວາມຈິງໃຈບໍ່ແມ່ນເວົ້າແຕ່ປາກ.

"ພຣະເຈົ້າເວົ້າຕໍ່ໂມເຊ" ແລະອະທິບາຍວ່າ "ໂດຍເຮັດຜິດບາບຢ່າງບໍ່ຕັ້ງໃຈຕໍ່ຄວາມບໍຣິສຸດຂອງພຣະເຈົ້າ" ຄົນນັ້ນຕ້ອງສາລະພາບແລະ "ໃຊ້ໜີ້." ສິ່ງທີ່ບໍຣິສຸດນັ້ນແມ່ນສິ່ງທີ່ໄດ້ຖວາຍມອບໃຫ້ພຣະເຈົ້າແລ້ວ. ຄຳຖາມມີຢູ່ວ່າເປັນຫຍັງຈຶ່ງຕ້ອງມີການໃຊ້ໜີ້?

ແນ່ນອນໃຜກໍຕາມສາມາດສາລະພາບຄວາມຜິດບາບຕໍ່ພຣະເຈົ້າໄດ້ໂດຍທີ່ບໍ່ຕັ້ງໃຈວ່າຈະປະຖິ້ມຄວາມບາບນັ້ນ. ການເວົ້າແຕ່ປາກນັ້ນບໍ່ແມ່ນການສາລະພາບແທ້. ການໃຊ້ໜີແມ່ນທາງນຶ່ງທີ່ບອກເຖິງການສາລະພາບທີ່ແທ້ຈິງວ່າຈະປ່ຽນແປງ.

ຂໍ້ 14-16 ໄດ້ບອກເຖິງ "ຖວາຍເພື່ອໃຊ້ໜີ້" ເປັນການຖວາຍເໝືອນລັກເຂົ້າບ້ານຄົນຫລືຖວາຍທີ່ຮູ້ຈັກຜິດ. ຖວາຍຢ່າງນີ້ແມ່ນເອົາສັດມາເປັນຂອງເຜົາຖວາຍເປັນຄ່າໄຖ່ຕໍ່ພວກປະໂຣຫິດ. ອີງຕາມກົດຂອງພວກເລວີແລ້ວຖ້າເຮັດຜິດຕໍ່ຄົນອື່ນຈຳເປັນຕ້ອງເພີ້ມຄ່າໄຖ່ 20**%** ເປັນເງິນ.

ການຖວາຍໃນພຣະຄັມພີເດີມແມ່ນເປັນພຽງເງົາຂອງການຖວາຍທີ່ອົງພຣະເຢຊູໄດ້ກະທຳທີ່ໄມ້ກາງແຂນ. ພຣະອົງໄດ້ສິ້ນພຣະຊົນແລະກັບຄືນຂຶ້ນມາອີກ. ການສິ້ນພຣະຊົນນັ້ນເຮັດໃຫ້ພຣະບັດຍັດສົມບູນ ແລະບໍ່ຮິສຸດໃນຊີວິດຂອງຜູ້ທີ່ເຊື່ອ. ໝາຍຄວາມວ່າຜູ້ທີ່ເຊື່ອໃນອົງພຣະເຢຊູນັ້ນໄດ້ຈ່າຍຄ່າຂອງຄວາມບາບໝົດສິ້ນ. ພຣະຄຸນຂອງພຣະເຈົ້າເຮັດໃຫ້ພວກເຮົາຄືນດີກັບພຣະອົງແລະກັບຄົນອື່ນໄດ້.

ຊັກຂາຍຍິນດີທີ່ຈະຈ່າຍຄ່າເຮັດຜິດຕໍ່ຄົນອື່ນສີ່ເທົ່າ (ລກ 19:8). ລາວຕ້ອງການເຮັດດີຫລາຍກວ່າກົດບັດຍັດສອນ. ເປັນຫຍັງລາວຈຶ່ງເຮັດດັ່ງນັ້ນ? ຄຳຕອບກໍຄືว່າເມື່ອລາວຮັບເອົາພຣະເຢຊູແລ້ວຊີວິດຂອງລາວໄດ້ປ່ຽນແປງລາວເຮັດທຸກວິທີທາງຈະຄືນດີກັບພຣະເຈົ້າແລະມະນຸດ.

3. <u>ຍອມຮັບຜິດຕໍ່ຄົນອື່ນ</u>: (ລລວ 6:1-7)

ເມື່ອອົງພຣະເຢຊູໃຊ້ໜີ້ຂອງພວກເຮົາໝົດແລ້ວ ເປັນຫຍັງພວກເຮົາຈຶ່ງເຮັດໃຫ້ຖືກຕ້ອງກັບຄົນອື່ນ? ທາງນຶ່ງກໍແມ່ນເພື່ອຖວາຍພຣະກຽດແດ່ພຣະເຈົ້າໂດຍສ້າງສັນຕິສຸກກັບຄອບຄົວແລະຄົນອື່ນ. ຖ້າຈະຢູ່ໃຫ້ຖືກກັບຄົນອື່ນແລ້ວພວກເຮົາກໍຍອມແກ້ໄຂໃຫ້ມີຄວາມຖືກຕ້ອງຕໍ່ເຂົາເຈົ້າ ຫລືໃຫ້ອະພັຍກັບຄົນເຮັດຜິດຕໍ່ພວກເຮົາ.

ລະບຽບພວກເລວິບິດ 6:1-7 ໄດ້ກ່າວເຖິງເຣື່ອງພິເສດຄືພຣະເຈົ້າໄດ້ປະນາມການສໍ້ໂກງເພື່ອນບ້ານເອົາຊັບສິນດິນດອນຂອງຄົນອື່ນ. ຂໍ້ 2-3 ເວົ້າເຖິງຄວາມບາບຫົກຢ່າງທີ່ຜິດຕໍ່ຄົນອື່ນ.

*ການຫຼອກລວງເພື່ອນບ້ານເຣື່ອງການຝາກຫລືການປະກັນ
*ການຄ້າຂາຍລິງທຶນ
*ການຂະໂມຍ
*ການໂລບເອົາຂອງເພື່ອນບ້ານໂດຍການໂກງ
*ການໂລບເອົາສິ່ງຂອງທີ່ເພື່ອນບ້ານເຮັດເສັ້ງ
*ການເປັນພະຍານປອມຕໍ່ເພື່ອນບ້ານ

ເມື່ອເຮັດຄວາມຜິດຕໍ່ຄົນອື່ນແລ້ວ ພຣະເຈົ້າສັ່ງໃຫ້ຄົນຜິດນັ້ນຍອມຕໍ່ຄົນອື່ນ. ໃຫ້ເຂົ້າໃຈວ່າການສາລະພາບນັ້ນເປັນພຽງແຕ່ການເລີ້ມຕົ້ນ ຍັງບໍ່ສິ້ນສຸດເທື່ອ. ພຣະເຈົ້າຍັງສັ່ງອີກວ່າສິ່ງໃດທີ່ໄດ້ໂລບເອົານັ້ນໃຫ້ສົ່ງຄືນແລະເພີ້ມອີກນຶ່ງສ່ວນຫ້າຂອງຣາຄາທີ່ໂກງໄປນັ້ນ. ຖ້າເຮັດດັ່ງນີ້ໄດ້ຜູ້ທີ່ເຮັດຜິດຈະກາຍເປັນຜູ້ທີ່ເຮັດຖືກ.

ບາດກ້າວຂັ້ນຕົ້ນໃນການສ້າງຄວາມສຳພັນ

ບົດຮຽນວັນນີ້ເວົ້າເຖິງສາມຂັ້ນຕົ້ນຂອງການສ້າງຄວາມສັມພັນ:

*ຍອມຮັບຄວາມຜິດ
*ຄືນດີກັບພຣະເຈົ້າ
*ຍອມຮັບຜິດຕໍ່ຄົນອື່ນ

ມີຂັ້ນຕົ້ນອັນໃດບໍ່ທີ່ທ່ານຈະເຮັດເພື່ອສ້າງຄວາມສັມພັນກັບຄົນອື່ນ?

*----------

*----------

*----------

ເພີ້ມຈາກການຍອມຜິດຕໍ່ຄົນອື່ນແລ້ວ, ພວກເຮົາຄວນກ້າວເຂົ້າໄປໃຫ້ຖືກຕ້ອງກັບພຣະເຈົ້າ ຫລັງຈາກຜູ້ເຮັດຜິດໄດ້ຍອມແລ້ວ ຄົນນັ້ນໄດ້ຈ່າຍໜີ້ໂດຍນຳເອົາສັດໂຕດີມາໃຫ້ພວກປະໂຣຫິດເພື່ອຖວາຍ. ຄວາມສຳຄັນໃນການຄືນດີກັບພຣະເຈົ້າແລະມະນຸດນັ້ນຈຳເປັນຕ້ອງເຮັດໂດຍໄວຄືໃຫ້ເລີ້ມເຮັດ, "ໃນມື້ທີ່ຮູ້ຈັກຄວາມຜິດ." ບໍ່ມີຜູ້ໃດພູມໃຈໃນການຍອມຜິດຂອງຕົນຕໍ່ຄົນອື່ນແຕ່ຕ້ອງໃຫ້ເຂົ້າໃຈວ່າເມື່ອພຣະເຈົ້າເປີດຕາໃຈໃຫ້ຮູ້ຈັກຄວາມຜິດແລ້ວເວລານັ້ນພວກເຮົາຄວນຍອມຕໍ່ຄົນທີ່ເຮົາເຮັດຜິດນຳ. ການລໍຖ້າແລະບໍ່ຍອມນັ້ນຈະເຮັດໃຫ້ຄວາມຜິດເພີ້ມຂຶ້ນແລະຈະເຮັດໃຫ້ມີຄວາມເຈັບປວດເລິກລົງໄປອີກ.

ໝາຍເຫດ: ການໃຫ້ອະພັຍຍ່ອມມີຂຶ້ນຕໍ່ຄົນທີ່ເຮັດຜິດ (ລພອ 6:7); ແຕ່ຄວາມບາບຍ່ອມມີຜົນສະທ້ອນຕາມມາ. ເມື່ອພວກເຮົາເຮັດຜິດຕໍ່ຄົນອື່ນໂດຍຄຳເວົ້າແລະການກະທຳແລ້ວ ພວກເຮົາສາມາດຮັບການໃຫ້ອະພັຍໄດ້ແຕ່ຈະລຶບລ້າງຜົນສະທ້ອນທີ່ຈະຕາມານັ້ນໄດ້ຫລືບໍ່?

ຕົວຢ່າງ: ຖ້າຜູ້ເປັນສາມີມັກຕ້ອງຕີຜູ້ເປັນພັລຍາ ສາມີອາດໄດ້ຮັບການໃຫ້ອະພັຍຖ້າສາມີຫາກຍອມຜິດ ແຕ່ຄຳຖາມມີຢູ່ວ່າພັລຍາຈະລຶບລ້າງຄວາມເຈັບປວດຂອງລາວໄດ້ຫລືບໍ່? ເດັກນ້ອຍຖືກຜູ້ໃຫຍ່ທຳລາຍຮ່າງກາຍສາມາດຮັບການໃຫ້ອະພັຍ ແຕ່ບໍ່ໄດ້ໝາຍຄວາມວ່າບາດແຜຂອງຄວາມຜິດນັ້ນໄດ້ຫາຍໄປ.

ບົດຮຽນໃນຊີວິດ

ເມື່ອພວກເຮົາໄດ້ທຳລາຍຄວາມສາມັກຄີທັມກັບພຣະເຈົ້າ, ມັນເປັນສິ່ງຈຳເປັນຕ້ອງຄືນດີກັບພຣະອົງ. ເພື່ອສືບຕໍ່ການນະມັສການ, ອ້ອນວອນ, ສຶກສາພຣະຄຳແລະສິ່ງອື່ນໆເພື່ອໃຫ້ຄວາມສາມັກຄີທັມກັບພຣະເຈົ້າດີຂຶ້ນໃນຖານະພວກເຮົາຍັງມີຄວາມຜິດບາບຢູ່ ຫລືສລຸບເອົາວ່າຕົນເອງບໍ່ໄດ້ເຮັດອັນໃດຜິດ. ການກະທຳເໝືອນກັບວ່າຕົນບໍ່ໄດ້ເຮັດຜິດນັ້ນບໍ່ໄດ້ສ້າງຄວາມສາມັກຄີທັມກັບພຣະເຈົ້າເລີຍ. ການຊອກຫາຂໍ້ແກ້ຕົວວ່າບໍ່ໄດ້ເຮັດຜິດ ບາບໂດຍຄວາມຕັ້ງໃຈນັ້ນໄດ້ຕັດຄວາມສັມພັນກັບພຣະເຈົ້າ ພວກເຮົາຈຳເປັນຕ້ອງປະຕິບັດຕາມບາດກ້າວໃນບົດຮຽນນີ້ເພື່ອຈະຄືນດີກັບພຣະເຈົ້າ. ແນ່ນອນພຣະໂຫລິດຂອງອົງພຣະເຢຊູສາມາດທຳລາຍຄວາມບາບໃນຊີວິດຂອງພວກເຮົາໄດ້ (1 ໂຢຮັນ 1:9). ທ່ານເຄີຍປະສົບການກັບການຊຳຮະລ້າງໃນຊີວິດຂອງທ່ານບໍ່? ມັນເລີ້ມຕົ້ນເມື່ອພວກເຮົາໄດ້ຍອມເຊື່ອວ່າພຣະເຈົ້າໄດ້ດົນບັນດານໃຫ້ອົງພຣະເຢຊູຄືນພຣະຊົນຈາກຄວາມຕາຍ ແລະສາລະພາບວ່າພຣະອົງຊົງເປັນອົງພຣະຜູ້ເປັນເຈົ້າ (ໂຣມ 10:9-10).

ທ່ານມີແຜນການໃດບໍ່ເມື່ອທ່ານຮູ້ວ່າຕົນເອງບໍ່ໄດ້ຖວາຍພຣະກຽດຕໍ່ຄວາມບໍຣິສຸດຂອງພຣະເຈົ້າ? ເມື່ອພວກເຮົາທຳລາຍຄວາມສັມພັນກັບຄົນອື່ນພວກເຮົາຈຳເປັນຕ້ອງເຮັດຫລາຍກວ່າທີ່ຈະເວົ້າວ່າ "ຂໍໂທດ." ເມື່ອທ່ານໄດ້ເຮັດຄວາມຜິດຕໍ່ຄົນນຶ່ງຄົນໃດແລ້ວທ່ານຈະເຮັດແນວໃດໃນຄະດີຕໍ່ລົງໄປນີ້:

- ທ່ານໄດ້ກ່າວຕິຕຽນເພື່ອນຮ່ວມງານ ຊຶ່ງເຂົາເຈົ້າໄດ້ຍິນການຕິຕຽນຂອງທ່ານ.
- ທ່ານໄດ້ໃຊ້ພາສາບໍ່ສຸພາບຕິຕຽນລູກຂອງທ່ານແທນທີ່ຈະເວົ້າດ້ວຍຄວາມຮັກ.
- ທ່ານລືມນັດກັບເພື່ອນຜູ້ຕ້ອງການຄຳແນະນຳແລະຊ່ວຍເຫລືອ.
- ທ່ານໄດ້ຕິຕຽນພັລຍາ/ສາມີວ່າບໍ່ເອົາໃຈໃສ່ຕໍ່ຄວາມຕ້ອງການ.
- ທ່ານໄດ້ເຮັດເຄື່ອງມືທີ່ຢືມຈາກໝູ່ຄູ່ເພພັງ.

ບົດຮຽນໂຮງຮຽນວັນອາທິດ
ວັນອາທິດ 21 ເມສາ 2013 (4-21-2013)

ມີຊີວິດຢູ່ໃນຄວາມບໍຣິສຸດ

ຂໍ້ພຣະຄັມພີໃນບົດຮຽນນີ້: ລະບຽບພວກເລວີ 18:1-5, 20-26; 20:6-8

ຄຳຖາມຊີວິດ: ບົດຮຽນນີ້ຈະຊ່ວຍທ່ານໃຫ້ຮູ້ຈັກແຍກໂຕເອງອອກຈາກທັມນຽມທີ່ບໍ່ຖືກຕ້ອງຕາມພຣະຄັມພີ ແລະຢືນຢູ່ຢ່າງມີຊີວິດໃນຄວາມບໍຣິສຸດ.

ພຣະຄັມພີແຫ່ງຄວມຈິງ: ພຣະເຈົ້າໄດ້ແຍກພວກເຮົາອອກໃຫ້ມີຊີວິດຢູ່ຢ່າງບໍຣິສຸດເພື່ອພວກເຮົາຈະສາມາດປະຕິເສດທັມນຽມທີ່ບໍ່ຖືກຕ້ອງຕາມພຣະຄັມພີ.

ຜົນສະທ້ອນຕໍ່ຊີວິດ: ບົດຮຽນນີ້ສຳຄັນຫລາຍເພາະມີນັກຄົ້ນຄວ້າເຫັນຄວາມແຕກຕ່າງລະຫວ່າງ ຄຣິສຕຽນ ແລະຄົນອື່ນໆ. ແຕ່ມີຫລາຍຄົນທີ່ເປັນຄຣິສຕຽນເອົາຕົວເອງ
ເຂົ້າໄປມົ້ວສຸມໃນສັງຄົມທີ່ຕົນອາສັຍຢູ່, ແຕ່ພຣະເຈົ້າໄດ້ເອີ້ນໃຫ້ມີຊີວິດທີ່ແຕກຕ່າງ.

ຄຳຖາມໃນຊີວິດ: ການກະທຳອັນໃດທີ່ຊ່ວຍໃຫ້ຂ້າພະເຈົ້າມີຊີວິດຢູ່ໃນຄວາມບໍຣິສຸດ?

ບົດນຳ

ໃນປຶ້ມທີ່ທ່ານ ແບ່ດ ວາກອນເນີ ໄດ້ຂຽນເຮື່ອງ `*ພາບຂອງຄວາມເຊື່ອໃນອະນາຄົດ.*` ລາວໄດ້ກ່າວວ່າແມ່ນ "ຄວາມຄິດຕ່າງໆ, ຄວາມເຫັນ ແລະຄວາມເຊື່ອຕ່າງໆທີ່ກົງກັນຂ້າມກັບ ຄຳສອນໃນພຣະຄັມພີ." ເປັນໜ້າລະອາຍທີ່ສັງຄົມໃນທຸກວັນນີ້ເພາະບໍ່ຄ່ອຍມີຄວາມແຕກຕ່າງລະຫວ່າງຄຣິສຕຽນແລະຄົນທີ່ບໍ່ເຊື່ອພຣະເຈົ້າພໍເທົ່າໃດ ເມື່ອເວົ້າເຖິງຈະຣິຍາທັມແລ້ວ. ສຳລັບພວກເຮົາຜູ້ທີ່ເອີ້ນໃຫ້ຢູ່ໃນຄວາມບໍຣິສຸດແລ້ວຄວນມີຊີວິດທີ່ແຕກຕ່າງກັບສັງຄົມທີ່ກຳລັງເສື່ອມສູນໄປນັ້ນ. ຄຳເວົ້າວ່າບໍຣິສຸດນັ້ນມີຄວາມໝາຍວ່າໃຫ້ແຍກອອກຫລືເປັນສິ່ງຖືກແຍກໄວ້ຕ່າງ ຫາກເພື່ອຈຸດປະສົງສຳເພາະ.

ຄຣິສຕະຈັກມີພາຣະໃຈຢາກໃຫ້ສັງຄົມຮັບຮູ້ເຣື່ອງພຣະເຈົ້າ ແລະໃນເວລາດຽວກັນກໍມີຄວາມອຶດອັດທີ່ບໍ່ຢາກຮັບເອົາທັມນຽມທີ່ຂັດກັບຄຳສອນໃນພຣະຄັມພີ. ໂດຍການຍົກເອົາຕອນສຳຄັນນີ້ມາເວົ້າເພື່ອພວກເຮົາຈະໄດ້ພົບເຫັນສາມເຫດຜົນທີ່ເກີດຂຶ້ນລະຫວ່າງຄຣິສຕຽນແລະວັທນະທັມທີ່ບໍ່ໃຫ້ກຽດແດ່ພຣະເຈົ້າຄື ມາດຕະຖານຂອງສັງຄົມ, ການເຮັດສິ່ງຊົ່ວ, ແລະມີຄວາມເຊື່ອປອມ.

1. <u>ແຍກອອກຈາກມາດຕະຖານຂອງສັງຄົມ</u>: (ລລວ 18:1-5)

ລະບຽບເລວີເປັນປຶ້ມປ່ຽນສະພາບການໃນພຣະຄັມພີເດີມ. ເວລານີ້ປະຊາກອນຂອງພຣະເຈົ້າໄດ້ອອກຈາກການເປັນທາດຂອງປະເທດເອຢິບ ແລະກຳລັງເດີນທາງໃນຖິ່ນກັນດານເພື່ອຕຽມຕົວເຂົ້າໄປເຖິງດິນແດນການາອານແຫ່ງພຣະສັນຍາ. ພຣະເຈົ້າມີພຣະປະສົງຢາກໃຫ້ປະຊາກອນຂອງພຣະອົງມີເສຣີພາບ ແລະອອກຈາກປະເພນີທີ່ຕ່າງແລະບໍ່ໃຫ້ກຽດແດ່ພຣະເຈົ້າ. ດັ່ງນັ້ນ, ໃນບົດນີ້ ລະບຽບພວກເລວີ 18:1-5 ພຣະເຈົ້າໄດ້ບອກໃຫ້ໂມເຊສອນປະຊາກອນ. ພຣະອົງໄດ້ເປີດເຜີຍພຣະນາມສ່ວນຕົວຄື ຢາເວ ແກ່ໂມເຊ (ຊຶ່ງໄດ້ບອກໃຫ້ໂມເຊຮູ້ໃນ ອພຍ 3:14), ພຣະອົງໄດ້ເປີດເຜີຍໃຫ້ຮູ້ພຣະອົງເອງว่า "ເຮົາເປັນຜູ້ທີ່ເຮົາເປັນ." ພຣະທັດຂອງພຣະອົງບໍ່ປ່ຽນແປງເຖິງຈະຢູ່ໃສແລະບ່ອນໃດກໍຕາມ. ມາດຕະຖານຂອງພຣະອົງບໍ່ມີຂອບເຂດ.

ໂມເຊໄດ້ບອກໃຫ້ປະຊາກອນຂອງພຣະເຈົ້າຮູ້ວ່າບໍ່ໃຫ້ຄົນຂອງພຣະເຈົ້າຍອມເຮັດຕາມຄົນເອຢິບຫລືຄົນໃນປະເທດການາອານ. ທັງສອງປະເທດນີ້ເປັນຄົນບໍ່ເຊື່ອແລະເຮັດຜິດບາບເຊັ່ນ: ຜິດຊາຍຍິງ ຫລິ້ນຊູ້ ເຜົາເດັກນ້ອຍບວງສວງແລະອື່ນໆ. ພຣະເຈົ້າສັ່ງບໍ່ໃຫ້ຮັບເອົາທຳນຽມຢ່າງນັ້ນທີ່ພວກເຮົາເຄີຍເຫັນແລະທຳນຽມຂອງດິນແດນໃໝ່ທີ່ພວກເຂົາກຳລັງຈະເຂົ້າໄປນັ້ນ. ພວກເຂົາຕ້ອງປະຕິບັດຕາມຄຳສັ່ງແລະດຳຣັດຂອງພຣະເຈົ້າໃນປົດນີ້.

ການເຮັດຜິດທາງເພດນັ້ນແມ່ນເຮັດຕໍ່ຍາດພີ່ນ້ອງ, ຫລິ້ນຊູ້, ໃຊ້ເດັກນ້ອຍບວງສວງ, ເພດສັມພັນກັບເພດດຽວກັນ, ມີເພດກັບສັດແລະອື່ນໆ (18:6-23). ແຕ່ໃຫ້ພວກເຂົາຖວາຍພຣະກຽດແດ່ພຣະເຈົ້າ, ຮັກສາວັນຊະບາໂຕໃຫ້ບໍຣິສຸດ, ນະມັສການພຣະເຈົ້າເທົ່ານັ້ນ (19:3-4).

ຖ້າປະຊາກອນຂອງພຣະເຈົ້າເຮັດຕາມທຳນຽມຂອງຄົນທີ່ຢູ່ອ້ອມຂ້າງພວກ
ເຂົາກໍໄດ້ບອກຊາວໂລກວ່າສິ່ງອື່ນນັ້ນສຳຄັນໄປກວ່າພຣະເຈົ້າ.

ເຮັດແນວໃດຂ້າພະເຈົ້າຈະສາມາດແຍກຕົວເອງອອກຈາມາດຕະຖານຂອງສັງຄົມໄດ້?

*ຂ້າພະເຈົ້າຕ້ອງເອົາມາດຕະຖານຈາກພຣະຄັມພີ, ບໍ່ແມ່ນຈາກສັງຄົມ.
*ບໍ່ຍອມໃຫ້ນັກໂຄສະນາທາງໂທຣະທັດ ຫລືໜັງສືພິມດຶງດູດຄວາມຄິດແລະຈິດໃຈ.
*ໃຫ້ຈຳໄວ້ວ່າໜ້າທີ່ຂອງຜູ້ທີ່ເຊື່ອນັ້ນຄື "ຈົ່ງສແວງຫາຣາຊອານາຈັກຂອງພຣະເຈົ້າ" (ມັດທາຍ 6:33)
"ແລະເຮັດໃຫ້ຄົນທຸກຊາດເປັນສາວົກ" (ມັດທາຍ 28:19)
*----------
*----------
*----------

ນັ້ນບໍ່ໄດ້ໝາຍຄວາມວ່າພວກເຮົາຄວນຖອນຕົວອອກຈາກສັງຄົມຈົນບໍ່ສາມາດເຮັດຫຍັງໄດ້. ໃຫ້ເຂົ້າໃຈວ່າບໍ່ແມ່ນສັງຄົມທັງໝົດຊົ່ວ. ຖ້າພວກເຮົາອອກຈາກສັງຄົມທັງໝົດພວກເຮົາກໍເສັ່ງໂອກາດທີ່ຈະເປັນພະຍານຕໍ່ພວກເຂົາ. ພວກເຮົາສາມາດຢູ່ກັບສັງຄົມໄດ້ແຕ່ບໍ່ເຮັດຄືພວກເຂົາ (ໂຍຮັນ 17:14-16). ເມື່ອພວກເຮົາເບິ່ງໂທຣະທັດພວກເຮົາບໍ່ຄວນໃຫ້ມີຄວາມຄິດຫລືພາບທີ່ບໍ່ເປັນທັມເຂົ້າມາໃນຊີວິດ. ເມື່ອພວກເຮົາໄປເບິ່ງກີລາກໍຢ່າໃຫ້ຈິດໃຈຄິດເຖິງແຕ່ກີລາຊຶ່ງສັງຄົມພວກເຮົາມັກທີ່ສຸດ. ພວກເຮົາຄວນຮູ້ຈັກອັນໃດດີສົມຄວນເຂົ້າຮ່ວ ມ ແລະລະວັງຮັກສາສິ່ງຊົ່ວຊ້າບໍ່ໃຫ້ເຂົ້າມາໃນຊີວິດ.

2. <u>ແຍກຕົວອອກຈາກການເຮັດບາບ</u>: (ລລວ 18:20-26)

ມາດຕະຖານຕາມສັງຄົມຊຶ່ງບໍ່ແມ່ນມາຈາກພຣະເຈົ້ານັ້ນຍ່ອມນຳພາຄອບຄົວເຮັດສິ່ງທີ່ຜິດບາບ. ລະບຽບພວກເລວີ 18:20-23 ໄດ້ບອກເຖິງຄວາມຜິດບາບຂອງພວກເອຢິບແລະພວກການາອານເຮັດຊຶ່ງພວກອິສຣາເອັນຈຳເປັນຕ້ອງຫລີກເວັ້ນ. ເມື່ອຄອບຄົວຖືກທຳລາຍຍ້ອນບາບໃນທີ່ສຸດສັງຄົມກໍຈະໄດ້ຮັບຄືກັນ. ໃນສັງຄົມຊຶ່ງຖືເພດສັມພັນເປັນໃຫຍ່ນັ້ນບໍ່ຄ່ອຍເຫັນແຈ້ງໃນສິ່ງຜິດແລະສິ່ງຖືກ, ແຕ່ໃຫ້ເຂົ້າໃຈວ່າພຣະເຈົ້າບໍ່ປ່ຽນແປງຈັກເທື່ອ. ເວລານີ້ພຣະເຈົ້າກ່າວເນັ້ນກັບປະຊາກອນຜູ້ກຳລັງຈະເຂົ້າໃນແຜ່ນດິນແຫ່ງພຣະສັນຍາ.

ຄວາມຜິດບາບສິ່ງທຳອິດແມ່ນເວົ້າເຖິງການຫລິ້ນຊູ້ (18:20) ເພາະວ່າສິ່ງນີ້ເປັນຫົວໃຈຂອງສັງຄົມທີ່ທຳລາຍຄອບຕລອດມາ. ໂຢເຊັບໄດ້ເອີ້ນຄວາມຜິດບາບນີ້ວ່າເປັນການກະທຳ "ອັນຍິ່ງໃຫຍ່ຕໍ່ສູ້ພຣະເຈົ້າ" (ປະຖົມມະການ 39:9).

ລາວຍັງເວົ້າເພີ້ມວ່າບາບນີ້ເປັນຄວາມຜິດຫລາຍກວ່າບາບອື່ນໆ ເພາະມັນມີອຳນາດທຳລາຍຫລາຍທີ່ສຸດ. ເມື່ອຄອບຄົວຕົກໄປ ໃນທີ່ສຸດທັງສັງຄົມກໍຕົດຕາມມາຢ່າງໜ້າເສົ້າໃຈ.

ຄວາມຜິດບາບທີສອງໃນເມືອງການາອານແມ່ນການຖວາຍເດັກນ້ອຍຕໍ່ພຣະໂມເລກ, ເປັນພຣະຂອງພວກອາໂມໄນ. (ລພວ 18:21). ຄົນພວກນີ້ໄດ້ເຜົາເດັກນ້ອຍບວງສວງພຣະຂອງພວກເຂົາ. ເປັນໜ້າເສົ້າໃຈມີຜູ້ນຳສອງຄົນທີ່ຮັບໃຊ້ພຣະເຈົ້າໄດ້ເຮັດຜິດຢ່າງນີ້, ເອຮັສ (2 ຂ່າວຄາວ 28:3) ແລະມານາສເຊ (2 ກະສັດ 21:6) ໄດ້ຖວາຍລູກຂອງຕົນເອງຕໍ່ພຣະຂອງອາໂມໄນ. ຕໍ່ມາກະສັດໂຍຊີຢາໄດ້ສັ່ງໃຫ້ທຳລາຍແທ່ນບູຊາແລະໄດ້ຟື້ນຟູຈິດໃຈຂອງປະຊາກອນຂອງພຣະເຈົ້າຂຶ້ນມາໃໝ່. (2 ກະສັດ 23: 10,13).

ວັນນີ້ຄົນເຮົາອາດບໍ່ໄດ້ໃຊ້ລູກບວງສວງອີກແລ້ວ, ແຕ່ເຫັນວ່າພວກເຮົາຍັງໃຊ້ລູກບວງສວງເພື່ອຄວາມສະດວກຂອງຕົນເອງຄືຂ້າເດັກໃນທ້ອງ. ບາງຄົນບວງສວງຍ້ອນຄວາມໂລບມາກຄືເຮັດວຽກທັງກາງເວັນແລະຄືນໂດຍປະລະໃຫ້ລູກເປັນທຸກໂດຍບໍ່ໄດ້ລ້ຽງແລະນຳພາ. ເມື່ອພໍ່ແມ່ບໍ່ລ້ຽງລູກຕາມເປົ້າໝາຍຂອງພຣະເຈົ້າໃນທີ່ສຸດກໍມີຜົນຮ້າຍຕົດຕາມມາຫລາຍສັດຕະວັດ.

ສອງຂໍ້ຕໍ່ມາເວົ້າເຖິງ (22-23) ໃຊ້ເພດສັມພັນທີ່ຜິດ. ພຣະຄັມພີໄດ້ປະນາມການຮ່ວງເພດກັບເພດດຽວກັນແລະຮ່ວມເພດກັບສັດ. ພຣະເຈົ້າໄດ້ເອີ້ນສິ່ງເຫລົ່ານີ້ວ່າເປັນໜ້າກຽດຊັງທີ່ຝ່າຝືນນກົດທັມມະຊາດສິ່ງທີ່ພຣະເຈົ້າສ້າງມາ. ຖ້າຜູ້ໃດຮ່ວມເພດກັບສັດພຣະອົງກໍເອີ້ນວ່າ “ເຮັດຜິດກົດ.”

ພຣະເຈົ້າມີພຣະປະສົງຢາກໃຫ້ໃຊ້ເພດສັມພັນທີ່ຖືກຕ້ອງລະຫວ່າງຜົວເມັຽຜູ້ແຕ່ງງານ; ນອກໄປຈາກສິ່ງນີ້ແລ້ວເປັນສິ່ງທີ່ຜິດຈາກທາງຂອງພຣະເຈົ້າ. ຊາວການາອານໄດ້ເຮັດຜິດໃນເພດສັມພັນຢ່າງນີ້, ແຕ່ພຣະອົງຢາກໃຫ້ປະຊາກອນຂອງພຣະອົງເປັນຄົນແຕກຕ່າງ. ພຣະອົງຊັກຊວນໃຫ້ປະຊາກອນ “ໃຫ້ຮັກສາຄຳສັ່ງສອນຂອງພຣະອົງ” ເພາະຄົນອື່ນເຮັດໃຫ້ພຣະອົງເສັຽພຣະທັຍມາແລ້ວ.

3. <u>ແຍກອອກຈາກຄວາມເຊື່ອຜິດ</u>: (ລລວ 20:6-8)

ນອກຈາກໃຫ້ອອກໄປຈາກມາດຕະຖານຂອງສັງຄົມທີ່ບໍ່ຮູ້ຈັກພຣະເຈົ້າແລ້ວ, ພຣະເຈົ້າໄດ້ຊັກຊວນໃຫ້ປະຊາກອນຂອງພຣະອົງແຍກອອກຈາກຄວາມເຊື່ອທີ່ຜິດ. ຄວາມເຊື່ອທີ່ຜິດໃນເວລານັ້ນແມ່ນເຊື່ອນາງທຽມຫລືວິນຍານຊົ່ວ. ພວກເຂົາພາກັນໄປປຶກສາກັບຄົນຕາຍເຖິງເຣື່ອງອະນາຄົດ. ເປັນໜ້າເສົ້າໃຈໃນປະວັດສາດຂອງພວກອິສຣາເອັນມີບາງກະສັດເຂົ້າຮ່ວມກັນເຮັດຊົ່ວເໝືອນຄົນທີ່ຢູ່ອ້ອມຂ້າງ. ກະສັດຊາອູນໄດ້ເຄີຍໄລ່ນາງທຽມ (1 ຊາມູເອນ 28:3) ໃນທີ່ສຸດກໍໄດ້ໄປປຶກສານຳນາງທຽມ (28:8-19). ເຫັນວ່າເຊື່ອໃນພຣະເຈົ້າເທົ່ານັ້ນບໍ່ເປັນການພຽງພໍພວກເຂົາກໍເລີຍຊອກປຶກສາກັບພຣະປອມ.

ພຣະເຈົ້າຖືว่าຜູ້ທີ່ປຶກສາກັບນາງທຽມ ຫລືຜີເປັນຄົນຫລິ້ນຊູ້. ພຣະເຈົ້າຈະເປັນຜູ້ຕໍ່ສູ້ຄົນຢ່າງນັ້ນແລະຕັດອອກຈາກການເປັນປະຊາກອນຂອງພຣະອົງ. ການແຕ່ງງານລະຫວ່າງຍິງກັບຊາຍນັ້ນເປັນຄວາມສັມພັນທີ່ຖືກຕາມທີ່ສັນຍາເອົາໄວ້ ເໝືອນກັບຄວາມສັມພັນລະຫວ່າງພຣະເຈົ້າກັບປະຊາກອນຂອງພຣະອົງ. ຖ້າຫາກໄປຫາພຣະອື່ນແລ້ວກໍເທົ່າກັບວ່າຫລິ້ນຊູ້ຈາກພຣະອົງເພາະບໍ່ໄດ້ຮັກສາຄຳສັນຍາເອົາໄວ້. ການຫລິ້ນຊູ້ທາງຈິດໃຈນັ້ນປະກອບດ້ວຍດູມໍເບິ່ງເດືອນດາວ ໃຊ້ເວດມົນຄາຖາ ຫລືມີພາກສ່ວນກັບຄວາມເຊື່ອທີ່ບໍ່ຖືກ ແລະມີອີກຫລາຍໆ ຢ່າງເກີນກວ່ານີ້ຊຶ່ງບໍ່ໄດ້ຂຽນໄວ້.

ຄຣິສະຕຽນໃນທຸກວັນນີ້ຍັງໄດ້ຍິນ ໄດ້ເຫັນພາບນີ້ຈາກປື້ມ ໂທຣະທັດ ຊີເນມາ ແລະດົນຕຣີ. ພວກເຮົາຕ້ອງເປັນຄົນສັງເກດການເພື່ອຈະຮູ້ຈັກອັນໃດດີເປັນປໂຍດເພື່ອຈິດໃຈເຮົາຈະບໍ່ແຍກອອກຈາກພຣະເຈົ້າ. ອີກຢ່າງນຶ່ງພວກເຮົາຄວນ ມີຄວາມຮູ້ເຖິງເຣື່ອງຜິດຕ່າງໆທີ່ໄດ້ກ່າວໄວ້ເພື່ອພວກເຮົາຈະມີໂອກາດເປັນພະຍານຕໍ່ຄົນອື່ນແລະນຳເຂົາມາຫາຄວາມຈິງຂອງພຣະເຈົ້າ. ແນ່ນອນພວກເຮົາບໍ່ຄວນເຮັດຄວາມຜິດຢ່າງນີ້ເໝືອນກັນ.

ພຣະເຈົ້າຊົງສັນວ່າຈະຕັດພວກທີ່ເຊື່ອປອມ-ເພາະມັນໄດ້ທຳລາຍຄຳສັນຍາຂອງພຣະອົງ. ຕາມກົດບັດຍັດຖ້າຄົນເຮັດຢ່າງນັ້ນພຣະເຈົ້າສາມາດຍົກເລີກຄຳສັນຂອງພຣະອົງໄດ້. ຂອບພຣະຄຸນທີ່ພຣະຄັມພີໃໝ່ມີຄຳສັນຍາຢ່າງນັ້ນ ຂຶ້ນກັບພຣະໂລດທິດຂອງອົງພຣະເຢຊູ, ພຣະເຈົ້າສັນຍາໄວ້ວ່າຈະໃຫ້ຊີວິດຂອງຜູ້ທີ່ເຊື່ອສຳເຣັດ (ຟລປ 1:6). ແຕ່ພຣະເຈົ້າບໍ່ຍອມໃຫ້ຜູ້ທີ່ເຊື່ອປອມຫລືເຊື່ອສິ່ງອື່ນສຳເຣັດໄດ້. ແຕ່ຜູ້ທີ່ຍອມ ໂດຍການຖິ້ມໃຈເກົ່າແລະເອົາໃຈໃໝ່ພຣະເຈົ້າຈະເຮັດໃຫ້ທຸກສິ່ງທີ່ພຣະອົງເລີ້ມມາແລ້ວເປັນທີ່ສຳເຣັດໄດ້.

ບົດຮຽນໃນຊີວິດ

ໃນປື້ມ ໂຣມບົດ 12:2, "ຢ່າດຳເນີນຊີວິດເໝືອນຢ່າງຊາວໂລກນີ້, ແຕ່ຈົ່ງຮັບການປ່ຽນແປງຈິດໃຈ ແລ້ວອຸປນິສັຍຂອງພວກເຈົ້າຈົ່ງຈະປ່ຽນໃໝ່." ນີ້ເປັນຂ່າວທີ່ໂມເຊໄດ້ປະກາດໃຫ້ປະຊາກອນຂອງພຣະເຈົ້າຮູ້ ເວລາພວກເຂົາອອກຈາກປະເທດເອຢິບແລະເຂົ້າໄປໃນດິນແດນແຫ່ງພຣະສັນຍາ. ມັນເປັນໜ້າຄິດເພາະມີຫລາຍຢ່າງໃນຊີວິດພວກເຮົາໄດ້ເອົາປະກອບໃຊ້ເພາະສິ່ງທີ່ເຮົາເຫັນ ແລະໄດ້ຍິນຈາກສັງຄົມ.

ມີຄຳຖາມອັນໃດບໍ່ຈາກບົດຮຽນນີ້ເພື່ອພວກເຮົາຈະຍົກເອົາມາຖາມຕໍ່ປະເພນີຂອງພວກເຮົາໃນວັນນີ້?

- ຊີວິດເລີ້ມຕົ້ນຈາກການຕັ້ງຄັນເໝືອນກັບພຣະຄັມພີສອນບໍ່?
- ເຮັດຢ່າງໃດພວກເຮົາຈະຮູ້ວ່າເພດສັມພັນກັບຄົນເພດດຽວບໍ່ຖືກຕ້ອງ ແລະເປັນຄວາມຜິດບາບ ຕາມພຣະຄັມພີສອນ?
- ການເຮັດວຽກງານເພື່ອລ້ຽງຊີບເປັນສິ່ງສຳຄັນຂອງພໍ່ແມ່ທີ່ມີຕໍ່ລູກ ຫລືມັນເປັນວິທີຈຳເປັນເພື່ອສິດສອນລູກ ໃຫ້ເຮັດວຽກງານຫາລ້ຽງຊີບບໍ່?
- ຮັກສາຄຳສັນຍາໃນການແຕ່ງງານໝົດສມັຍແລ້ວບໍ່ ພວກເຮົາສາມາດເຮັດຫຍັງຕໍ່ຮ່າງກາຍກໍໄດ້ ຕາມໃຈມັກ ຫລືວ່າເພດສັມພັນນັ້ນໃຊ້ໄດ້ໃນລະຫວ່າງຜົວເມັຽເທົ່ານັ້ນ?
- ເປັນຄວາມຈິງແລະທຸກຄົນຄວນເຊື່ອຟັງພຣະຄັມພີ ແລະເອົາມາປະກອບໃຊ້ໃນຊີວິດເທົ່ານັ້ນບໍ່?

ເວລາຂ້າພະເຈົ້າໄດ້ຕຽມບົດສອນນີ້ມີຊາຍໜຸ່ມຄົນນຶ່ງອາຍຸ 20 ປີ ລາວຢູ່ໃກ້ໂບດແຕ່ບໍ່ເຄີຍມາຮ່ວມຈັກເທື່ອ. ຊາຍຄົນນີ້ມີລູກສອງຄົນ ລາວເປັນຄົນໃຊ້ຢາເສບຕິດແລະເຫລົ້າ. ດັ່ງນັ້ນແມ່ຂອງເດັກນ້ອຍໄດ້ໄລ່ລາວອອກເຮືອນ.

ທ່ານຄິດວ່າຈະໃຫ້ຄຳປຶກສາຊາຍຄົນນີ້ຢ່າງໃດ? ຂ້າພະເຈົ້າໄດ້ເລີ້ມສອນລາວຈາກບົດຮຽນຂອງໂຮງຮຽນວັນອາທິດ. ຫລັງຈາກຮູ້ຈັກບັນຫາຊຶ່ງເປັນສິ່ງທຳລາຍເພາະລາວຍອມໃຫ້ໂລກບັງຄັບ. ຂ້າພະເຈົ້າໄດ້ແບ່ງປັນຂ່າວປະເສີດເຣື່ອງອົງພຣະເຢຊູຕໍ່ລາວ ໃນທີ່ສຸດລາວກໍຮັບເອົາພຣະອົງມາເປັນພຣະຜູ້ຊ່ວຍໃຫ້ພົ້ນ. ຊາຍຄົນນັ້ນສັນຍາວ່າຈະກັບມາຮ່ວມນະມັສການພຣະເຈົ້າຊຶ່ງເປັນການເລີ້ມຕົ້ນປ່ຽນແປງຈິດໃຈຊຶ່ງເປັນວິທີທາງຂອງພຣະເຈົ້າ. ຂ້າພະເຈົ້າເຊື່ອວ່າຊາຍຄົນນັ້ນຈະມີຊີວິດໃນຄວາມບໍຣິສຸດສືບຕໍ່ໄປ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org.,by BV.

ບົດຮຽນໂຮງຮຽນວັນອາທິດ
ວັນອາທິດທີ 28 ເມສາ 2013 (4-28-2013)

ພຣະພອນຂອງການເປັນຄົນບໍຣິສຸດ

ຂໍ້ພຣະຄັມພີໃນບົດຮຽນນີ້: ລະບຽບພວກເລວີ 26:3-13,40-42,45

ຄຳຖາມຊີວິດ: ບົດຮຽນນີ້ຈະຊ່ວຍທ່ານດຳລົງຊີວິດໃນຄວາມບໍຣິສຸດ-ຊຶ່ງເປັນສິ່ງທ່ານປາຖນາ-ຊີວິດຊຶ່ງມີໝາກຜົນດີ, ພຣະເຈົ້າຊົງສະຖິດຢູ່ນຳ, ແລະຊົງໃຫ້ຄຳສັນຍາວ່າຈະໃຫ້ເຮົາຄືນດີກັບພຣະອົງ.

ພຣະຄັມພີແຫ່ງຄວາມຈິງ: ພຣະເຈົ້າສັນຍາວ່າຈະອວຍພຣະພອນແກ່ຜູ້ດຳລົງຊີວິດໃນຄວາມບໍຣິສຸດ. ບາງຄັ້ງພວກເຮົາອາດຈະຫລົງທາງຫ່າງໄກຈາກພຣະອົງ, ພຣະອົງສັນວ່າຈະໃຫ້ພວກເຮົາຄືນດີກັບພຣະອົງເມື່ອພວກເຮົາສາລະພາບບາບໂດຍການຖິ້ມໃຈເກົ່າແລະເອົາໃຈໃໝ່.

ຜົນສະທ້ອນຕໍ່ຊີວິດ: ມີຫລາຍຄັ້ງພວກເຮົາຜູ້ເປັນຄຣິສະຕຽນກໍມີຄວາມອິດເມື່ອຍໃນການທຳແຕ່ຄວາມດີ (ຄລຕ 6:9). ບົດຮຽນນີ້ໄດ້ເຕືອນພວກເຮົາເຖິງຜົນປໂຍດໃນການດຳລົງຊີວິດໃນຄວາມບໍຣິສຸດ.

ຄຳຖາມໃນຊີວິດ: ການກະທຳອັນໃດທີ່ຊ່ວຍໃຫ້ຂ້າພະເຈົ້າໄດ້ຮັບພຣະພອນຂອງພຣະເຈົ້າ?

ບົດນຳ

ໃນເວລາຂ້າພະເຈົ້າຍັງເປັນວັຍລຸ້ນ, ຂ້າພະເຈົ້າໄດ້ຄົ້ນພົບວ່າພຣະພອນຂອງການເປັນຄົນບໍຣິສຸດເຂົ້າມາໃນຊີວິດເມື່ອຕົນເອງໄດ້ຍ່າງໄປກັບພຣະເຈົ້າ, ເຊື່ອຟັງຄຳສັ່ງສອນ, ເຮັດໃຫ້ຊີວິດຂອງຕົນມີລະບຽບທີ່ສຸດ ຂ້າພະເຈົ້າກໍມີສັນຕິສຸກພາຍໃນແລະພາຍນອກ ທັງໄປເຖິງຄົນອື່ນດ້ວຍ.

ແຕ່ເມື່ອຂ້າພະເຈົ້າໄດ້ເຮັດຕາມທາງຂອງຕົນ ຫລືເຮັດຕາມຢ່າງຊາວໂລກ ຂ້າພະເຈົ້າຮູ້ວ່າຕົນເອງໄດ້ສູນເສັຍສັນຕິສຸກແລະເຮັດອັນໃດກໍບໍ່ສຳເຮັດ. ແຕ່ໃນເວລານັ້ນຂ້າພະເຈົ້າໄດ້ຮຽນຮູ້ວ່າວິທີດຽວທີ່ຈະຄືນດີກັບພຣະເຈົ້ານັ້ນແມ່ນຍອມສາລະພາບຄວາມຜິດບາບຕໍ່ພຣະເຈົ້າ.

ສັນຕິສຸກແລະຄວາມສາມາດເປັນສິ່ງທີ່ແຕກຕ່າງຢູ່ໃນພຣະພອນແລະຄວາມບໍຣິສຸດຂອງພຣະເຈົ້າ. ຊີວິດຂອງພວກເຮົາດີຂຶ້ນເມື່ອພວກເຮົາຢູ່ເພື່ອພຣະອົງ ເມື່ອເຮັດເຊັ່ນນັ້ນແລ້ວບໍ່ແມ່ນວ່າຊີວິດຂອງພວກເຮົາຈະບໍ່ມີບັນຫາອັນໃດຈັກຢ່າງ. ແຕ່ກົງກັນຂ້າມເມື່ອພວກເຮົາເດີນໄປກັບພຣະເຈົ້າແລ້ວກໍຍັງຈະພົບກັບບັນຫາຫລາຍຢ່າງຢູ່. ແຕ່ຖ້າພວກເຮົາເດີນໄປກັບພຣະເຈົ້າດ້ວຍຊີວິດທີ່ບໍຣິສຸດແລ້ວ ພຣະອົງປະທານສັນຕິສຸກແລະພຣະພອນໃຫ້ເພື່ອພວກເຮົາຈະຢູ່ໄດ້ໃນໂລກຢ່າງໝັ້ນໃຈ ເພາະພຣະອົງຊົງສະຖິດຢູ່ນຳ.

1. ເຊື່ອຟັງພຣະເຈົ້າເຮັດໃຫ້ເກີດໝາກຜົນ: (ລລວ 26:3-10)

ພຣະເຈົ້າສັນຍາວ່າພຣະອົງຈະໃຫ້ເກີດຜົນໃນຊີວິດຂອງຜູ້ທີ່ເຊື່ອຟັງຄຳສັ່ງສອນຂອງພຣະອົງ. ໝາກຜົນນັ້ນຈະເກີດຂຶ້ນໃນສາມແບບ: ນຶ່ງ, ພຣະເຈົ້າສັນວ່າຈະປະທານການເກັບກ່ຽວອັນດີຕໍ່ຜູ້ທີ່ເຊື່ອຟັງພຣະອົງ. (ລພວ 26:5, 10). ກ່ອນຈະໄດ້ໝາກຜົນດີນັ້ນພຣະອົງຈຳເປັນຕ້ອງປະທານໃຫ້ມີຝົນຕົກຕາມເວລາ. ໃນພາສາເຮັບເຣີຄຳວ່າຝົນນັ້ນເປັນຫລາຍແນວ, ໝາຍເຖິງຝົນຕົກໃນລະດູໃບໄມ້ລົ່ນແລະລະດູໃບໄມ້ປົ່ງ. ບາງຄັ້ງ ໃນພຣະຄັມເດີມພຣະເຈົ້າລົງໂທດຜູ້

ທີ່ທັນໜ້າໜີຈາກພຣະອົງໂດຍບໍ່ໃຫ້ມີຝົນຕົກລົງມາ. (ອາໂມດ 4:7; ຮັກກາຍ 1:10; ເຊຟານີຢາ 14:17). ຖ້າຝົນບໍ່ຕົກ ຕາມເວລາກໍເຫັນວ່າໝາກຜົນທັງໝົດກໍສູນເສັຽໄປ. ຖ້າປະຊາກອນຫາກເຊື່ອຟັງພວກເຂົາກໍບໍ່ໄດ້ຮັບການລົງโทດຢ່າງນີ້ ດິນແດນກໍເກີດຜົນດີແລະຕົ້ນໄມ້ກໍເກີດໝາກດົກ.

ໝາຍເຫດ: ຄຳສັນຍາຂອງພຣະເຈົ້າແມ່ນຜົນເກັບກ່ຽວອັນດີ. ແຕ່ພວກເຂົາຕ້ອງລົງມືທຳງານຫວ່ານພືດແລະເຖິງເວລາເກັບກ່ຽວແລ້ວກໍຈະໄດ້ຮັບຜົນດີເພາະພຣະເຈົ້າຊົງໃຫ້ດິນຟ້າອາກາດອຳນວຍ.

ຄຳຖາມກ່ຽວກັບພຣະພອນຂອງພຣະເຈົ້າ

*ພຣະພອນຂອງພຣະເຈົ້າເປັນລາງວັນຈາກພຣະອົງ ຫລືວ່າມັນເປັນຜົນມາຈາກຄວາມຄິດ, ຄຳເວົ້າ, ແລະເຮັດສິ່ງທີ່ພຣະເຈົ້າຊົງສັ່ງ? ເປັນຫຍັງ?

*ພຣະພອນຈາກພຣະເຈົ້ານັ້ນເປັນລາງວັນຈາກພຣະອົງໂດຍສະເພາະແມ່ນຂ້າພະເຈົ້າເອງ ຫລືແມ່ນສິ່ງປະທານໃຫ້ແກ່ຄົນອື່ນໆເພື່ອເສີ້ມສ້າງປະຊາກອນຂອງພຣະເຈົ້າໃຫ້ເຂົາເປັນພຣະພອນໄປຫາຄົນອື່ນ?

*ພຣະພອນຈາກພຣະເຈົ້ານັ້ນພວກເຮົາຄວນຊອກສະແຫວງຫາ ບາງຄົນໃນພວກເຮົາໄດ້ຮັບເພາະພວກເຮົາສແວງຫານ້ຳພຣະທັຍຂອງພຣະເຈົ້າແມ່ນບໍ່? ເປັນຫຍັງ?

*ພຣະພອນຂອງພຣະເຈົ້ານັ້ນພວກເຮົາຫາໄດ້ເອງເພາະການປະພຶດດີ ຫລືວ່າພວກເຮົາໄດ້ຮັບເພາະເປັນຍ້ອນພຣະຄຸນຂອງພຣະເຈົ້າ? ເປັນຫຍັງ?

ຂະນິດທີ<u>ສອງ</u>ຊຶ່ງເປັນຜົນດີນັ້ນແມ່ນການປົກປ້ອງຮັກສາຈາກພວກສັດຕຣູ (ລພວ 26:6-8). ພຣະອົງສັນຍາວ່າຈະປະທານ "ສັນຕິສຸກໃນແຜ່ນດິນ" ແລະມີການພັກຜ່ອນເວລາກາງຄືນ. ພຣະເຈົ້າຈະບໍ່ປະໃຫ້ສິ່ງທ້າທາຍແລະສັດມາທຳຮ້າຍ ແລະປະທານໃຫ້ມີຊັຍຊະນະຕໍ່ພວກສັດຕຣູເຖິງແມ່ນພວກປະຊາກອນຂອງພຣະອົງມີນ້ອຍ.

ຄຣິສະຕຽນຜູ້ດຳລົງຊີວິດໃນຄວາມບໍຣິສຸດກໍຍັງຖືກຂົ່ມເຫງບາງຄັ້ງກໍຖືກຂ້າເພາະພວກເຂົາໄດ້ເຊື່ອຟັງອົງພຣະເຍຊູເຈົ້າ. ພຣະເຈົ້າບໍ່ໄດ້ສັນຍາວ່າຈະບໍ່ໃຫ້ພັຍອັນຕະລາຍຫລືຄວາມຊົ່ວຮ້າຍເກີດຂຶ້ນກັບຜູ້ທີ່ເຊື່ອ. ແຕ່ພຣະອົງສອນວ່າການດຳລົງຊີວິດໃນຄວາມບໍຣິສຸດນັ້ນນຳຊັຍຊະນະມາສູ່ຊີວິດຕອນສຸດທ້າຍ.

ຂະນິດທີ<u>ສາມ</u>ຊຶ່ງເປັນຜົນດີນັ້ນຄືພຣະເຈົ້າໄດ້ໃຫ້ປະຊາກອນຂອງພຣະອົງມີເພີ້ມຂຶ້ນ (ລພວ 26ກ). ໃຫ້ຫວນກັບຄືນໄປສູ່ຈຸດປະສົງທີ່ມີຕໍ່ມະນຸດໃນສວນເອເດັນທີ່ພຣະອົງກ່າວວ່າຈະໃຫ້ປະຊາຊົນເພີ້ມທະວີຂຶ້ນເມື່ອພວກເຂົາດຳລົງຊີວິດໃນຄວາມບໍຣິສຸດ.

ຜົນດີຂອງການເປັນພະຍານເກີດຂຶ້ນເພາະພວກເຮົາໄດ້ໃຊ້ຊີວິດໃນຄວາມບໍຣິສຸດ. ເມື່ອພວກເຮົາແຍກຕົວເອງອອກເພື່ອຮັບໃຊ້ແລະຮັກສາຄຳສອນຂອງພຣະອົງ, ພວກເຮົາໄດ້ເປັນພະຍານເພື່ອພຣະເຈົ້າ ແລະບອກຄົນອື່ນວ່າພຣະອົງເທົ່ານັ້ນສົມຄວນທີ່ພວກເຮົານະມັສການ. ຜ່ານຊີວິດຂອງອັບຣາຮາມ ພຣະເຈົ້າໄດ້ສ້າງປະຊາຊາດຫລາຍຈົນບໍ່ມີຜູ້ໃດເຂົ້າໃຈໄດ້. ພວກເຮົາຜູ້ເປັນຄຣິສະຕຽນກໍເປັນພາກສ່ວນຂອງປະຊາກອນນັ້ນເພື່ອຈະບອກເຣື່ອງຂອງພຣະເຈົ້າຕໍ່ຄົນທີ່ຍັງບໍ່ຮູ້ຈັກກັບພຣະອົງ.

2. <u>ດຳລົງຊີວິດໃນທາງຂອງພຣະເຈົ້າ ພຣະອົງກໍສະຖິດຢູ່ນຳ</u>: (ລລວ 26:11-13)

ຊີວິດທີ່ມີຜົນດີນັ້ນເປັນພຣະພອນອັນປະເສີດເພາະການດຳລົງຊີວິດໃນຄວາມບໍຣິສຸດ, ພຣະພອນອັນໃຫຍ່ທີ່ສຸດນັ້ນແມ່ນການສະຖິດຂອງພຣະເຈົ້າຢູ່ນຳພວກເຮົາ. ໃນສມັຍກ່ອນພຣະເຈົ້າສະຖິດຢູ່ຖ້ຳມກາງປະຊາກອນໃນເວລາພວກເຂົາໄດ້ຕັ້ງພຣະວິຫານເປັນຜ້າເຕັນໃນປ່າກັນດານ. ເວລາພວກເຂົາໄດ້ເຮັດຜິດ ບາບພຣະອົງກໍຍັງພົບພວກເຂົາໄດ້ດ້ວຍຜ່ານການຖວາຍທີ່ພຣະວິຫານຜ້າເຕັນນັ້ນ. ພຣະວິຫານເປັນຜ້າເຕັນຕັ້ງຢູ່ກາງຄ້າຍເພາະເປັນສູນກາງທີ່ສຳ

ຄັນ. ເມື່ອພວກເຂົາໄດ້ຕັ້ງຖິ່ນຖານຖາວອນແລ້ວ ພວກເຂົາກໍສ້າງພຣະວິຫານເປັນມາດຕະຖານຊຶ່ງເປັນການເຕືອນວ່າພຣະເຈົ້າຊົງສະຖິດຢູ່ນຳ.

ໃນພຣະຄັມພີໃໝ່ກໍເຫັນພຣະພອນຂອງພຣະເຈົ້າໄປອີກຂັ້ນນຶ່ງຄືພຣະເຈົ້າໄດ້ສະຖິດຢູ່ກັບຜູ້ທີ່ເຊື່ອແຕ່ລະຄົນ. ອາຈານໂປໂລກ່າວວ່າ ພຣະເຈົ້າຈະມີພາກສ່ວນກັບຮູບປັ້ນໄດ້ຢ່າງໃດ? ພວກເຮົາຜູ້ທີ່ເຊື່ອເປັນບ່ອນສະຖິດຂອງພຣະເຈົ້າອົງຊົງພຣະຊົນຢູ່. ພຣະເຈົ້າຊົງຕັດວ່າພຣະອົງຈະສະຖິດຢູ່ຖ້າມກາງພວກເຂົາ ແລະຍ່າງໄປມາໃນພວກເຂົາ, (2 ກຣທ 6:16). ອາຈານໂປໂລໄດ້ຂຽນໄວ້ວ່າ, "ເຈົ້າທັງຫລາຍບໍ່ຮູ້ຫລືວ່າ ຮ່າງກາຍຂອງເຈົ້າເປັນວິຫານຂອງພຣະວິນຍານບໍຣິສຸດ ຜູ້ຊົງສະຖິດຢູ່ໃນພວກເຈົ້າຊຶ່ງພວກເຈົ້າໄດ້ຮັບຈາກພຣະເຈົ້າ ເຈົ້າບໍ່ແມ່ນເຈົ້າຂອງຕົວເອງ ພຣະເຈົ້າໄດ້ຊົງຊື້ທ່ານທັງຫລາຍໄວ້ແລ້ວດ້ວຍຣາຄາສູງ ເຫດສັນນັ້ນຈົ່ງຖວາຍພຣະກຽດແດ່ພຣະເຈົ້າດ້ວຍຮ່າງກາຍຂອງຕົນ." (1 ກຣທ 6:19-20). ເມື່ອພວກເຮົາດຳລົງຊີວິດກັບພຣະເຈົ້າແລ້ວ ແນ່ນອນພວກເຮົາກໍໄດ້ເຫັນການສະຖິດຢູ່ນຳຂອງພຣະອົງ ພວກເຮົາບໍ່ໄດ້ຢູ່ຄົນດຽວ.

ການສະຖິດຂອງພຣະເຈົ້າຕໍ່ພວກອິສຣາເອັນ ພຣະເຈົ້າໄດ້ເຕືອນພວກເຂົາໃຫ້ຈື່ຈຳວ່າພຣະອົງເປັນຜູ້ນຳເອົາພວກເຂົາອອກຈາກປະເທດເອຍິບ. ໝາຍຄວາມວ່າພຣະອົງໄດ້ຫັກແອກອອກຈາກຄໍພວກອິສຣາເອັນເພື່ອພວກເຂົາຈະໄດ້ມີເສຣີພາບ. ພຣະເຈົ້າບໍ່ໄດ້ຫັກແອກເພື່ອໃຫ້ພວກເຂົາມີເສຣີພາບເທົ່ານັ້ນ ແຕ່ພຣະອົງໄດ້ຫັກແອກທີ່ຜູກມັດພວກເຂົາ. ການມີຊີວິດໃນເສຣີພາບນັ້ນຕ້ອງໃຫ້ມີຊີວິດຖືກຕ້ອງ ມີເສຣີພາບຈາກການເປັນທາດທີ່ຜູກມັດນັ້ນ.

ຄຣິສະຕຽນເປັນຜູ້ເຄີຍຢູ່ໃນຄວາມບາບ, ຖືກແອກມັດຄໍ ມີຄວາມຮູ້ສຶກຜິດ, ລະອາຍ ແລະມີຊີວິດຕ່ຳຕ້ອຍ. ແຕ່ຍ້ອນການສິ້ນພຣະຊົນຂອງອົງພຣະເຢຊູທີ່ໄມ້ກາງແຂນ ພລັງຂອງການເປັນທາດນັ້ນໄດ້ຖືກທຳລາຍ. ບັດນີ້ຄຣິສະຕຽນໄດ້ດຳເນີນຊີວິດຢ່າງຖືກຕ້ອງເພາະຮູ້ວ່າແອກແຫ່ງຄວາມບາບໄດ້ຖືກທຳລາຍ. ເມື່ອພວກເຮົາດຳລົງຊີວິດໃນຄວາມບໍຣິສຸດ ພວກເຮົາກໍໄດ້ປະກາດຄວາມຈິງເຖິງເສຣີພາບເພາະອົງພຣະເຢຊູ ໄດ້ໄຖ່ພວກເຮົາທີ່ໄມ້ກາງແຂນ.

ພວກເຮົາຕ້ອງລະວັງຢ່າຄິດວ່າພຣະເຈົ້າບໍ່ໄດ້ສະຖິດຢູ່ນຳຄົນທີ່ເຮັດຜິດໂດຍບໍ່ເຊື່ອຟັງພຣະເຈົ້າ. ຄວາມຈິງມີຢູ່ວ່າພຣະເຈົ້າສັນຍາເອົາໄວ້ວ່າພຣະອົງຈະບໍ່ໜີຈາກຫລືປະຖິ້ມ (ຮຣ 13:5). ການດຳລົງຊີວິດດ້ວຍການບໍ່ເຊື່ອຟັງນັ້ນເຮັດເຮົາໃຫ້ຄິດວ່າພຣະເຈົ້າບໍ່ໄດ້ສະຖິດຢູ່ນຳ, ແຕ່ຕ້ອງເຂົ້າໃຈວ່າພຣະອົງຈະບໍ່ໜີໄປຈັກເທື່ອ.

3. <u>ການສາລະພາບບາບເຮັດໃຫ້ຄືນດີກັບພຣະເຈົ້າ</u>: (ລລວ 26:40-42,45)

ເມື່ອພຣະເຈົ້າບໍ່ໃຫ້ມີຜົນລະປູກໃນແຜ່ນດິນ ຫລືຍິ່ງໄປກວ່ານັ້ນຖ້າພຣະອົງອວ່ຍພຣະພັກອອກໄປຈາກປະຊາກອນຂອງພຣະອົງ, ພຣະອົງບໍ່ໄດ້ພຽງແຕ່ລົງโทດເທົ່ານັ້ນ. ພຣະອົງເຮັດຢ່າງນັ້ນເພື່ອປະຊາກອນຂອງພຣະອົງຈະຫັນມາຫາພຣະອົງແລະປະຖິ້ມຄວາມຜິດບາບ.

ຜູ້ທີ່ບໍ່ຍອມຮັບຄວາມບາບຂອງຕົນເອງຫລືຜົນທີ່ຕາມມາ ເປັນຄົນທີ່ບໍ່ຕຽມພ້ອມໃນການຄືນດີກັບພຣະເຈົ້າ.

ພຣະເຈົ້າຊົງເຮັດໃຫ້ຄົນເດີນອອກທາງຂອງພຣະອົງກັບຄືນດີໄດ້ ພຣະອົງບໍ່ສົ່ງຝົນຕົກລົງມາເພື່ອຜູ້ທີ່ເດີນອອກຈາກທາງພຣະອົງຈະຖິ້ມໃຈເກົ່າແລະເອົາໃຈໃໝ່. ພຣະເຈົ້າຢາກເຫັນຄົນຜິດບາບຍອມຮັບຄວາມຜິດບາບ. ສຳລັບຜູ້ທີ່ບໍ່ຍອມຮັບຄວາມຜິດຈະໄດ້ຮັບຜົນກັມຕອບແທນ.

ຄຳວ່າ "ບາບຂອງພໍ່ແມ່" ໝາຍເຖິງຄວາມສັມພັນທີ່ໄດ້ສັນຍາໄວ້ກັບປະຊາກອນຂອງພຣະອົງ. ພຣະເຈົ້າໄດ້ເລືອກເອົາພວກອິສຣາເອັນເປັນປະຊາກອນຂອງພຣະອົງ ແຕ່ເມື່ອພວກເຂົາເຮັດຜິດບາບ ຜົນສະທ້ອນບໍ່ພຽງແຕ່ຕົກຖືກເຂົາເທົ່ານັ້ນມັນໄດ້ລາມໄປເຖິງຜູ້ເກີດມາທີຫລັງນຳ. ການບໍ່ເຊື່ອຟັງແລະຕໍ່ຕ້ານພຣະເຈົ້ານັ້ນເປັນເຫດໃຫ້ພວກເຂົາໄດ້ຮັບສິ່ງບໍ່ດີເພາະເຮັດໃຫ້ພຣະເຈົ້າເສັງພຣະທັຍ. ມີຄຳເວົ້າທີ່ພຣະເຈົ້າໄດ້ເອີ້ນຄົນຜູ້ບໍ່ເຊື່ອຟັງວ່າ, "ບໍ່ໄດ້ຮັບພິທີຕັດໃນໃຈ." ພວກເຂົາອາດໄດ້ຮັບພິທີຕັດທາງຮ່າງກາຍເທົ່ານັ້ນແຕ່ທາງໃຈແລ້ວ ຍັງແຂງກະດ້າງຢູ່.

ພຣະເຈົ້າສັນຍາວ່າຖ້າພວກເຂົາຍອມຮັບ ແລະ “ໃຊ້ໜີ້ຄວາມບາບ,” ພຣະເຈົ້າຈະໃຫ້ພວກເຂົາຄືນດີເໝືອນເດີມ ແລະກາຍເປັນພາກສ່ວນຂອງພຣະເຈົ້າ. ທຸກວັນນີ້, ໜີ້ຂອງຄວາມບາບນັ້ນໄດ້ຈ່າຍແລ້ວໂດຍອົງພຣະເຢຊູທີ່ໄມ້ກາງແຂນ.

ຄຣິສະຕຽນຜູ້ຄິດວ່າຕົນເອງໄດ້ເຮັດຜິດບາບທີ່ສຸດຈົນຄິດວ່າປ່ຽນແປງບໍ່ໄດ້ນັ້ນຄວນຮູ້ເຖິດວ່າພຣະເຈົ້າມີພຣະປະສົງຢາກຄືນດີ ຂໍແຕ່ພວກເຮົາຍອມຮັບ ສາລະພາບໂດຍການຖິ້ມໃຈເກົ່າແລະເອົາໃຈໃໝ່ ພຣະເຈົ້າຈະປະທານການຄືນດີໃຫ້.

ບົດຮຽນໃນຊີວິດ

ມີບໍຣິສັດ Credit card ໄດ້ໃຊ້ປໂຍດທີ່ວ່າ, “ສະມາຊິກມີສິດທິ.” ເປັນຄວາມຈິງທີ່ວ່າຊີວິດບໍຣິສຸດນັ້ນນຳເອົາພຣະພອນຂອງພຣະເຈົ້າມາໃນຊີວິດ. ແຕ່ຢ່າເຂົ້າໃຈຜິດວ່າຜູ້ມີບັນຫານັ້ນບໍ່ໄດ້ມີຊີວິດບໍຣິສຸດ. ຕົວຢ່າງປະວັດຂອງທ່ານໂຍບໃນພຣະຄັມພີເດີມ. ເພີ່ນໄດ້ຮັບຄວາມທຸກທໍຣະມານ ແຕ່ເພີ່ນບໍ່ໄດ້ເຮັດຜິດບາບ. ໃຫ້ເຂົ້າໃຈວ່າຕາມປົກກະຕິແລ້ວການດຳລົງຊີວິບໍຣິສຸດນັ້ນຍ່ອມນຳເອົາພຣະພອນຈາກພຣະເຈົ້າ ເຂົ້າສູ່ຊີວິດຂອງຄົນທີ່ເຊື່ອ.

ຄວາມສຸກຫລືພຣະພອນເກີດຂຶ້ນເພາະມີການດຳລົງຊີວິດທີ່ບໍຣິສຸດ. ພວກເຮົາມີຊີວິດບໍຣິສຸດຍ້ອນພວກເຮົາມີຄວາມຮັກແລະຮູ້ພຣະຄຸນທີ່ພຣະເຈົ້າໄດ້ໃຫ້ພຣະເຢຊູສິ້ນພຣະຊົນເພື່ອເປັນການໄຖ່ຄວາມຜິດບາບ ທີ່ພວກເຮົາໄດ້ກະທຳມາ. ທຸກຄົນທີ່ໄວ້ວາງใจໃນອົງພຣະຄຣິດເທົ່ານັ້ນໄດ້ຮັບຄວາມພົ້ນ. ນີ້ແຫລະແມ່ນເຫດຜົນສຳຄັນທີ່ພວກເຮົາຢາກມີຊີວິດບໍຣິສຸດເພື່ອໃຫ້ພຣະເຈົ້າຊອບພຣະທັຍ. ພຣະພອນອີກອັນນຶ່ງຂອງການມີຊີວິດບໍຣິສຸດນັ້ນແມ່ນພຣະເຈົ້າໃຫ້ມີຜົນເກັບກ່ຽວຫລາຍ ແລະປະສົບກັບການສະຖິດຢູ່ນຳຂອງພຣະອົງ.

ໃຫ້ກວດເບິ່ງຕາມສິ່ງທີ່ຂຽນໄວ້ຂ້າງລຸ່ມນີ້ ແລະຄິດວ່າຄວາມບໍຣິສຸດໃນຊີວິດນັ້ນເປັນພຣະພອນຢ່າງໃດ?

- ຍອມເປັນຄົນໂສດຢ່າງບໍ່ມີເພດສັມພັນຈົນເຖິງວັນແຕ່ງງານ.
- ຮັກສາການແຕ່ງງານຂອງທ່ານໃຫ້ດີໂດຍສະເພາະຈາກຄົນຕ່າງເພດເພື່ອບໍ່ໃຫ້ມີການຫລິ້ນຊູ້ເກີດຂຶ້ນ
- ໃຫ້ພຣະກຽດແດ່ພຣະເຈົ້າໂດຍຖວາຍເວລາແລະຊັບສິນ.
- ເອົາໃຈໃສ່ສອນລູກເຕົ້າໃຫ້ມີຄວາມເຊື່ອດີ.
- ຮັກສາຈິດໃຈຈາກການເບິ່ງພາບທີ່ບໍ່ດີຈາກຊີເນມາ, ປຶ້ມ, ແລະໂທຣະທັດ.

ມີຜົວເມັຽຄູ່ນຶ່ງໄດ້ເລົ່າເຣື່ອງເຈັບປວດໃນຊີວິດໃຫ້ຂ້າພະເຈົ້າຟັງເພາະພວກເຂົາໄດ້ຫັນໜີຈາກພຣະເຈົ້າ. ຊີວິດຂອງພວກເຂົາບໍ່ໄດ້ໃກ້ຊິດກັບພຣະເຈົ້າ ພວກເຂົາພາກັນເຮັດຕາມใຈຈົນເປັນເຫດໃຫ້ທັງສອງພົບກັບການຢ່າຮ້າງຫຼັງຈາກແຕ່ງງານເປັນເວລາ 16 ປີ. ໃນເມື່ອມີລູກນຳກັນການແຍກທາງນັ້ນກໍເຮັດໃຫ້ຜູ້ເປັນລູກໄດ້ຮັບຄວາມເຈັບປວດ. ເຖິງແມ່ນພວກເຂົາຂາດພຣະພອນຂອງພຣະເຈົ້າ ແຕ່ພວກເຂົາຍອມສາລະພາບຜິດບາບຕໍ່ພຣະເຈົ້າແລະກໍໄດ້ຮັບການອະພັຍແລະຄືນດີ. ພຣະເຈົ້າໄດ້ຊ່ວຍພວກເຂົາເອົາຊີວິດເຂົ້າມາຫາກັນ. ໃນທີ່ສຸດພວກເຂົາກໍຕົກລົງເຫັນດີນຳກັນແລະກໍຂໍແຕ່ງງານຄືນເພື່ອເລີ້ມຊີວິດໃໝ່.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org.,by BV.

ບົດຮຽນໂຮງຮຽນວັນອາທິດ
ວັນອາທິດ ທີ 5 ພຶສພາ 2013 (5-5-2013)

ການຈັດຕຽມຄວາມສັມພັນທີ່ສຳຄັນທີ່ສຸດໃຫ້ຖືກຕ້ອງ

ຂໍ້ພຣະຄັມພີໃນບົດຮຽນ: ສຸພາສິດ 3:5-8,13-18, 31-35

ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານໄດ້ຢ່າງໃດ

ບົດຮຽນນີ້ສາມາດນຳພາທ່ານໃຫ້ວາງใจໃນພຣະຜູ້ເປັນເจົ້າ, ຊຶ່ງຈະຊ່ວຍທ່ານໃຫ້ຈັດຕັ້ງແລະລຽງລຳດັບສິ່ງສຳຄັນຕົ້ນຕໍໃນຄວາມສັມພັນຕ່າງໆຂອງທ່ານ.

ບົດຮຽນນີ້ເວົ້າກ່ຽວກັບຫຍັງ

ພວກເຮົາສາມາດເວົ້າກ່ຽວກັບຄວາມສັມພັນຕ່າງໆ ໂດຍປາສຈາກການເວົ້າກ່ຽວກັບຄວາມສັມພັນຂອງພວກເຮົາກັບພຣະເจົ້າ. ຄວາມສັມພັນຂອງພວກເຮົາກັບພຣະອົງສະທ້ອນຕໍ່ຄວາມສັມພັນທັງໝົດຂອງພວກເຮົາ.

ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ

ໃນຄວາມເປັນຈິງອັນທ່ຽງແທ້ການມີຄວາມສັມພັນທີ່ຖືກຕ້ອງກັບພຣະເจົ້າແມ່ນພື້ນຖານຂອງການທີ່ໄດ້ສັມພັນຢ່າງຖືກຕ້ອງກັບຄົນອື່ນໆ. ຄວາມສັມພັນທີ່ຖືກຕ້ອງກັບພຣະເจົ້າມີຜົນສະທ້ອນໃນທາງດີຕໍ່ຄວາມສັມພັນຕ່າງໆ.

ຄຳຖາມສຳລັບຊີວິດ

ເຮົາສາມາດເອົາສິ່ງສຳຄັນທີ່ສຸດຂອງເຮົາໃນຄວາມສັມພັນທີ່ຖືກຕ້ອງນັ້ນໄດ້ຢ່າງໃດ?

ແມ່ນຫຍັງຄືກິດລະບຽບນ້ຳເບີນຶ່ງໃນຊີວິດຂອງທ່ານ? ຖ້າຖາມຄົນເປັນກຸ່ມຫຼືໃນວົງການເຄືອຂ່າຍໃຫ້ສັງເກດຄຳຕອບ ປົກກະຕິພວກເຂົາຈະກ່າວເຖິງຄວາມສັມພັນກັບມະນຸດ. ບາງຄົນກໍຈະບອກວ່າ "ເຮັດດີສເມີເພາະວ່າແຕ່ລະຄົນກໍລົ້ມລຸກຄຸກຄານກັບບາງຢ່າງ" ຫຼື "ຂ້ອຍບໍ່ເຄີຍໄດ້ພົບຜູ້ໃດທີ່ຂ້ອຍບໍ່ໄດ້ຮຽນຮູ້ບາງຢ່າງຈາກຜູ້ນັ້ນ." ຄຳເວົ້າເຫຼົ່ານີ້ຂາດການກ່າວເຖິງບັນຫາອັນເປັນພື້ນຖານອັນຫຼວງຫຼາຍ. ກົດລະບຽບນ້ຳເບີນຶ່ງຂອງຊີວິດຄວນຈະຈົດຈ່ໃສ່ຄວາມສັມພັນກັບພຣະເจົ້າ ຊຶ່ງແມ່ນພື້ນຖານຂອງຄວາມສັມພັນທັງໝົດຕໍ່ເພື່ອນມະນຸດ. ພວກເຮົາບໍ່ສາມາດຮັກຄົນອື່ນຢ່າງແທ້ຈິງໄດ້ຈົນກວ່າພວກເຮົາຮັກພຣະອົງ. ກົດລະບຽບນ້ຳເບີສອງຂອງຊີວິດຄືຮັກຄົນອື່ນໆ (ມາຣະໂກ 12:28-32).

ຂນະທີ່ທ່ານສຶກສາບົດຮຽນນີ້, ທ່ານຈະໄດ້ຮຽນຮູ້ວ່າຄວາມສັມພັນຂອງພວກເຮົາກັບພຣະເจົ້າເໜືອກວ່າຄວາມສັມພັນອື່ນໃດທັງປວງ. ການສຶກສານີ້ຈະຊ່ວຍທ່ານໃຫ້ເຊື່ອວາງใจໃນພຣະຜູ້ເປັນເจົ້າຊຶ່ງເປັນທາງໃນການລຽງລຳດັບໃໝ່ຂອງຄວາມສັມພັນທັງປວງຂອງພວກເຮົາ.

<u>ສຶກສາພຣະຄັມພີ</u>

1. <u>ເຊື່ອວາງใจພຣະເจົ້າດ້ວຍສຸດใจຂອງທ່ານ</u> (ສຸພາສິດ 3:5-8)

ບາງຄົນໄດ້ບັນລະຍາຍເຖິງຄວາມສັມພັນຕ່າງໆໃນສມັຍໃໝ່ນີ້ວ່າ "ເຫັບສອງໂຕແລະບໍ່ມີໝາ." ເມື່ອຟັງເບິ່ງ ປໂຍກນີ້ເໝືອນກັບວ່າເປັນຄຳເວົ້າແບບເຜີນໆ ແຕ່ມັນໄດ້ຍົກເຣື່ອງນີ້ຂຶ້ນມາໃຫ້ເຫັນວ່າແມ່ນບ່ອນໃດທີ່ພວກເຮົາພົບ ພລັງຄວາມຮັກ. ໃນທາງກົງກັນຂ້າມກັບເພງດັງໃນຍຸກ 1960, ຮັກ (ແບບມະນຸດ) ບໍ່ແມ່ນສິ່ງທັງໝົດທີ່ທ່ານຕ້ອງການ. ຖ້າຫາກເທີນຫ່າງຈາກຄວາມສັມພັນອັນດີກັບພຣະເຈົ້າແລ້ວ ມະນຸດຜູ້ມີຄວາມຈຳກັດກໍບໍ່ມີພລັງພໍທີ່ຈະມີຄວາມສັມ ພັນອັນຍາວນານໄດ້.

ແລະພວກເຮົາຈະພົບພລັງຢູ່ບ່ອນໃດທີ່ຈະເປັນແຫຼ່ງບຳລຸງຫຼໍ່ລ້ຽງຄວາມສັມພັນທີ່ຈຳເປັນທັງປວງຂອງຊີວິດ? ຈະພົບໄດ້ໃນພຣະເຈົ້າເທົ່ານັ້ນ. ແລະຄວາມສັມພັນທີ່ດີພຣະເຈົ້າຈະເລີ່ມຕົ້ນຢູ່ທີ່ໃດ? ອີງຕາມຂໍ້ທີ່ 5, ມັນເລີ່ມຕົ້ນທີ່ ພວກເຮົາ "ວາງໃຈເຊື່ອພຣະຜູ້ເປັນເຈົ້າ."

ນຶ່ງໃນຄວາມໝາຍຂອງຄຳວ່າວາງໃຈເຊື່ອໃນພາສາເຮັບເຣີແມ່ນ "ບໍ່ຫ່ວງກັງວົນເລີຍ." ເຊື່ອໝັ້ນຢ່າງຕາຍ ໃຈ, ບໍ່ແມ່ນຢວກຫຼົ້ນ ນີ້ຄືຈຸດໝາຍ. ການວາງໃຈໃນບາງຢ່າງກໍຄືໝັ້ນໃຈໃນສິ່ງນັ້ນ ເກືອບວ່າຈະບໍ່ໃຫ້ມີຄວາມຄິດອັນ ທີສອງເຂົ້າມາແຊກຊ້ອນ. ການເຊື່ອວາງໃຈພຣະເຈົ້າດ້ວຍສຸດໃຈຂອງທ່ານມີຄວາມໝາຍວ່າທ່ານເຊື່ອໃນແກນກາງໃນ ຕົວທ່ານວ່າມີແຕ່ພຣະອົງເທົ່ານັ້ນກໍພຽງພໍແລ້ວ.

ເມື່ອທ່ານປະເຊີນກັບການທົດລອງ ເປັນພິເສດແມ່ນກ່ຽວກັບຄວາມສັມພັນ, ຈົ່ງທ້າທາຍຕົວທ່ານເອງກັບ ຄວາມຄິດອັນນີ້: "ຖ້າຂ້ອຍຫາກຍອມຕໍ່ສິ່ງນີ້, ແມ່ນຂ້ອຍກຳລັງເວົ້າກັບພຣະເຈົ້າວ່າ 'ພຣະອົງຍັງບໍ່ພຽງພໍສຳລັບຂ້ານ້ອຍ, ຂ້ານ້ອຍກໍຕ້ອງການສິ່ງນີ້ເໝືອນກັນ.' "

ບາງຄົນກໍບໍ່ໄດ້ຄິດວ່າເປັນການສລາດໃນການດຳລົງຊີວິດໃນທາງນັ້ນ. ບາງຄົນກໍສລຸບເອົາວ່າມັນບໍ່ເປັນການ ສລາດທີ່ຈະເອົາໄຂ່ທັງໝົດໄວ້ໃນກະຕ່າໜ່ວຍດຽວ-ຄືເອົາຄວາມຈິງຮັກພັກດີທັງໝົດຂອງທ່ານໃຫ້ຄົນນຶ່ງຫຼືສິ່ງນຶ່ງ ການ ສລຸບເອົາແບບນີ້ກໍແມ່ນນການ "ໄວ້ວາງໃຈໃນຄວາມເຂົ້າໃຈຂອງຕົວເອງ." ພຣະຄັມພີທ້າທາຍພວກເຮົາວ່າ: ຢ່າຄິດຖືຕົວວ່າຕົນເອງເປັນຄົນສລາດ. ຄວາມເຂົ້າໃຈບໍ່ໄດ້ໝາຍເຖິງພາກສ່ວນທາງຄວາມຄິດເທົ່ານັ້ນແຕ່ວ່າມັນກວມລວມທັງ ຄຸນຄ່າແລະມາດຕະຖານຂອງສ່ວນບຸກຄົນນຳ. ຄວາມຄິດທີ່ຖືກແລະຜິດຂອງແຕ່ລະຄົນຈະຕ້ອງຢູ່ໃຕ້ພຣະບັນຊາຂອງ ພຣະເຈົ້າ.

ນີ້ຄືຄວາມສັມພັນສອງສາມຢ່າງທີ່ເປັນຄວາມຈິງທີ່ບໍ່ຕ້ອງພິສູດ ທີ່ພົບໃນພຣະຄຳຂອງພຣະເຈົ້າ: (1) ຢ່າເອົາ ຜູ້ນຶ່ງຜູ້ໃດໄວ້ກ່ອນໜ້າເຮົາ, ແມ້ກະທັ້ງຄອບຄົວຂອງທ່ານ (ລູກາ 14:25-26). (2) ຈົ່ງຈຳໄວ້ວ່າພຽງແຕ່ພາກສ່ວນນຶ່ງ ເທົ່ານັ້ນຂອງຄວາມສັມພັນຢູ່ໃນກຳມືຂອງທ່ານ (ໂຣມ 12:18). (3) ຖ້າວ່າພຣະເຈົ້າສະຖິດຢູ່ກັບທ່ານ, ທ່ານບໍ່ໄດ້ຢູ່ ໂດດດ່ຽວ ເຖິງແມ່ນທຸກຄົນໄດ້ປະຖິ້ມທ່ານ (2 ຕິໂມທຽວ 4:16-17). (4) ບາງຄັ້ງທ່ານອາດຈະຮັກຜູ້ໃດຜູ້ນຶ່ງຫຼາຍ ແຕ່ ພວກເຂົາຕອບສນອງຄືນພຽງເລັກໜ້ອຍຕໍ່ຄວາມຮັກຂອງທ່ານ (2 ໂກຣິນ�โທ 12:15).

ການມີຄວາມສັມພັນກັບຜູ້ອື່ນສາມາດມີຄວາມຫຍຸ້ງຍາກຕໍ່ການຕິດຕາມເບິ່ງໃນບາງເວລາ. ອະນຸຍາດໃຫ້ ພຣະເຈົ້ານຳພາທ່ານໃນທາງທີ່ຖືກຕ້ອງ. ສຶກສາພຣະຄຳຂອງພຣະອົງແລະຄົ້ນຫາການຊົງນຳພານີ້ແລະຫຼັງຈາກນັ້ນສະ ແດງຄວາມໄວ້ວາງໃຈຂອງທ່ານໃນພຣະອົງໂດຍຜ່ານການເຊື່ອຟັງຄວາມ. ພຣະເຈົ້າອົງຊົງຣິດຂອງຈັກກະວານນີ້ຊົງ ສັນຍາໃນການປິ່ນປົວໃຫ້ຫາຍດີແລະການເພີ້ມພລັງໃຫ້ແກ່ຜູ້ທີ່ເດີນຕາມທາງຂອງພຣະອົງ. ພວກເຮົາສາມາດເອົາຄຳ ສັນຍານີ້ໄປປະຕິບັດໃຊ້ຢ່າງປອດພັຍໃນຄວາມສັມພັນຕ່າງໆຂອງພວກເຮົາ ຖ້າພວກເຮົາຫາກຢຳເກງພຣະຜູ້ເປັນເຈົ້າ ແລະຫັນໜີຈາກຄວາມຊົ່ວຮ້າຍ.

2. <u>ຄົ້ນຫາຜົນປໂຍດໃນສະຕິປັນຍາຂອງພຣະເຈົ້າ</u> (ສຸພາສິດ 3:13-18)

ຕາມຄວາມຈິງແລ້ວ, ພວກເຮົາຊອກຫາສອງຢ່າງຈາກຄວາມສັມພັນຕ່າງໆຂອງພວກເຮົາ. ພວກເຮົາຕ້ອງ ການຢາກມີຄວາມສຸກຈາກຜົນຂອງຄວາມສັມພັນແລະພວກເຮົາຫວັງວ່າຄວາມສັມພັນນັ້ນຈະຍືນນານ ແນ່ນອນທີ່ສຸດ

ບໍ່ແມ່ນສິ່ງທີ່ຜິດໃນການຊອກຫາສິ່ງເຫຼົ່ານີ້. ແມ່ນຫຍັງທີ່ເຮັດໃຫ້ຄວາມສັມພັນຕ່າງໆ ເຕັມດ້ວຍຄວາມຊົມຊື່ນຍິນດີ ແລະເຮັດໃຫ້ມັນຍືດເຍື້ອຍາວນານ? ຄວາມສັມພັນຕ່າງໆ ແນວນີ້ແມ່ນມີໄວ້ສຳລັບຜູ້ທີ່ປະຕິບັດດ້ວຍສະຕິປັນຍາຂອງ ພຣະເຈົ້າ.

ຈົ່ງສັງເກດຂໍ້ພຣະຄັມພີທີ່ໃຊ້ໃນຂໍ້ນີ້ຊຶ່ງຂຶ້ນຕົ້ນແລະຈົບລົງໃນຄຳວ່າ "ຄວາມສຸກ" ແລະມັນກໍແມ່ນຜົນອອກມາ ຈາກສະຕິປັນຍາໂດຍກົງ ບໍ່ຮູ້ວ່າເປັນດ້ວຍເຫດໃດບາງຄົນຈຶ່ງຂາດຈາກການພົວພັນກັບສິ່ງເຫຼົ່ານີ້.

ຄວາມຈິງ ຜູ້ທີ່ພົບສະຕິປັນຍາແລະຜູ້ທີ່ມີຄວາມເຂົ້າໃຈແມ່ນໄດ້ປໂຍດຢ່າງໃຫຍ່ຫຼວງໃນຫຼາຍທາງ. ພວກເຮົາ ພົບຄວາມສຸກໃນການຕິດຕາມທິດທາງຂອງພຣະເຈົ້າ ແລະປະຕິບັດຕາມຄຳແນະນຳຂອງພຣະອົງດ້ວຍການເຊື່ອຟັງ ພວກເຮົາບໍ່ຄວນຈະສລຸບເອົາວ່າເມື່ອພົບສະຕິປັນຍາແລ້ວພວກເຮົາຈະປາສຈາກຄວາມທຸກລຳບາກແລະປາສຈາກບັນ ຫາທີ່ຂ້ອງກ່ຽວກັບຊີວິດ. ສະຕິປັນຍາໄດ້ສັນຍາເຖິງທາງທີ່ຈະຮັບມືກັບປະສົບການຕ່າງໆ ເຫຼົ່ານີ້.

ການມີສະຕິປັນຍາຈາກພຣະເຈົ້າແມ່ນມີຜົນປໂຍດ ແລະຊ່ວຍພວກເຮົາເຂົ້າໃຈວ່າແມ່ນຫຍັງທີ່ມີຄຸນຄ່າອັນ ແທ້ຈິງໃນຊີວິດ. ສະຕິປັນຍາແມ່ນທັສນະ(ການເບິ່ງເຫັນ)ຂອງພຣະເຈົ້າໃນທຸກສິ່ງຢ່າງຂອງຊີວິດແລະສະຖານະການ ຕ່າງໆ. ອັນນີ້ມີຄວາມສຳຄັນເພາະວ່າທັສນະຈະຂັບເຄື່ອນທຸກສິ່ງຢ່າງ. ການມີມຸມມອງທີ່ແຈ່ມແຈ້ງຕໍ່ສະຖານະການ ນຳເອົາພລັງໃນການຮັບມືກັບພວກມັນບໍ່ວ່າຈະອຸດົມຮັ່ງມີຫຼືຍາກລຳບາກກໍຕາມ. ໃນຄາວລຳບາກ, ສະຕິປັນຍາຂອງ ພຣະເຈົ້າສອນພວກເຮົາວ່າໃຫ້ອົດທົນ ໂດຍການຮູ້ຈັກວ່າບັນຫາກໍຍັງມີຈຸດຈົບ. ໃນຍາມດີ, ສະຕິປັນຍາສອນພວກເຮົາ ວ່າໃຫ້ຖ່ອມຕົວ, ໃຫ້ຈຳໄວ້ວ່າສະຖານະການຕ່າງໆຂອງຜູ້ນຶ່ງສາມາດປ່ຽນແປງຢ່າງໄວ.

ສິ່ງທັງປວງທີ່ພວກເຮົາປາຖນາໃນຊີວິດ ສະຕິປັນຍາແມ່ນສິ່ງສູງສຸດທີ່ຈຳເປັນຕ້ອງຊອກຫາ ບໍ່ມີອັນໃດປຽບ ປານໄດ້. ຄົນສ່ວນຫຼາຍປາຖນາທີ່ຈະຮັກຄົນອື່ນແລະຢາກຈະໃຫ້ຄົນອື່ນຮັກຕົນ. ຖ້າຫາກເຫັນຫ່າງຈາກສະຕິປັນຍາ ແລ້ວ ຄວາມຮັກຂອງບາງຄົນທີ່ເອົາໃຫ້ຄົນອື່ນສາມາດເປັນເຄື່ອງທຳລາຍຕໍ່ທຸກຝ່າຍທີ່ມີສ່ວນຮ່ວມໄດ້.

ທາງທັງປວງແຫ່ງສະຕິປັນຍາແມ່ນສັນຕິສຸກ. ຂນະທີ່ພວກເຮົາເຊື່ອວາງໃຈພຣະເຈົ້າ ພຣະອົງນຳພາພວກເຮົາ ໃນທາງທີ່ຖືກຕ້ອງ, ຊຶ່ງໄດ້ຖືກໝາຍໄວ້ໂດຍຄວາມປອງດອງແລະສັນຕິສຸກ. ເມື່ອສະຕິປັນຍາແຫ່ງພຣະຄັມພີປາກົດໃນ ຄວາມສັມພັນແລະພວກເຮົາຮັບຮູ້ທາງຕ່າງໆຂອງພຣະເຈົ້າ ການຂັດແຍ້ງອາດຈະບໍ່ເປັນອັນຕະລາຍເທົ່າໃດແລະສາ ມາດຫາທາງແກ້ໄຂໄດ້. ອັນນີ້ຈະເປັນຄວາມຍິນດີຂອງພວກເຮົາແລະເປັນສ່ວນປະກອບແກ່ພວກເຮົາໃນການຖວາຍ ກຽດແດ່ພຣະເຈົ້າ ຊຶ່ງເປັນກຸນແຈໃນຄວາມສັມພັນຕ່າງໆ ຂອງພວກເຮົາ.

ໂຊໂລໂມນວາດພາບສະຕິປັນຍາວ່າ "ກົກໄມ້ແຫ່ງຊີວິດ." ສິ່ງນີ້ອາດຈະເປັນຕົ້ນຕໍຂອງຄຳອຸປະມາສຳລັບ ການຢູ່ດີກິນດີ, ສ່ວນຫຼາຍແມ່ນອ້າງເຖິງຄວາມທຸກທໍຣະມານທີ່ ອາດາມແລະເອວາໄດ້ສູນເສັຍ "ອັມມະຕະ" ຫລືຊີວິດ ອັນຕລອດໄປ ໃນສວນເອເດນເພາະວ່າພວກເຂົາໄດ້ເປັນກະບົດຕໍ່ສູ້ພຣະເຈົ້າ (ປະຖົມມະການ 3:22-24). ສະຕິປັນ ຍາຂອງພຣະເຈົ້າຊີ້ໃຫ້ພວກເຮົາໄປສູ່ສິ່ງທີ່ຕລອດໄປເປັນນິດ. ເຖິງແມ່ນຄວາມສັມພັນຂອງມະນຸດຈະຍິ່ງໃຫຍ່ແຕ່ໃນ ທີ່ສຸດກໍຈະຮ້າຍແຮງລົງ. ສະຕິປັນຍາຊີ້ໃຫ້ພວກເຮົາໄປສູ່ຄວາມລອດພົ້ນອັນຕລອດໄປເປັນນິດໃນພຣະຄຣິດ. ແມ່ນ ຫຍັງອີກແດ່ທີ່ອາດເປັນຜົນປໂຍດໃຫ້ແກ່ພວກເຮົາຫຼາຍໄປກວ່ານີ້.

3. <u>ຈົດຈ່ໃສ່ທາງຂອງພຣະເຈົ້າ</u> (ສຸພາສິດ 3:31-35)

ບາງຄົນເວົ້າວ່າພວກເຮົາຖືກຊົງສ້າງຂຶ້ນໃຫ້ມີນິສັຍປະຈຳຕົວ, ຊຶ່ງໝາຍຄວາມວ່າມະນຸດທັງປວງມີນິສັຍໃນການ ແຂ່ງຂັນ. ບາງຄົນກໍເວົ້າວ່າພວກເຮົາຖືກຊົງສ້າງໃຫ້ມີຂອບເຂດຈຳກັດ, ຊຶ່ງມີຄວາມໝາຍວ່າເຮົາຍອມໃຫ້ການປະພຶດ ຂອງຜູ້ອື່ນຄວບຄຸມການປະພຶດຂອງເຮົາເອງ. ບັນຫາມາສູ່ຜູ້ທີ່ເຊື່ອເມື່ອພວກເຮົາເອົາການປະພຶດຂອງພວກເຮົາເຮັດ ຕາມການປະພຶດຂອງຜູ້ທີ່ບໍ່ດຳເນີນຕາມທາງຂອງເຈົ້າ-ພວກບໍ່ເຊື່ອ.

ມີຄົນຫ້າປະເພດທີ່ສາມາດພົບຢູ່ໃນຂໍ້ຫ້າມຂອງພຣະເຈົ້າ "ບໍ່ໃຫ້ຮ່ຽນແບບຕາມ." ຊຶ່ງລວມທັງຄົນໂຫດຮ້າຍ,

ຄົນຄິດໂກງ, ຄົນຊົ່ວຮ້າຍ, ພວກທີ່ເຍາະເຍີ້ຍ, ແລະຄົນໂງ່. ການດຳເນີນໃນທາງເຫຼົ່ານີ້ແມ່ນການຕັດສິນໃຈເລືອກທີ່ໜ້າເສັຍໃຈ, ພວກເຮົາສາມາດເລືອກເອົາແບບຢ່າງການປະພຶດໂດຍປາສຈາກຜົນສະທ້ອນທັງໝົດຕໍ່ສະຕິປັນຍາຂອງການເລືອກຂອງພວກເຮົາ.

ໄພ່ພົນຂອງພຣະເຈົ້າມີຄວາມຮູ້ສຶກໄວໃນຄວາມອິດສາຕໍ່ບັນດາຜູ້ທີ່ບໍ່ເຊື່ອພຣະເຈົ້າ. ເພງສັນລະເສີນບົດທີ 73 ເປັນຕົວຢ່າງເຖິງຄວາມອິດສາຕໍ່ຜູ້ທີ່ບໍ່ໃຫ້ກຽດພຣະເຈົ້າ. ເພາະວ່າພຣະເຈົ້າໄດ້ເຕືອນພວກເຮົາກ່ຽວກັບຄວາມອິດສາ, ມັນກໍເປັນທີ່ແຈ້ງແລ້ວວ່າເມື່ອເຮົາມີຄວາມຮູ້ສຶກໄວມັນກໍກາຍເປັນການທົດລອງ. ການແກ້ໄຂໄດ້ພົບຢູ່ໃນການປັກຕາເບິ່ງທາງຂອງພຣະເຈົ້າ ໃນສິ່ງທີ່ພຣະອົງໃຫ້ຄຸນຄ່າແລະສັນຍາວ່າຈະອວຍພອນ-ບໍ່ແມ່ນຄວາມຮຸ່ງເຮືອງທີ່ປາກົດເຫັນ ແລະວິຖີຊີວິດທີ່ບໍ່ມີຄວາມຮັບຜິດຊອບຂອງຄົນອະທັມ.

ພຣະເຈົ້າຊົງເຫັນການປະພຶດຕົວແບບນຶ່ງໂດຍສະເພາະ ຊຶ່ງເປັນສິ່ງຊີ້ບອກຫົວໃຈຂອງຜູ້ນັ້ນວ່າສາມາດກຽດຊັງໄດ້. ພວກເຮົາບໍ່ສາມາດມີພຣະອົງໃຫ້ເປັນເພື່ອນແລະດຳລົງຊີວິດໂດຍເອົາຕົວຢ່າງຂອງຜູ້ທີ່ບໍ່ມີພຣະເຈົ້າ. ບັນດາຜູ້ທີ່ພວກເຮົາເອງກໍບໍ່ຮູ້ຈັກ ເຊັ່ນພວກດາຣາແລະນັກບັນເທີງທີ່ມີຊື່ສຽງ ອາດຈະຊັກຈູງໃຈພວກເຮົາ. ສ່ວນຫຼາຍແມ່ນພວກທີ່ເຮົາຮູ້ຈັກດີນັ້ນແຫລະທີ່ຊັກຈູງພວກເຮົາ.

ຊີວິດທີ່ພຣະເຈົ້າອອກແບບໃຫ້ພວກເຮົາດຳຣົງຢູ່ຊຶ່ງລວມທັງການຍອມຮັບເອົາຄວາມເປັນຈິງຂອງການຖ່ອມຕົວ. ຜົນປາກົດວ່າພຣະອົງ "ປະທານພຣະຄຸນແກ່ຜູ້ທີ່ຖ່ອມຕົວລົງ." ບໍ່ເຄີຍມີຜູ້ໃດກາຍເປັນຄົນຖ່ອມຕົວໂດຍບັງເອີນ. ການດຳຣົງຊີວິດຢ່າງຖ່ອມຕົວແມ່ນການເລືອກໃນການເດີນຕາມທາງຂອງພຣະເຈົ້າ ແລະຕົວຢ່າງທີ່ໄດ້ຕັ້ງໄວ້ໂດຍອົງພຣະຄຣິດເອງ. ການເລືອກອັນນີ້ແມ່ນສະແດງອອກເຖິງການຈົດຈ່ໃສ່ພຣະເຈົ້າສຳລັບຊີວິດ. ການຕັດສິນໃຈອັນນີ້ແມ່ນການປະຕິເສດວິຖີຊີວິດຂອງບັນດາຜູ້ທີ່ບໍ່ມີພຣະເຈົ້າ ບໍ່ວ່າຈະຖືກຮຽກຮ້ອງສໍ່າໃດກໍຕາມ. ນັ້ນຄືການດຳລົງຊີວິດຂອງຜູ້ທີ່ສລາດ-ແລະຜູ້ທີ່ເຮັດຢ່າງນີ້ກໍຈະມີປະສົບການກັບພຣະພອນຂອງພຣະເຈົ້າດ້ວຍກຽດສັກສີ.

ບົດຮຽນຊີວິດ

ຫຼາຍຄົນ ໃນການຄົ້ນຄວ້າຫາຄວາມໝາຍຂອງພວກເຂົາ ໄດ້ສ້າງຄວາມສັມພັນຈອມປອມຂຶ້ນວ່າແມ່ນຄຳຕອບ. ພວກເຂົາຊອກຫາເພື່ອຢາກພົບຄວາມເພິ່ງພໍໃຈໂດຍຜ່ານຄົນອື່ນໆ ແຕ່ທີ່ຈິງມີແຕ່ຄວາມສັມພັນກັບພຣະເຈົ້າເທົ່ານັ້ນທີ່ສາມາດນຳມາໃຫ້ໄດ້ ຄວາມສັມພັນຈອມປອມບໍ່ພຽງແຕ່ໄຮ້ປໂຍດເທົ່ານັ້ນ ແຕ່ຍັງເປັນອັນຕະລາຍອີກດ້ວຍ. ເມື່ອສະໝໍ່ທາກບໍ່ຢັ່ງເລິກລົງໃນຄວາມວາງໃຈໃນພຣະເຈົ້າແລ້ວ ການຄົ້ນຄວ້າຫາຄວາມໝາຍໂດຍຜ່ານຄວາມສັມພັນຂອງມະນຸດສາມາດກາຍເປັນລະບົບຂ້າທາດ ນີ້ຄືສິ່ງທີ່ຈະປາກົດອອກມາໃຫ້ເຫັນ:

- ❖ ພວກເຮົາຊອກຫາທາງທີ່ຈະໃຫ້ພໍໃຈຄົນອື່ນໃນຄວາມສັມພັນ ເພາະວ່າພວກເຮົາຕ້ອງການຄວາມຮັກຂອງພວກເຂົາ ຢ່າງສິ້ນຄວາມຫວັງ.
- ❖ ຄົນອື່ນໄດ້ບອກພວກເຮົາໃຫ້ປະພຶດຕົນໃນທາງທີ່ເປັນພັຍ ຊຶ່ງຂັດແຍ່ງກັບຄຸນຄ່າຂອງພວກເຮົາຫຼືບໍ່ເປັນຈິງ.
- ❖ ເຖິງແມ່ນພວກເຮົາຮູ້ດີກວ່ານັ້ນ ພວກເຮົາກໍຍັງຍອມໃຫ້ພວກເຮົາເອງເຂົ້າໃນຄວາມກົດດັນເຮັດໃນສິ່ງທີ່ບໍ່ແມ່ນນ້ຳພຣະທັຍພຣະເຈົ້າ ເພາະວ່າພວກເຮົາຢ້ານໄດ້ຢູ່ຢ່າງໂດດດ່ຽວ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA

ບົດຮຽນໂຮງຮຽນວັນອາທິດ

ວັນອາທິດທີ 12 ພຶສພາ 2013 (5-12-2013)

ການສ້າງຄອບຄົວທີ່ຂ້ອຍຕ້ອງການ

ຂໍ້ພຣະຄັມພີໃນບົດຮຽນ: ສຸພາສິດ 31:10-12,15-20, 25-31

ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານໄດ້ຢ່າງໃດ

ບົດຮຽນນີ້ສາມາດຊ່ວຍທ່ານໃຫ້ສ້າງຄອບຄົວທີ່ທ່ານຕ້ອງການ.

ບົດຮຽນນີ້ເວົ້າກ່ຽວກັບຫຍັງ

ເມັງແລະແມ່ທີ່ດີໄດ້ຖືກຍ້ອງຍໍສັຣເສີນໃນພຣະທັມສຸພາສິດບົດທີ 31, ຄຳສັ່ງສອນທີ່ສາມາດໜູນນ້ຳໃຈພໍ່ແມ່ທຸກຄົນ (ບໍ່ພຽງແຕ່ແມ່) ໃນວິທີການນຳພາພາຍໃນຄອບຄົວຂອງພວກເຂົາເຈົ້າ.

ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ

ມີຫຼາຍໆຄອບຄົວທີ່ແຕກສລາຍແລະຄົນກໍຕ້ອງການຄວາມຊ່ວຍເຫຼືອເພື່ອເຮັດໃຫ້ຄອບຄົວຂອງພວກເຂົາເຈົ້າເປັນໄປຕາມທີ່ເຂົາເຈົ້າຕ້ອງການ.

ຄຳຖາມສຳລັບຊີວິດ

ຂ້ອຍສາມາດສ້າງຄອບຄົວທີ່ຂ້ອຍຕ້ອງການແທ້ໆນັ້ນໄດ້ຢ່າງໃດ?

ເກືອບໝົດທຸກຄົນກໍຮັບຮູ້ຄຸນຄ່າຂອງຄອບຄົວ. ແຕ່ເຖິງປານນັ້ນ, ຫຼາຍໆຄອບຄົວກໍຍັງມີການແຕກແຍກເພີ້ມຈຳນວນຫຼາຍຂຶ້ນໃນໂລກ. ຜູ້ຊ່ຽວຊານຄົນນຶ່ງໄດ້ກ່າວແບບເຍາະເຍີ້ຍว่าພວກເຮົາໃຫ້ຄຸນຄ່າແກ່ຄອບຄົວຢ່າງຫຼວງຫຼາຍໃນອະເມຣິກາ ດັ່ງນັ້ນເກືອບว่าທຸກຄົນມີຄອບຄົວຫຼາຍກວ່ານຶ່ງຂຶ້ນໄປ. ການຕັດຂາດຈາກກັນເບິ່ງຄືว่ายັງມີຢູ່ ລະຫว่างສິ່ງທີ່ພວກເຮົາຍຶດໝັ້ນໄວ້ແລະສິ່ງທີ່ພວກເຮົາສາມາດເຮັດໃຫ້ປະສົບຜົນສຳເຣັດໃນຊີວິດ. ຄືກັນກັບເຮືອນຫຼັງນຶ່ງ, ຄອບຄົວຕ້ອງຖືກສ້າງຂຶ້ນ; ພຣະເຈົ້າຕຽມພ້ອມຢູ່ສເມີທີ່ຈະຊ່ວຍພວກເຮົາສ້າງຄອບຄົວທີ່ພວກເຮົາຕ້ອງການ.

ບົດຮຽນນີ້, ຂນະທີ່ມີການເນັ້ນໜັກແລະອະທິບາຍເຖິງການເອົາໃຈໃສ່ຂອງຜູ້ທີ່ເປັນເມັງແລະແມ່ທີ່ເຫຼື້ອມໃສໃນພຣະເຈົ້າ ຈະສະແດງອອກມາຢ່າງແທ້ຈິງຂອງຜູ້ທີ່ເປັນພໍ່ແມ່ທັງປວງເຖິງວິທີສ້າງຄອບຄົວຂອງເຂົາເຈົ້າໃຫ້ເຂັ້ມແຂງຂຶ້ນແລະສ້າງຄອບຄົວທີ່ພວກເຮົາຕ້ອງການ.

<u>ສຶກສາພຣະຄັມພີ</u>

1. <u>ເປັນຄົນທີ່ໜ້າໄວ້ວາງใจ:</u> (ສຸພາສິດ 31:10-12)

ເມື່ອກະສັດເລມູເອນໄດ້ຂຽນໄວ້ກ່ຽວເຣື່ອງຂອງ "ພັລຍາທີ່ມີຄວາມສາມາດ" ແລະໄດ້ຖາມว่า "ໃຜຈະຫາໄດ້" ຄັ້ງນຶ່ງ ທ່ານໄດ້ໃຊ້ສິລປະໃນການຖາມເພື່ອໃຫ້ໄດ້ເນື້ອເຣື່ອງສະທ້ອນກັບ. ທ່ານບໍ່ໄດ້ສົງສັຍກ່ຽວກັບການທີ່ຈະພົບຜູ້ຍິງແນວນັ້ນ. ພັລຍາຜູ້ໃດກໍຕາມທີ່ຢາກຈະເປັນເໝືອນກະສັດເລມູເອນໄດ້ບັນລະຍາຍກໍສາມາດເຮັດໄດ້, ຄືກັນກັບສາ

ມີຜູ້ໃດຜູ້ນຶ່ງສາມາດກາຍເປັນຜູ້ຊາຍທີ່ເທົ່າທຽມກັນໄດ້.

ພາສາເຮັບເຣີແປຄຳວ່າ ***ຊອກຫາ*** ຊີ້ໃຫ້ເຫັນວ່າຍັງບໍ່ພົບເທື່ອຫຼືຍັງຢູ່ໃນຂັ້ນຕອນຂອງການຄົ້ນຫາ. ໃນຂນະທີ່ຄວາມຕັ້ງໃຈສ່ວນໃຫຍ່ແມ່ນຢາກພົບຄົນດີເພື່ອຈະແຕ່ງງານ, ສິ່ງທີ່ດີກວ່ານັ້ນແມ່ນຕົວເຮົາເອງກາຍເປັນຄົນດີເພື່ອຄົນອື່ນຢາກແຕ່ງງານກັບເຮົາ. ເມື່ອຕອນຂ້າພະເຈົ້າຍັງເປັນຊາຍໜຸ່ມ ບາງຄົນໄດ້ບອກຂ້າພະເຈົ້າວ່າ: "ຢ່າຈົດຈໍ່ຊອກຫາຄົນທີ່ຖືກຕ້ອງເພື່ອຈະແຕ່ງງານ. ແຕ່ຈົດຈໍ່ໃນການກາຍເປັນຜູ້ຖືກຕ້ອງ-ແລະພຣະເຈົ້າຈະນຳຜູ້ຖືກຕ້ອງນັ້ນມາໃຫ້ທ່ານ ." ໂອກາດອັນດີທີ່ສຸດຂອງຂ້າພະເຈົ້າໃນຖານະເປັນສາມີແມ່ນຕັ້ງໃຈຈະສືບຕໍ່ຕິດຕາມຄວາມຄິດດັ່ງກ່າວນີ້.

ແລະແມ່ນຫຍັງຄືຄຸນນະພາບທີ່ເຮັດໃຫ້ເປັນເມັຽຫຼືຜົວ "ມີຄ່າແພງກວ່າເພັດນິນຈິນດາ"? ຄຸນນະພາບອັນນັ້ນແມ່ນຫົວໃຈຂອງຜູ້ເປັນຄູ່ຄອງທີ່ວາງໃຈເຊື່ອໃນຄຸນສົມບັດທີ່ເຫຼື້ອມໃສໃນພຣະເຈົ້າຂອງຄູ່ຄອງຜູ້ນັ້ນ. ແຕ່ລະມື້ແຕ່ລະເວັນ, ພັລຍາແລະແມ່ທີ່ເຫຼື້ອມໃສໃນພຣະເຈົ້າບົວລະບັດເບິ່ງແຍງຄອບຄົວໃນທາງທີ່ຄອບຄົວສາມາດຮູ້ຈັກວ່າພວກເຂົາອາສັຍນາງໄດ້. ຂໍ້ທີ 11 ແມ່ນບ່ອນດຽວເທົ່ານັ້ນໃນພຣະຄັມພີທີ່ຍ້ອງຍໍການເຊື່ອວາງໃຈໃນເພື່ອນມະນຸດດ້ວຍກັນ. ຂໍ້ອື່ນໆທັງໝົດທີ່ເວົ້າເຮື່ອງຄວາມເຊື່ອວາງໃຈໃນທາງບວກຈົດຈໍ່ໃສ່ວ່າພວກເຮົາເຊື່ອວາງໃຈໃນພຣະເຈົ້າຢ່າງໃດ.

ຫົວໃຈຂອງການແຕ່ງງານທີ່ດີເລີດແມ່ນການເຊື່ອວາງໃຈ. ເຮັດທຸກສິ່ງຢ່າງໃຫ້ສຸດຄວາມສາມາດຂອງທ່ານທີ່ຈະໄດ້ຄວາມວາງໃຈເຊື່ອຂອງຄູ່ຄອງຂອງທ່ານ. ເຮັດທຸກຢ່າງທີ່ທ່ານຄວນຈະເຮັດເພື່ອຮັກສາມັນໄວ້. ຖ້າປາສຈາກມັນແລ້ວ ຄອບຄົວຂອງທ່ານຈະພັງທະລາຍ.

ແມ່ນຫຍັງທີ່ຮັກສາຄວາມເຊື່ອວາງໃຈລະຫວ່າງຜົວແລະເມັຽ? ຄວາມດີທີ່ໄດ້ກະທຳສຳລັບຄອບຄົວຂອງພວກເຂົາເຈົ້າ. ຄຳວ່າ ***ດີ*** ທີ່ໃຊ້ໃນຂໍ້ 11 ແມ່ນມັກໃຊ້ກັບພວກທະຫານທີ່ໄດ້ຊະນະໃນການປຸ້ນເອົາຂອງກັບຄືນມາເຮືອນ. ແຕ່ວ່າ, ໃນທີ່ນີ້ຄວາມດີຊີ້ໃຫ້ເຫັນຄຸນຄ່າພິເສດທີ່ມາສູ່ຄອບຄົວນັ້ນໂດຍສະເພາະການປະພຶດຂອງຜົວຫຼືເມັຽ.

ຜູ້ຢູ່ຮ່ວມກັບຄົນທີ່ມີຄວາມສາມາດ ຄູ່ຄອງນັ້ນຈະບໍ່ຂາດເຂີນສິ່ງດີອັນໃດເລີຍ. ການສຳນຶກໄດ້ວ່າຄູ່ຄອງຂອງຂ້ອຍສາມາດນຳພຣະພອນອັນພຽງພໍຈາກພຣະເຈົ້າ ຈະບໍ່ໃຫ້ຂ້ອຍໄປຊອກຫາບ່ອນອື່ນອີກແລະຈະເພີ້ມຄວາມຈົງຮັກພັກດີໃນຄຳໝັ້ນສັນຍາຂອງຂ້ອຍ. ຄວາມຈົດຈໍ່ອັນນີ້ສາມາດຊ່ວຍພວກເຮົາໃຫ້ຮັກສາຄວາມສັດຊື່ສຳລັບວັນເວລາແຫ່ງຊີວິດແຕ່ງງານຂອງພວກເຮົາ.

ໜ້າທີ່ຮັບຜິດຊອບຕ່າງໆຂອງສາມີແລະພັລຍາຕໍ່ຊຶ່ງກັນແລະກັນ

ສາມີຕໍ່ພັລຍາ	**ພັລຍາຕໍ່ສາມີ**
• ສນິດສນົມກົມກຽວ (ປະຖົມມະການ 2:23-24)	ສນິດສນົມກົມກຽວ (1 ໂກຣິນໂທ 7:3-5)
• ເຮັດໃຫ້ຊອບໃຈເມັຽ (1 ໂກຣິນໂທ 7:33)	ເຮັດໃຫ້ຊອບໃຈຜົວ (ສຸພາສິດ 12:4)
• ຮັກເມັຽຂອງຕົນ (ເອເຟໂຊ 5:25-33)	ຮັກຜົວຂອງຕົນ (ຕີໂຕ 2:4)
• ນັບຖືເມັຽຂອງຕົນ (1 ເປໂຕ 3:7)	ນັບຖືຜົວຂອງຕົນ (ເອເຟໂຊ 5:33)
• ຕັ້ງຢູ່ໃນຄວາມສັດຊື່ (ມັດທາຍ 19:3-9)	ຕັ້ງຢູ່ໃນຄວາມເຊື່ອ (ໂຣມ 7:2)
• ຮ່ວມສຸກຮ່ວມທຸກກັບເມັຽ (ປັນຍາຈານ 9:9)	ເບິ່ງແຍງຄອບຄົວ (ສຸພາສິດ 31:27)
• ຍ້ອງຍໍສັຣເສີນເມັຽ (ສຸພາສິດ 31:28)	ເຮັດດ້ວຍສະຕິປັນຍາ (ສຸພາສິດ 31:26)
• ຜູ້ນຳເໝືອນຂ້ອຍໃຊ້ (ເອເຟໂຊ 5:23)	ຍອມຢູ່ໃຕ້ອຳນາດສາມີ (ໂກໂລຊາຍ 3:18)

2. <u>ເປັນຄົນທີ່ຮັບຜິດຊອບ:</u> (ສຸພາສິດ 31:15-20)

ຄຳໂຄສະນາທີ່ມີຄວາມນິຍົມແລະຈັບໃຈຂອງບໍຣິສັດປະກັນພັຍຈົບລົງດ້ວຍສຽງເວົ້າວ່າ "ໜ້າທີ່ຮັບຜິດຊອບ

ໃບຮັບປະກັນຂອງທ່ານເຮັດຫຍັງແດ່?" ຄຳຖາມນີ້ມັນຊ່າງເໝາະເຈາະຖືກບ່ອນ. ເມັ່ງແລະແມ່ທີ່ດີໃນສຸພາສິດບົດທີ 31 ໄດ້ເປັນຕົວຢ່າງທີ່ດີໃນຄວາມໝາຍຂອງໜ້າທີ່ຮັບຜິດຊອບ. ພວກເຮົາກໍຖືກຮຽກເອີ້ນໃຫ້ເປັນຕົວຢ່າງໃນສະໄມນີ້; ພວກເຮົາໄດ້ຖືກຮຽກເອີ້ນໃຫ້ມີຄຸນນະສົມບັດແບບດຽວກັນ ຄືການເປັນຜູ້ນຳ.

ການສ້າງຄອບຄົວທີ່ຍິ່ງໃຫຍ່ຈຳເປັນຕ້ອງມີການເສັງສະລະອັນຍິ່ງໃຫຍ່ແລະຂະຍັນໝັ່ນພຽນ. ການນອນຕື່ນສວາຍທຸກໆມື້ວຽກການງານກໍຈະບໍ່ແລ້ວ. ຜູ້ຍິງດີໃນທີ່ນີ້ໄດ້ເອົາໃຈໃສ່ຕໍ່ສິ່ງປົກຍ່ອຍຕ່າງໆຂອງຄອບຄົວຂອງນາງເຊັ່ນ ອາຫານແລະພາກສ່ວນຕ່າງໆ-ຊຶ່ງສາມາດແປໄດ້ວ່າ "ຄຳແນະນຳ." ຖ້າເປັນດັ່ງນັ້ນແລ້ວ ຄວາມໝາຍກໍແມ່ນຜູ້ຍິງຄົນນີ້ມີຄວາມສຳເຣັດໃນການແບ່ງປັນວຽກໃນແຕ່ລະວັນ. ການເປັນຄົນທີ່ຮັບຜິດຊອບບໍ່ໄດ້ໝາຍຄວາມວ່າຜູ້ນັ້ນຕ້ອງເຮັດວຽກທັງໝົດແຕ່ພຽງຜູ້ດຽວ.

ເມື່ອນາງສຳຣວດທົ່ງນາແລະເຄື່ອງປູກຝັງໃນສວນອະງຸ່ນ, ຜູ້ຍິງທີ່ເຫຼື້ອມໃສໃນພຣະເจ้าໃນທີ່ນີ້ກຳລັງສະແດງທັງສອງຢ່າງຄືມັນສມອງແລະຄວາມແຂງແຮງ. ການສ້າງຄອບຄົວໃຫ້ເຂັ້ມແຂງປົກກະຕິແລ້ວແມ່ນລວມທັງສອງຢ່າງ, ການເຫັນພາບອັນກວ້າງໃຫຍ່ແລະລວມທັງການມີສ່ວນໃນເຣື່ອງປົກຍ່ອຍຕ່າງໆດ້ວຍ. ອັນນີ້ໝາຍເຖິງວ່າບໍ່ມີການຈຳແນກว่าเป็นเพดอ่อนแอและบ่สามาดช่วยตัวเอง ແຕ່ເປັນຍິງທີ່ເຕັມດ້ວຍກຳລັງແລະສລຽວສລາດ.

ຈົ່ງຈຳໄວ້ວ່າສຸພາສິດບົດທີ 31 ແມ່ນບົດສຸດທ້າຍຂອງພຣະທັມສຸພາສິດ. ຢ່າທໍ້ຖອຍໃຈຖ້າຮູ້ສຶກວ່າທ່ານບົກຜ່ອງຈາກຄຸນນະສັມບັດທີ່ບັນທຶກໄວ້ໃນນີ້ ແມ່ນແລ້ວທ່ານບົກຜ່ອງ ພວກເຮົາໝົດທຸກຄົນກໍບົກຜ່ອງ. ແຕ່ວ່າພວກເຮົາຄວນຈະໃຫ້ຂໍ້ພຣະຄຳເຫຼົ່ານີ້ຈູງໃຈພວກເຮົາຕໍ່ການເຕີບໂຕແລະຕິດຕາມສິ່ງທີ່ດີເລີດນີ້.

ພວກເຮົາຕ້ອງບັງຄັບພວກເຮົາເອງໃຫ້ເຮັດໜ້າທີ່ນີ້. ການເຮັດສິ່ງເຫຼົ່ານີ້ແມ່ນວຽກໜັກຫຼາຍ. ເມັ່ງແລະແມ່ຕົວຢ່າງໄດ້ເຮັດວຽກການຈົນເຖິງຄ່ຳ. ຜູ້ທີ່ຢາກເປັນຜູ້ນຳໃນຄອບຄົວທີ່ເຫຼື້ອມໃສໃນພຣະເจ้าจะรู้สึกอิดเมื่อยหูาย. ທີ່ຈະກາຍເປັນຄົນແນວນີ້ຕ້ອງເປັນຄົນທີ່ເສັງສະລະ ຈົ່ງຈຳພາສິດນີ້ໄວ້ເຊັ່ນກັນ "ເຮັດວຽກຢ່າງສລາດ ບໍ່ແມ່ນເຮັດວຽກຢ່າງໜັກ." ທູນຂໍສະຕິປັນຍາຈາກພຣະເจ้าກ່ຽວກັບວິທີທີ່ຈະປະສົບຜົນສຳເຣັດ. ເມື່ອພວກທູນຂໍດ້ວຍຈິດວິນຍານອັນຖືກຕ້ອງ ພຣະເจ้ากำจะช่วยตอบ.

ພຣະເจ้าได้ปะทานพระพอนพิเสดแก่ท่านเพื่อเป็นที่พระพอนต่ำคอบคิว. ยิงที่ดีได้ใช้ความชำนิชำนานของนางด้วยการ "ใช้ไม้ถักและปั่นฝ้าย," ซึ่ງທັງສອງຢ່າງແມ່ນເຄື່ອງມືທີ່ໃຊ້ໃນການເຮັດເຄື່ອງນຸ່ງ. ນີ້ບໍ່ໄດ້ເວົ້າວ່າແມ່ທີ່ດີຕ້ອງເຮັດເຄື່ອງນຸ່ງເອງສຳລັບຄອບຄົວ, ເຖິງຢ່າງໃດກໍຕາມມັນກໍອາດເປັນຄວາມຈິງໃນບາງກໍຣະນີ. ຈຸດໝາຍນັ້ນກໍຄືວ່າທ່ານຄວນຈະໃຊ້ຄວາມສາມາດແລະຄວາມຊຳນານທີ່ພຣະເจ้าได้ปะทานให้ท่านและช่วยพัดทะนาคົນອື່ນຕາມທີ່ເວລາອຳນວຍໃຫ້.

ຈົ່ງຈຳໄວ້ວ່າຢ່າເບິ່ງແຕ່ພີ່ນ້ອງຂອງທ່ານ ແຕ່ໃຫ້ເບິ່ງຄົນອື່ນໆ ດ້ວຍ. ໃຊ້ຊັບສິນຂອງທ່ານຊ່ວຍເຫຼືອຄົນທຸກຍາກແລະຂັດສົນ. ຮ່ວມມືກັນໃນຄອບຄົວຂອງທ່ານໃນວຽກງານຮັບໃຊ້ພຣະเจ้าให้หูายเท่าที่จะหูายได้, ເປັນພິເສດແມ່ນລູກເຕົ້າຂອງທ່ານ. ການມີສ່ວນຮ່ວມໃນການເຮັດດີຈະກາຍເປັນບົດຮຽນຊີວິດທີ່ພວກເຂົາບໍ່ມີວັນລືມ.

ສຸພາບສະຕຣີໃນພຣະທັມສຸພາສິດບົດທີ 31 ໄດ້ກະທຳແລະຂະຍັນໃນການໃຊ້ຂອງພຣະຣາຊທານທີ່ພຣະเจ้าได้ปะทานให้แก่นาง ນາງຫາທາງທີ່ຈະໃຊ້ສິ່ງເຫຼົ່ານັ້ນເພື່ອໃຫ້ເປັນພຣະພອນສຳລັບຄອບຄົວຂອງນາງ ນາງໄດ້ເປັນຕົວຢ່າງຂອງຄອບຄົວແລະເຂດຄຸ້ມທີ່ນາງຢູ່. ພວກເຮົາສາມາດເຮັດເໝືອນນາງໄດ້ໂດຍການຊອກຫາທາງທີ່ຈະເຮັດໃຫ້ຄອບຄົວຂອງເຮົາສ່ອງແສງສະຫว่างและเป็นสูนกางของวูกงานรับใช้พระเจ้าต่ำคนอื่นๆ. ນີ້ຄືຄວາມໝາຍຂອງການມີຄວາມຮັບຜິດຊອບ ພວກເຮົາແຕ່ລະຄົນຄວນເຮັດແນວນີ້ເພື່ອໃຫ້ເປັນກົດເກນສຳລັບຊີວິດ.

3. <u>ເຫຼື້ອມໃສໃນພຣະเจ้า</u>: (ສຸພາສິດ 31:25-31)

ຮາກແລະໝາກຜົນ ສອງຢ່າງນີ້ແຕກຕ່າງກັນ. ຄົນອື່ນສາມາດເຫັນໝາກຜົນຂອງຊີວິດທ່ານ ທັງການປະພຶດ ແລະຜົນສະທ້ອນ. ແຕ່ເຖິງປານນັ້ນ ແຫຼ່ງທີ່ມາຂອງແຮງບັນດົນໃຈແລະການຕັດສິນໃຈຍັງບໍ່ພ້ອມທີ່ຈະປາກົດອອກມາ ເທື່ອ. ຜູ້ຍິງທີ່ດີໃນສຸພາສິດບົດທີ 31ໄດ້ສະແດງໃຫ້ເຫັນຄຸນນະສົມບັດອັນຍິ່ງໃຫຍ່ຫລາຍຢ່າງ. ທັງເມື່ອກ່ອນແລະດຽວ ນີ້ ຄວາມດີເຫຼົ່ານີ້ຍັງພົບໃນຄົນ "ຜູ້ທີ່ຢຳເກງພຣະຜູ້ເປັນເຈົ້າ." ເຮົາສາມາດຕີຄວາມໝາຍຂອງ ***ຢຳເກງ*** ວ່າເປັນການ ຍອມຢູ່ໃຕ້ດ້ວຍນະມັສການ, ໄວ້ວາງໃຈຢ່າງເກງຂາມ, ແລະການເຊື່ອຟັງຢ່າງນັບຖື.

ຄຸນນະສົມບັດເຫຼົ່ານີ້ໄດ້ບອກເຖິງຜູ້ຍິງທີ່ມີຊີວິດທີ່ພຣະເຈົ້າພໍພຣະທັຍ. ລຳດັບປຶ້ມທີ່ເປັນພາສາເຮັບເຣີຂອງ ພຣະສັນຍາເດີມ, ພຣະທັມນາງຣຸດຊຶ່ງຕິດຕາມມາດ້ວຍພຣະທັມສຸພາສິດບົດທີ 31, ຊຶ່ງມີຄວາມໝາຍທີ່ຕາມມາດ້ວຍ ຄຳບັນລະຍາຍກ່ຽວກັບເຣື່ອງຜູ້ຍິງທີ່ຢູ່ໃນຄຳສອນນີ້. ຄຳວ່າ ***ສາມາດ*** ໃນຂໍ້ 10 ກໍໄດ້ບັນລະຍາຍເຖິງນາງຣຸດໃນພຣະ ທັມຣຸດ 3:11. ແຕ່ລະຂໍ້ໃນພຣະທັມສຸພາສິດບົດທີ 31:10-31 ເລີ້ມຕົ້ນດ້ວຍພະຍັນຊະນະທີ່ຕໍ່ເນື່ອງກັນໃນພາສາເຮັບ ເຣີ ຊຶ່ງສະແດງໃຫ້ເຫັນວ່າເປັນວັກທີ່ສາມາດທ່ອງຈຳໄດ້ງ່າຍຂຶ້ນ.

ການຍົກຍ້ອງແລະພຣະພອນທີ່ນາງໄດ້ຮັບຈາກພວກລູກຊາຍແລະຜົວຂອງນາງແມ່ນເໝາະສົມແລະກຳເຖິງເວ ລາທີ່ຄວນໄດ້ຮັບ. ການສລອງວັນແມ່ແມ່ນໂອກາດທີ່ຈະສະແດງອອກເຖິງສິ່ງເຫຼົ່ານີ້. ຜູ້ຍິງດີກໍຈະຮັບຮູ້ວ່າອົງພຣະຜູ້ ເປັນເຈົ້າຄືຜູ້ທີ່ຈະໄດ້ຮັບການຍົກຍ້ອງກ່ອນ. ເພາະແນວນັ້ນແຫຼະ, ພວກເຮົາຈຶ່ງສາມາດເວົ້າໃນວັນນີ້, "ເອົາລາງວັນໃຫ້ ແກ່ນ້ຳເຫື່ອນ້ຳແຮງຂອງນາງແລະໃຫ້ຜົນງານຕ່າງໆ ຂອງນາງຍ້ອງຍໍນາງ."

ພຣະທັມສຸພາສິດບົດທີ 31 ມີແບບຢ່າງສຳລັບການເປັນຜູ້ນຳຄອບຄົວທີ່ເຫຼື້ອມໃສໃນພຣະເຈົ້າ. ແບບຢ່າງ ຂອງຄຸນສົມບັດນີ້ບໍ່ຂຶ້ນຢູ່ກັບປາກົດການທີ່ເຫັນຂ້າງນອກ (ເພາະວ່າ "ສເນ່ເປັນຂອງຫຼອກລວງແລະຄວາມງາມເປັນ ຂອງບໍ່ແນ່ນອນ") ແຕ່ຂຶ້ນຢູ່ກັບການຢຳເກງພຣະຜູ້ເປັນເຈົ້າ. ຂໍໃຫ້ຄວາມນຶກຄິດຂອງທ່ານຂຶ້ນກັບມາດຕະຖານຂອງ ພຣະເຈົ້າ ບໍ່ແມ່ນຂຶ້ນກັບຄວາມງາມພາຍນອກ.

<u>ບົດຮຽນຊີວິດ</u>

ພວກເຮົາເຝົ້າເບິ່ງຄອບຄົວຂອງພວກເຮົາໃນຖານະທີ່ເປັນຂອງປະທານຈາກພຣະເຈົ້າ. ແຕ່ພວກເຮົາບໍ່ຄວນ ສລຸບເອົາວ່າຄອບຄົວເປັນພຽງສິ່ງທີ່ເຮົາຕ້ອງມີແລະຊົມຊື່ນຍິນດີເທົ່ານັ້ນ. ຄອບຄົວຍັງຈຳເປັນຕ້ອງໄດ້ຮັບການພັດທະ ນາໃຫ້ດີຂຶ້ນ. ໃຫ້ຄຳຖາມເຫຼົ່ານີ້ນຳພາທ່ານໄປສູ່ການເອົາບົດຮຽນນີ້ໄປປະຕິບັດໃຊ້:

- ທ່ານຢາກໃຫ້ຄອບຄົວຂອງເປັນແນວໃດ? ແມ່ນຫຍັງຄືສະຖານະການທີ່ເກີດຂຶ້ນໃນແຕ່ລະມື້?
- ແມ່ນຫຍັງເກີດຂຶ້ນໃນຄອບຄົວຂອງທ່ານໃນຂນະນີ້ ທີ່ທຳໃຫ້ມັນພ້ຽນຈາກພາບພົດນັ້ນ?
- ແມ່ນຫຍັງຄືສິ່ງທີ່ກີດຂວາງບໍ່ໃຫ້ທ່ານມອງເຫັນບັນຫາເພື່ອຈະໄດ້ນຳມາແກ້ໄຂ?
- ສິ່ງທີ່ກີດຂວາງເຫຼົ່ານັ້ນແມ່ນອັນໃດທີ່ຕ້ອງແກ້ໄຂກ່ອນ?
- ແມ່ນຫຍັງທີ່ທ່ານສາມາດເຮັດໂດຍດ່ວນເພື່ອຈັດການກັບສິ່ງກີດຂວາງນັ້ນ? ອັນໃດທີ່ຕ້ອງຈັດການໃນລະຍະຍາວ?
- ຜູ້ໃດທີ່ສາມາດຊ່ວຍທ່ານໄດ້ແລະເປັນແຫຼ່ງການຊ່ວຍເຫລືອສຳລັບທ່ານ?

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA

ບົດຮຽນໂຮງຮຽນວັນອາທິດ
ວັນອາທິດທີ 19 ພຶສພາ 2013 (5-19-2013)

ການເປັນຄົນທີ່ຜູ້ອື່ນຕ້ອງການ

ຂໍ້ພຣະຄັມພີໃນບົດຮຽນ: ສຸພາສິດ 6:6-11,16-19, 23-27

ບົດຮຽນນີ້ມີຜົນສະທ້ອນຕໍ່ຊີວິດຂອງທ່ານໄດ້ຢ່າງໃດ

ບົດຮຽນນີ້ສາມາດຊ່ວຍທ່ານພັດທະນານິສັຍທີ່ເປັນປໂຍດຕໍ່ຄົນທີ່ທ່ານເປັນຫ່ວງເປັນໃຍນຳນັ້ນ.

ບົດຮຽນນີ້ເວົ້າກ່ຽວກັບຫຍັງ

ພຣະທັມສຸພາສິດໄດ້ເຮັດໃຫ້ພວກເຮົາເຫັນແຈ້ງຕໍ່ນິສັຍທີ່ເປັນປໂຍດຕໍ່ພວກເຮົາແລະຜູ້ທີ່ຢູ່ອ້ອມຮອບພວກເຮົາ.

ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ

ນິສັຍຂອງພວກເຮົາສາມາດກໍ່ສ້າງຫຼືທຳລາຍເພຄວາມສຳພັນຕ່າງໆຂອງພວກເຮົາ. ຄວາມຂຍັນໝັ່ນພຽນ, ສັກສີ, ແລະ ຄວາມບໍຣິສຸດບໍ່ແມ່ນສິ່ງຂອງພາຍໃນທັມມະດາ, ແຕ່ມັນຍັງສາມາດມີຜົນສະທ້ອນອັນຍິ່ງໃຫຍ່-ຜົນສະທ້ອນທາງບວກ-ຕໍ່ຄອບຄົວຂອງພວກເຮົາແລະເພື່ອນຝູງ.

ຄຳຖາມສຳລັບຊີວິດ

ຂ້ອຍສາມາດການເປັນຄົນທີ່ຜູ້ອື່ນຕ້ອງການແນວໃດ?

ສັງຄົມຂອງພວກເຮົາໃຫ້ຄວາມສຳຄັນອັນຍິ່ງໃຫຍ່ຕໍ່ສິ່ງທີ່ພວກເຮົາເຮັດ. ໃບແນະນຳປະສົບການສ່ວນຫຼາຍບັນທຶກການສຳເຣັດຜົນຕ່າງໆ. ນາຍຈ້າງທັງຫຼາຍຈະສືບສວນໄຕ່ຕອງຄວາມຊຳນານຂອງວຽກການຂອງຜູ້ທີ່ໄປສມັກ. ແຕ່ວ່າ 'ເຮົາແມ່ນໃຜ' ກໍສຳຄັນທ່ຽງກັບ 'ສິ່ງທີ່ເຮົາເຮັດ.' ທ່ານແມ່ນຜູ້ໃດ-ແລະທ່ານຈະການເປັນຜູ້ໃດ-ໝາຍເຖິງເຫດການທີ່ກຳລັງເກີດຂຶ້ນ ຊຶ່ງອາດຈະເປັນທັງທາງບວກຫຼືທາງລົບ ທີ່ສະທ້ອນຕໍ່ຄົນທີ່ຢູ່ອ້ອມຮອບທ່ານ.

ການສຶກສາພຣະທັມສຸພາສິດບົດທີ່ 6 ນີ້ຈະເປີດເຜີຍຄັງຄຸນສົມບັດດັ່ງເຊັ່ນຄວາມຂຍັນໝັ່ນພຽນ, ກຽດສັກສີ, ແລະ ຄວາມບໍຣິສຸດທີ່ເປັນປໂຍດຕໍ່ຄົນທີ່ເຮົາພົວພັນເປັນປະຈຳ. ຄຸນສົມບັດເປັນສິ່ງທີ່ຢູ່ພາຍໃນ ແຕ່ຜົນທີ່ປາກົດອອກມາ ຈະສາມາດເຫັນໄດ້ຢ່າງແຈ່ມແຈ້ງ.

<u>ສຶກສາພຣະຄັມພີ</u>

1. <u>ເຮັດງານຢ່າງຂຍັນໝັ່ນພຽນ:</u> (ສຸພາສິດ 6:6-11)

ເຣື່ອງກ່ຽວກັບແມງໄມ້ຕ່າງໆແລະການກະທຳຂອງພວກມັນກໍເປັນເຣື່ອງໃຫຍ່. ທັງເຣື່ອງນຶ່ງຊຶ່ງເປັນເຣື່ອງ ຂອງມົດ, ຊີວິດຂອງແມງໄມ້, ແລະທັງເຣື່ອງຂອງເຜີ້ງໄດ້ໃຊ້ແມງໄມ້ນ້ອຍໆເຫຼົ່ານີ້ເພື່ອໃຊ້ເປັນຄຳກ່າວຂານທີ່ໃຫຍ່ ກ່ຽວກັບທຳມະຊາດຂອງຊີວິດ. ແຕ່ວ່າ, ບໍ່ມີອັນໃດ ຫລື ນິຍາຍໃດໆ ທີ່ໃໝ່ແທ້ໆ ຕາມເຣື່ອງເຫຼົ່ານັ້ນ. ເກືອບ 3,000

ປີຜ່ານມາແລ້ວ, ພຣະເຈົ້າໄດ້ກ່າວຜ່ານກະສັດໂຊໂລໂມນເພື່ອປຽບທຽບລະຫວ່າງຄວາມປະພຶດຂອງແມງໄມ້ ແລະການພັດທະນາຂອງນິສັຍບຸກຄົນ.

ພຣະເຈົ້າບອກຄົນທີ່ພຣະອົງເອີ້ນວ່າ "ຂີ້ຄ້ານ" ຈົ່ງ "ເອົາຕົວຢ່າງຂອງມົດ." ຄວາມໝາຍກໍຄືວ່າ "ໄປເບິ່ງວິທີ ມົດເຮັດວຽກງານແລະຮຽນຮູ້ຈາກມັນ." ຖ້າວ່າໃຜຜູ້ນຶ່ງຈະ "ສັງເກດທາງຂອງມັນ," ຈາກນັ້ນລາວສາມາດ "ກາຍເປັນຜູ້ສລາດ"

ມີບົດຮຽນນຶ່ງທີ່ຕ້ອງຮຽນຮູ້ຄືການມີນິສັຍເຮັດວຽກງານຢ່າງຂຍັນໝັ່ນພຽນ. ມົດເຮັດວຽກການຕລອດເວລາ. ຈາກສິ່ງທີ່ພວກເຮົາຮູ້ຈັກກ່ຽວກັບການເປັນນຶ່ງດຽວຂອງພວກມັນ, ມົດດຶງຄວາມໜັກຂອງມັນ; ຫຼືເວົ້າຢ່າງແມ້ນຢຳ, ພວກມັນສາມາດຍົກໜັກ 20 ເທົ່າ ທີ່ໜັກກວ່ານ້ຳໜັກຕົວຂອງພວກມັນເອງ. (www.lingolex.com/ants.htm).

ທີ່ຈະກາຍເປັນຄົນຊຶ່ງສນັບສນູນແລະເປັນປໂຍດຕໍ່ຄົນອື່ນຈຳເປັນຕ້ອງມີຄວາມທຸ້ມເທອັນໃຫຍ່ຫຼວງ. ຖ້າການໝູນນ້ຳໃຈ, ສະຕິປັນຍາ, ແລະຄວາມສັດຊື່ທີ່ຄົນອື່ນໆຕ້ອງການເປັນສິ່ງງ່າຍທີ່ຫາໄດ້, ພວກເຂົາກໍບໍ່ຕ້ອງການສິ່ງເຫຼົ່ານີ້ຈາກພວກເຮົາ.

ບົດຮຽນອີກອັນນຶ່ງກ່ຽວກັບມົດແມ່ນຄວາມສາມາດຂອງພວກມັນສຳລັບການນຳພາ-ມັນທຳງານໂດຍປາສຈາກຜູ້ນຳຄວບຄຸມພວກມັນໃຫ້ປະຕິບັດງານ. ເຖິງແມ່ນພວກມົດຢູ່ຮ່ວມກັນເປັນນຶ່ງດຽວກັນກໍຕາມ, ເພື່ອໃຫ້ມົດທັງຂວຍປະສົບຜົນສຳເຮັດມັນຂຶ້ນຢູ່ກັບມົດທຸກໆຕົວເຮັດໜ້າທີ່ຂອງໃຜມັນ. ບໍ່ວ່າຈະຢູ່ບ່ອນເຮັດວຽກຫຼືທີ່ໂບດ, ພຣະເຈົ້າຮຽກເອີ້ນພວກເຮົາແຕ່ລະຄົນໃຫ້ຍຶດຖືເອົາໜ້າທີ່ຮັບຜິດຊອບຂອງໃຜລາວຢ່າງສັດຊື່.

ໜ້າທີ່ຮັບຜິດຊອບໝາຍເຖິງການເຮັດວຽກຢ່າງມີເປົ້າໝາຍ-ບໍ່ແມ່ນແຕ່ພຽງໃຫ້ມີແນວເຮັດຊື່ໆ. ສຸມຄວາມຂຍັນໝັ່ນພຽນຂອງທ່ານໃນສິ່ງທີ່ສຳຄັນ. ນີ້ແມ່ນພາກສ່ວນນຶ່ງຂອງຄຳສັ່ງຂອງອາຈານໂປໂລໃຫ້ເຮັດວຽກງານເໝືອນເຮັດຖວາຍອົງພຣະຜູ້ເປັນເຈົ້າ (ໂກໂລຊາຍ 3:23).

ການສະແດງອອກເຖິງຄວາມດຸໝັ່ນ ຂຍັນໝັ່ນພຽນຕໍ່ວຽກງານແລະທຸຣະກິດສ່ວນຕົວ ແມ່ນການເຝົ້າລະວັງເພື່ອຕໍ່ຕ້ານກັບການປະສົບກັບຄວາມທຸກຍາກແລະຄວາມຂາດແຄນທາງດ້ານການເງິນ. ນີ້ກໍບໍ່ແມ່ນການປະຕິເສດຕໍ່ຄວາມກົດດັນທາງເສດຖະກິດທີ່ເກີດຂຶ້ນເລື້ອຍໆ ຊຶ່ງນຳໄປສູ່ການຫວ່າງງານທີ່ຢູ່ເໝືອກຳລັງຂອງຕົນ ຄືກັນກັບພວກມົດໂຕນ້ອຍໆນັ້ນ ຄົນທີ່ສລາດທ້ອນໂຮມສິ່ງຂອງຕ່າງໆສຳລັບອະນາຄົດ ໂດຍສຳນຶກໄດ້ວ່າທຸກໆລະດູຮ້ອນທີ່ດີນັ້ນຈະຕາມມາດ້ວຍອະດູໜາວທີ່ບໍ່ດີສເມີ.

ເໝືອນກັບວຽກການທີ່ສຳຄັນ ຢ່າໃຫ້ມັນເປັນພຣະທຽມ(ຮູບໂຄຣົບ)ໃນຊີວິດຂອງທ່ານ. ສິ່ງນຶ່ງທີ່ແຕກຕ່າງກັນລະຫວ່າງມົດແລະມະນຸດນັ້ນຄືຄວາມສາມາດ ຊຶ່ງສະທ້ອນໃຫ້ເຫັນ. ພວກເຮົາຮູ້ຈັກສິ່ງນີ້ເພາະວ່າພວກເຮົາຖືກບັນຊາໃຫ້ສັງເກດແລະຮຽນຮູ້ຈາກມົດ. ໃຫ້ພິຈາຣະນາເບິ່ງນິສັຍການທຳງານຕ່າງໆ ຂອງທ່ານແລະໃຫ້ໝັ້ນໃຈວ່າການງານເຫລົ່ານັ້ນຈະບໍ່ກາຍຂອບເຂດຄວາມສົມດູນຕໍ່ສິ່ງສຳຄັນອື່ນໆ. ນີ້ແມ່ນພາກສ່ວນນຶ່ງທີ່ເຮົາໄດ້ເອົາໃຫ້ຄົນອື່ນໃນສິ່ງທີ່ພວກເຂົາຕ້ອງການ.

2. <u>ສະແດງອອກໃຫ້ເຫັນຄວາມສັດຊື່:</u> (ສຸພາສິດ 6:16-19)

ການຫ້າມທຸກໆຢ່າງມີຄຸນຄ່າທີ່ດີຢູ່ເບື້ອງຫລັງ, ການໃຫ້ເຫດຜົນສຳລັບການຫ້າມທີ່ບົ່ງການໄວ້. ລຳດັບຂໍ້ຫ້າມໃນສຸພາສິດບົດທີ 6 ໄດ້ຊີ້ໃຫ້ເຫັນຢ່າງແຈ່ງແຈ້ງແລະມີເປົ້າໝາຍຄົບຖ້ວນຕໍ່ສິ່ງທີ່ຕ້ອງສຸມໃຈໃສ່. ການເຮັດແນວນັ້ນໄດ້ຊ່ວຍພວກເຮົາໃຫ້ເປັນຄົນທີ່ມີພຣະພອນຕໍ່ຄົນອື່ນ. ບາງຄົນໄດ້ບັນລະຍາຍສິ່ງນີ້ເໝືອນ "ຄວາມບາບອັນຮ້າຍກາດເຈັດປະການ" ຂອງຊາວອິສຣາເອນ.

ບາງຄັ້ງພວກເຮົາເວົ້າວ່າ, "ເຮີຍ, ເຈົ້າຢ່າເຂົ້າມາຢູ່ໃນລາຍຊື່ສິ່ງທີ່ບໍ່ດີຂອງຂ້ອຍ." ຂໍ້ພຣະຄັມພີວັກນີ້ແນະນຳ

ພວກເຮົາໃຫ້ເຂົ້າສູ່ລາຍຊື່ສິ່ງທີ່ບໍ່ດີທີ່ພຣະເจ້ົາລງາງໄວ້. ສິ່ງທີ່ບັນທຶກໄວ້ນີ້ແມ່ນສິ່ງໜ້າກງຂດໜ້າຊັງຕໍ່ພຣະຜູ້ເປັນເจ້ົາ, ເບິ່ງໃນແງ່ດງວກັນກັບການກະທຳເຊັ່ນ ການກິນອາຫານທີ່ບໍ່ສະອາດ, ນະມັສການພຣະທງມ, ແລະການຖວາຍເດັກ ເດັກນ້ອຍເປັນເຄື່ອງບູຊາ. ແນ່ນອນພວກເຮົາຕ້ອງເຫັນວ່ານີ້ແມ່ນສິ່ງຮ້າຍກາດທີ່ພຣະເจ້ົາລງາງລຳດັບໄວ້ໃນທີ່ນີ້.

ຖ້າຕາຫາກແນມໄປທີ່ຈິດໃຈ ດັ່ງນັ້ນ "ຕາຈອງຫອງ" ກໍເລັງເຖິງຫົວໃຈຂອງຄວາມອວດຕົວ. ຄວາມອວດຕົວ ນີ້ອາດຈະແນໃສ່ໂດຍຕົງທັງຕໍ່ຄົນອື່ນແລະຕໍ່ພຣະເจ້ົາ. ຄວາມຖ່ອມຕົວແມ່ນພື້ນຖານແລະມາກ່ອນການມີຄວາມ ສັມພັນກັບພຣະເจ້ົາ; ການມີຄວາມສັມພັນຕໍ່ມະນຸດກໍເປັນຈິງໃນທຳນອງດງວກັນນີ້. ຄວາມອວດຕົວໄດ້ປາກົດອອກ ເອງ ດ້ວຍການບໍ່ເຕັມໃຈຟັງຄົນອື່ນ, ບໍ່ຮັບເອົາຄຳແນະນຳຕັກເຕືອນ, ແລະຕູ່ໃສ່ຄົນອື່ນກ່ອນທີ່ຈະຍອມຮັບວ່າແມ່ນ ຄວາມຜິດຂອງຕົນເອງ.

ຄວາມຈິງເສີມສ້າງການໄວ້ວາງໃຈ. ບຸກຄົນທີ່ "ລົ້ນເວົ້າຕົວະ" ຈະຄົ້ນພົບວ່າຄົນອື່ນໆບໍ່ເກັບກຳຄຳເວົ້າຫຼືນິ ສັຍຂອງລາວ.

ການທຳສິ່ງຊົ່ວຮ້າຍອາດຈະຖືກຍົກຍ້ອງແລະຖືກຂວນໃຫ້ເຮັດໃນສັງຄົມຂອງພວກເຮົາແຕ່ບໍ່ແມ່ນໃນຣາຊອາ ນາຈັກຂອງພຣະເจ້ົາ. ພຣະອົງຊົງກງດຊັງແລະຢືນຕໍ່ສູ້ກັບ "ມືທີ່ເປື້ອນດ້ວຍເລືອດຂອງຜູ້ບໍ່ມີຄວາມຜິດ." ເວລາແລະ ຊ່ອງว່າງບໍ່ໄດ້ໃຫ້ສັນຍາຢ່າງລະອງດຂອງສິ່ງທັງປວງທີ່ອາດຈະນຳມາໃຊ້ໃນຂໍ້ຫ້າມນີ້ ແຕ່ພວກເຮົາຄວນຈະຖືກເຕືອນ ວ່າຄົນທີ່ທຳສິ່ງຊົ່ວຮ້າຍບໍ່ແມ່ນແບບຢ່າງສຳລັບພວກເຮົາຜູ້ທີ່ຕິດຕາມພຣະຄຣິດ (ສຸພາສິດ 3:31).

ຄວາມກະຕືລືລົ້ນແມ່ນຄຸນນະສົມບັດອັນຍິ່ງໃຫຍ່ (ຄາລາເຕັງ 4:17-18), ແຕ່ບໍ່ແມ່ນ "ກະຕືລືລົ້ນທີ່ນຳໄປສູ່ ສິ່ງຊົ່ວຮ້າຍ." ຄົນອື່ນຕ້ອງການຄວາມກະຕືລືລົ້ນຂອງທ່ານທີ່ເຫຼື້ອມໃສໃນພຣະເจ້�eົ ເພື່ອຊີ້ທາງໃຫ້ພວກເຂົາໄປສູ່ ຄວາມຊອບທັມໃນທີ່ສຸດ-ແຕ່ບໍ່ແມ່ນສິ່ງທີ່ນຳໄປສູ່ຄວາມຊົ່ວຮ້າຍ.

ການປະພຶດທີ່ບໍ່ເປັນທັມບາງຢ່າງປາກົດອອກໃນຄວາມສັມພັນສ່ວນບຸກຄົນ-ແຕ່ບາງຢ່າງໄດ້ແຜ່ຂະຍາຍໄປສູ່ ຣະບົບກົດໝາຍແລະຜົນທີ່ຕາມມາແມ່ນການນາບຂູ່ . ເປັນ "ພຍານເທັດທີ່ໃຫ້ຄຳພຍານບໍ່ຈິງ" ເໝືອນກັບຈີກແຜ່ນ ກົດໝາຍ. ຂໍ້ມູນທີ່ບໍ່ຖືກຕ້ອງນຳໄປສູ່ການຈັບກຸມທີ່ຜິດພາດແລະຖືກຄຸກຊຶ່ງເປັນການໝິ່ນປມາດພຣະເจ້ົາຜູ້ບໍຣິສຸດ. ເຖິງແມ່ນຢູ່ນອກໂຮງສານ, ພວກເຮົາຕ້ອງປ້ອງກັນຊື່ສຽງຂອງຄົນອື່ນທີ່ປາສຈາກຂໍ້ຕຳໜິ. ພວກເຮົາເປັນໜີ້ຄວາມຈິງ ຕໍ່ກັນແລະກັນ ບໍ່ພຽງແຕ່ຄຳເວົ້າຂອງພວກເຮົາເທົ່ານັ້ນແຕ່ທັງຄວາມຕັ້ງໃຈຂອງພວກເຮົາດ້ວຍ.

ການຖ່ອມຕົວ, ມີຄວາມສັດຊື່, ປາສຈາກຄວາມຊົ່ວຮ້າຍ, ການກະທຳທີ່ນຸ້ງໄປສູ່ສິ່ງທີ່ດີ, ກະຕືລືລົ້ນໃນ ຄວາມຊອບທັມ, ໂຄຣົບຕໍ່ຊື່ສຽງຂອງຄົນອື່ນ, ມີໄມຕຣີກັບຄົນອື່ນ. ສິ່ງເຫລົ່ານີ້ແມ່ນຄຸນນະສົມບັດຂອງຜູ້ທີ່ມີຄວາມ ສັດຊື່ ຊຶ່ງແມ່ນນິສັຍແລະຄຸນນະສົມບັດທີ່ຄົນອື່ນຕ້ອງການຈາກເຮົາ.

3. <u>ສະແດງອອກໃຫ້ເຫັນຄວາມບໍຣິສຸດ:</u> (ສຸພາສິດ 6:23-27)

ສິ່ງທີ່ເປັນອັນຕະລາຍຫຼາຍໄດ້ຖືກໝາຍເຕືອນໄວ້ຢ່າງລະອງດບໍ່ວ່າຈະເປັນເຄື່ອງໃຊ້ປະຈຳເຮືອນທີ່ມີສິ່ງອັນ ຕະລາຍປົນຢູ່ດ້ວຍຫຼືອັນຕະລາຍໃນຫົນທາງຂ້າງໜ້າ, ປ້າຍຕ່າງໆຈະໃຫ້ຄຳເຕືອນແກ່ພວກເຮົາເຖິງສິ່ງທີ່ອາດຈະເປັນ ບັນຫາ. ພຣະບັນຍັດຂອງພຣະເจ້ົາກໍຊີ້ບອກແນວນັ້ນແກ່ພວກເຮົາ ຂໍ້ບັນຍັດທັງປວງເຮັດໃຫ້ພວກເຮົາລະມັດລະວັງ ໃນສິ່ງທີ່ອາດເປັນພັຍອັນຕະລາຍໃນຕົວມັນເອງທີ່ລໍຢູ່ຂ້າງໜ້າພວກເຮົາໃນຫົນທາງເດີນຂອງຊີວິດ.

ບັນຍັດທັງປວງຂອງພຣະເจ້ົາເປັນຕະກງງແລະຄຳສອນທີ່ພວກເຮົາພົບໃນພຣະບັນຍັດເປັນແສງສະຫວ່າງ. ພວກເຮົາຕ້ອງການໃຫ້ພຣະຄັມພີກ່າວຕໍ່ພວກເຮົາເຖິງເສັ້ນທາງຂອງຊີວິດ. ຄວາມຈິງຈາກເບື້ອງເທິງຊອກຫາທາງປົກ ປັກຮັກສາພວກເຮົາໃນເຣື່ອງຄວາມບໍຣິສຸດທາງເພດ ຈາກຜູ້ຍິງຊົ່ວຮ້າຍທີ່ໄດ້ກ່າວເຖິງໃນຂໍ້ພຣະຄຳຕອນນີ້. ແຕ່ພວກ ເຮົາກໍຮູ້ຈັກການທົດລອງມີກັບທຸກເພດທີ່ບໍ່ສະເພາະເจາະจົງ. ທັງສອງ ຄືຜົວແລະເມັຽຕ້ອງບຸກບືນຫາຄວາມບໍຣິສຸດ

ຊຶ່ງພຣະເຈົ້າຊົງຮຽກເອີ້ນໃຫ້ພວກເຮົາເຮັດ.

ຈົ່ງລະວັງລີ້ນທີ່ເວົ້າລ່ຽນໄຫຼຂອງບາງຄົນທີ່ຈະຍົວະເຍົ້າທ່ານໃຫ້ເຂົ້າສູ່ຄວາມສັມພັນທີ່ຜິດກົດເກນ ຊຶ່ງເບິ່ງເໝືອນວ່າເປັນຄຳຊົມເຊີຍທີ່ອອກມາຈາກໃຈຈິງ ທີ່ກ່າວໂດຍທາງສ່ວນຕົວຫຼືແມ້ແຕ່ໃນທາງອິນເຕີແນັດເຊັ່ນ ເຟສບຸກ, ສາມາດເຮັດໃຫ້ຊີວິດແຕ່ງງານພັງທະລາຍໄດ້ໂດຍການເປີດປະຕູໃຫ້ມີການນອກໃຈກັນຈາກຊີວິດແຕ່ງງານ.

ຈຸດເລີ້ມຕົ້ນສຳລັບຄວາມບໍຣິສຸດແມ່ນໃນຫົວໃຈຂອງທ່ານ. ພຣະເຢຊູໄດ້ສອນວ່າຣາຄະຕັນຫາແມ່ນບໍ່ເກີດຂອງການຜິດຊາຍຍິງ (ມັດທາຍ 5:27-28). ຈົງໃຫ້ "ຕາຂອງຫົວໃຈທ່ານ" ຫຼັບໄວ້ຕໍ່ສິ່ງລໍ້ລວງຕ່າງໆທີ່ນອກເໝືອໄປຈາກສິ່ງທີ່ຄູ່ຄອງຂອງທ່ານມອບໃຫ້. ຈົ່ງລະວັງວ່າທ່ານປາຖນາຫຍັງແລະເຝົ້າລະວັງບ່ອນທີ່ທ່ານຍອມໃຫ້ຄວາມຄິດຂອງທ່ານເກີດຄວາມຫລົງໄຫລ.

ຄວາມສຳຄັນຂອງຄວາມບໍຣິສຸດແມ່ນການຫຼີກເວັ້ນການເຂົ້າມີສ່ວນກັບຮູບລາມົກໃນທຸກໆຮູບແບບ. ສັງຄົມຂອງພວກເຮົາເນັ້ນໃສ່ການໃຊ້ນ້ຳແລະອາຫານທີ່ບໍຣິສຸດ. ພຣະເຈົ້າກໍປະສົງໃຫ້ພວກເຮົາເຮັດທໍ່ໆກັນໃນເຣື່ອງຄວາມບໍຣິສຸດຂອງສິ່ງທີ່ເຂົ້າໄປໃນຈິດໃຈຂອງພວກເຮົາ. ຖ້າທ່ານຫາກຍິນຍອມເຂົ້າໄປມີສ່ວນກັບສິ່ງນີ້ ຈົ່ງທູນຂໍການອະພັຍໂທດຈາກພຣະເຈົ້າແລະສ້າງຄວາມໜ້າເຊື່ອຖືກັບຄົນເພດດຽວກັນເພື່ອປ້ອງກັນການກັບໄປຫາສິ່ງເລວຊາມນັ້ນອີກ.

ການຖືໄຟໄວ້ໃກ້ຕົວເຮົາໂດຍທີ່ບໍ່ໃຫ້ມັນໃໝ້ເຄື່ອງນຸ່ງກໍເປັນໄປບໍ່ໄດ້. ດັ່ງນັ້ນມັນເປັນໄປບໍ່ໄດ້ທີ່ຈະບໍ່ລະເມີດຕະຖານຂອງພຣະເຈົ້າເຣື່ອງຄວາມບໍຣິສຸດຂອງຊີວິດການແຕ່ງງານ ໂດຍບໍ່ມີຄວາມທຸກທໍຣະມານຈາກຜົນທີ່ຕາມມາ. ອັນນີ້ຄືເຫດຜົນວ່າເປັນຫຍັງຂໍ້ພຣະຄັມພີຈຶ່ງເຕືອນພວກເຮົາໃຫ້ຊັ່ງຊາຄວາມສນຸກສນານອັນສັ້ນໆກັບຜົນສະທ້ອນອັນຍາວນານ.

ບົດຮຽນຊີວິດ

ຂນະທີ່ທ່ານປູກຝັງຄວາມດຸໝັ່ນຂຍັນໝັ່ນພຽນ, ກຽດສັກສີ, ແລະຄວາມບໍຣິສຸດໃນຄວາມສັມພັນສ່ວນ ຕົວ, ທັງຕົວທ່ານເອງແລະຄົນອື່ນຈະໄດ້ຮັບພອນ. ການພັດທະນານິສັຍຂອງທ່ານເພື່ອທ່ານຈະໄດ້ກາຍເປັນຄົນທີ່ຄົນອື່ນຕ້ອງການແມ່ນກຳໄລອັນດີທີ່ສຸດຂອງຄົນອື່ນ ເຖິງແມ່ນມັນອາດສ້າງຄວາມຫຍຸ້ງຍາກສຳລັບພວກເຂົາໃນຊ່ວງເວລາອັນສັ້ນກໍຕາມ.

ຄວາມສັມພັນອັນຍິ່ງໃຫຍ່ ແນ່ນອນແມ່ນພຣະພອນທີ່ມາຈາກເບື້ອງເທິງ ຍາກທີ່ຈະມາເຖິງພວກເຮົາໂດຍທີ່ພວກເຮົາບໍ່ໄດ້ເຮັດຫຍັງເລີຍ. ຄວາມສັມພັນເຫຼົ່ານີ້ຖືກສ້າງຂຶ້ນໂດຍຜ່ານການປະພຶດທີ່ມີຫຼັກແລະນິສັຍທີ່ຖືກຕ້ອງ. ທ່ານກຳລັງເຮັດແນວໃດໃນເຣື່ອງຂ້າງລຸ່ມນີ້ເພື່ອນິສັຍຂອງທ່ານຈະດີຂຶ້ນ?

- ຄວາມດຸໝັ່ນຂຍັນໝັ່ນພຽນແມ່ນຄວາມຕັ້ງໃຈອອກເຫື່ອເທແຮງຢ່າງຕໍ່ເນື່ອງເພື່ອຄົນອື່ນໆຈະບໍ່ໄດ້ເອົາບ່າມາຊວ້ານໜ້າທີ່ຮັບຜິດຊອບຂອງທ່ານ.
- ຄວາມສັດຊື່ເຮັດໃຫ້ຄົນອື່ນເຫັນທ່ານດີຂຶ້ນ ລະຫວ່າງຄວາມຄິດຂອງເຂົາເຈົ້າທີ່ວ່າທ່ານແມ່ນໃຜ ແລະຕົວທ່ານທີ່ແທ້ຈິງແມ່ນໃຜກັນແທ້.
- ຄວາມບໍຣິສຸດແມ່ນການຮັກສາໝົດທັງຕົວແລະມີຄວາມຄິດທີ່ສະອາດໃນຊີວິດ ພ້ອມທັງການປະພຶດທີ່ບໍ່ມີຂໍ້ຕຳໜິ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA

ບົດຮຽນໂຮງຮຽນວັນອາທິດ
ວັນອາທິດ ທີ 26 ພຶສພາ 2013 (5-26-2013)

ໃຫ້ສິ່ງທີ່ຄົນອື່ນຕ້ອງການທີ່ແທ້ຈິງ

ຂໍ້ພຣະຄັມພີໃນບົດຮຽນ: ສຸພາສິດ 11:12-14;17:17; 18:24; 27:5-6, 9-10,17; 28:23; 29:10

ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານໄດ້ຢ່າງໃດ

ບົດຮຽນນີ້ສາມາດຊ່ວຍທ່ານຮັບເອົາຄຸນຄ່າຂອງການລົງທຶນໃນຊີວິດຂອງຄົນອື່ນແລະການຈູງໃຈ ພວກເຂົາມາຫາພຣະຄຣິດ.

ບົດຮຽນນີ້ເວົ້າກ່ຽວກັບຫຍັງ

ບົດຮຽນນີ້ຈົດຈ່ໃສ່ຂະບວນການຂອງນິສັຍສາມປະການທີ່ສາມາດເປັນພລັງດົນໃຈຄົນອື່ນໆ.

ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ

ພວກທີ່ເຖິງກະສຽນຫຼາຍຄົນອາດຈະໃຫ້ຄວາມໝາຍຂອງການເປັນເພື່ອນຄືພວກຄົນທີ່ພວກເຮົາມັກແລະດີຕໍ່ພວກເຮົາ. ແຕ່ວ່າເພື່ອນແທ້ນັ້ນແມ່ນຜູ້ທີ່ຈະສັດຊື່ກັບພວກເຮົາ, ຢູ່ຄຽງຂ້າງກັບພວກເຮົາບໍ່ວ່າເຣື່ອງໃດກໍຕາມ, ແລະຮັກພວກເຮົາພໍທີ່ຈະບອກພວກເຮົາໃນສິ່ງທີ່ພວກເຮົາຢາກໄດ້ຍິນ. ຄຸນຄ່າຂອງບົດຮຽນນີ້ແມ່ນທີ່ມັນສະແດງໃຫ້ເຫັນຄຸນນະພາບທີ່ໃຫ້ເຫັນຊັດເຈນຂອງຄຳວ່າເພື່ອນ.

ຄຳຖາມສຳລັບຊີວິດ

ບາດກ້າວຫຍັງແດ່ທີ່ຂ້ອຍສາມາດເຮັດເພື່ອຊ່ວຍຂ້ອຍລົງທຶນໃນຜູ້ອື່ນ?

"ເຈົ້າຢາກໃຫ້ຂ້ອຍເຮັດໃຫ້ເຈົ້າຮູ້ສຶກດີຂຶ້ນບໍ່, ຫຼືເຈົ້າຕ້ອງການໃຫ້ຂ້ອຍບອກເຈົ້າເຖິງຄວາມຈິງ?" ຊ່າງແປງອາຍເຢັນໄດ້ຖາມກ່ຽວກັບໜ່ວຍອາຍເຢັນໃນເຮືອນຂອງຂ້າພະເຈົ້າ.

ຂ້າພະເຈົ້າໄດ້ຄິດຢູ່ໜ້ອຍນຶ່ງ, "ເອີ, ເຮັດໃຫ້ຂ້ອຍມີຄວາມຮູ້ສຶກດີຂຶ້ນ." ແນ່ນອນ, ຂ້ອຍຮູ້ຈັກແລ້ວວ່າຂ້ອຍຕ້ອງການຢາກໄດ້ຍິນຄວາມຈິງ.

ຖ້າຈະເອົາສິ່ງທີ່ຄົນອື່ນຕ້ອງການໃຫ້ເຂົາເຈົ້າແທ້ໆ, ທ່ານແລະຂ້າພະເຈົ້າຕ້ອງມີສະຕິແລະສະແດງອອກເຖິງຄຸນສົມບັດເຊັ່ນຄວາມສັດຊື່, ຄວາມຈິງຮັກພັກດີ, ແລະຄວາມສນັບສນູນ. ທາງເຫຼົ່ານີ້ແຫຼະແມ່ນພວກເຮົາລົງ ທຶນໃນຊີວິດຂອງຄົນອື່ນແລະສະທ້ອນໃຫ້ເຂົາເຈົ້າເຫັນພຣະຄຣິດ.

<u>ສຶກສາພຣະຄັມພີ</u>

1. <u>ປະຕິບັດຄວາມສັດຊື່</u> (ສຸພາສິດ 27:5-6; 28:23; 29:10)

ທ່ານເຄີຍໄດ້ຮັບຄຳຕັກເຕືອນທີ່ສົມຄວນໄດ້ຮັບຈາກເພື່ອນບໍ່? ຂ້າພະເຈົ້າເຄີຍຖືກແລ້ວ ຊຶ່ງໄດ້ເກີດຂຶ້ນກວ່າ

25 ປີຜ່ານມາແລ້ວ, ແລະຂ້າພະເຈົ້າຍັງສາມາດຈົດຈຳລາຍລະອຽດບາງຢ່າງຂອງຄຳສິນທະນາ ພ້ອມທັງຄວາມລະອາຍທີ່ໄດ້ຮູ້ສຶກຫຼັງຈາກນັ້ນ. ຕອນທຳອິດຂອງການຕິຕຽນແບບນີ້ເຮັດໃຫ້ເຈັບຫຼາຍກວ່າໄລພິດຂອງຄຳວິຈານຈາກສັດຕຣູ. ໃນກໍຣະນີຂອງຂ້າພະເຈົ້າ, ຂ້າພະເຈົ້າຖືກປ່ຽນແປງແລະດຽວນີ້ເປັນຄົນດີຂຶ້ນກວ່າເກົ່າຍ້ອນການຕຳໜິດ້ວຍຄວາມຮັກທີ່ເຮັດຕໍ່ຂ້າພະເຈົ້າ. ເພື່ອນຂອງຂ້າພະເຈົ້າມັກປົກປິດໃນສິ່ງທີ່ຄວນເວົ້າ ແຕ່ຂ້າພະເຈົ້າກໍຂອບໃຈແທນທີ່ລາວຈະເອົາສິ່ງທີ່ຂ້າພະເຈົ້າຕ້ອງການໃຫ້ຂ້າພະເຈົ້າ.

ພວກເຮົາຖືກທົດລອງໃຫ້ເຮັດຕໍ່ບາງຄົນແບບເຜີນໆບໍ່ຈິງໃຈ ແທນທີ່ຈະໃຫ້ເປັນແຜທໍຣະມານໂດຍຄວາມຈິງຈາກຄຳກ່າວທີ່ໜ້ານັບຖືນັ້ນ. ແຕ່ເພື່ອນແທ້ຈະເອົາໃຈໃສ່ສິ່ງທີ່ຄົນອື່ນຕ້ອງການຫຼາຍກວ່າຄວາມພໍໃຈສ່ວນຕົວຂອງລາວ. ຄຳຕຳໜິທີ່ສັດຊື່ມີປໂຍດທີ່ສຸດຖ້າຫາກບໍ່ໃຊ້ເລື້ອຍເກີນໄປ, ໃຊ້ພຽງບາງໂອກາດທີ່ຈຳເປັນຕ້ອງໃຊ້ເທົ່ານັ້ນ.

ຄວາມສັດຊື່ດີກວ່າຄວາມບໍ່ຈິງໃຈ ເປັນພິເສດແມ່ນເມື່ອມາຈາກພຣະຄຳຂອງພຣະເຈົ້າ. ການເວົ້າຕໍ່ຄົນອື່ນທີ່ນອກເໜືອສະຕິປັນຍາຂອງທ່ານເອງເບິ່ງຄືວ່າສັດຊື່ຕໍ່ທ່ານ ແທ້ຈິງແລ້ວມັນອາດຈະຈົບລົງດ້ວຍການນຳພາບາງ ຄົນໃຫ້ຫ່າງເຫີນໜີໄປແທນທີ່ຈະດຶງເຂົ້າມາສູ່ຄວາມຈິງ ແລະຢ່າລືມວ່າທ່ານຕ້ອງສັດຊື່ກັບຕົວທ່ານເອງດ້ວຍ.

ເພື່ອນຂອງຂ້າພະເຈົ້າ ຊຶ່ງໄດ້ປະເຊີນໜ້າກັບຂ້າພະເຈົ້ານັ້ນ ໃນທີ່ສຸດລາວໄດ້ຮັບຄວາມນັບຖືຈາກຂ້າພະເຈົ້າຫຼາຍຂຶ້ນ ເພາະສິ່ງທີ່ລາວໄດ້ເຮັດ. ບໍ່ແມ່ນຄຳຍ້ອງຍໍຄືສິ່ງທີ່ເຮົາຕ້ອງການແຕ່ແມ່ນຄວາມຈິງ ເພາະເຮົາສ່ວນຫຼາຍຕົວະຕົນເອັງ. ຢ່າງໃດກໍຕາມ ເມື່ອເວລາໄດ້ຜ່ານໄປແລ້ວຂ້າພະເຈົ້າຈຶ່ງໄດ້ເຂົ້າໃຈເຖິງບຸນຄຸນທີ່ລາວໄດ້ເຮັດຕໍ່ຂ້າພະເຈົ້າ. ຈົ່ງເຕັມໃຈທີ່ຈະທົນທຸກທໍຣະມານໃນຊ່ວງລະຍະອັນສັ້ນເພື່ອຈະໄດ້ປໂຍດຈາກຄົນອື່ນໃນລະຍະຍາວ.

ຂນະທີ່ຍັງເປັນເດັກນ້ອຍຢູ່, ທ່ານອາດຈະໄດ້ຍິນວ່າ "ບໍ່ແມ່ນສິ່ງທີ່ທ່ານເວົ້າແຕ່ວິທີທີ່ທ່ານເວົ້ານັ້ນຄືບັນຫາ." ຄວາມຈິງແລ້ວທັງສອງກໍສຳຄັນ. ສິ່ງທີ່ເຮົາບອກຄົນອື່ນແມ່ນຄວາມຈິງແລະຄວາມຕົງຕໍ່ເປົ້າເປັນສິ່ງສຳຄັນ ແຕ່ວິທີທີ່ເຮົາເວົ້ານັ້ນກໍສຳຄັນເທົ່າໆກັນ ຄຳຕຳໜິສາມາດກ່າວແບບເຈັບໆແລະບໍ່ຈົ່ງໜ້າກໍໄດ້. ພຣະຄັມພີສອນພວກເຮົາໃຫ້ກ່າວ "ຄວາມຈິງໃນຄວາມຮັກ" (ເອເຟໂຊ 4:15). ພຣະເຢຊູນຳມາທັງສອງຢ່າງຄື "ພຣະຄຸນແລະຄວາມຈິງ" (ໂຢຮັນ 1:17). ພວກເຮົາຄວນຈະບຸກບືນເອົາໝົດທັງສອງເຊັ່ນກັນ.

ການໂອ້ລົມຢ່າງເປີດເຜີຍແລະສັດຊື່ຄວນຈະເປັນຄຸນນະສົມບັດອັນດີໃນຄວາມສັມພັນໃນພຣະກາຍຂອງພຣະຄຣິດ. ເປັນດ້ວຍເຫດໃດຜູ້ທີ່ອ້າງວ່າຕົນຮູ້ຈັກຄວາມຈິງທີ່ໄດ້ເປີດເຜີຍຈາກສວັນແຕ່ບໍ່ເຕັມໃຈແບ່ງປັນແລະຮັບຟັງຈາກຜູ້ອື່ນ? ຄວາມສັມພັນແບບເຮັດຫຼີ້ນແລະຕົ້ນໆ ຈະບໍ່ນຳພຣະກຽດມາສູ່ພຣະເຈົ້າ. ພວກເຮົາສາມາດເປັນແບບຢ່າງຄວາມຈິງຂອງພຣະເຈົ້າດ້ວຍຄວາມເຕັມໃຈເວົ້າແລະເຕັມໃຈຮັບຟັງ.

ແນ່ນອນ, ບໍ່ແມ່ນທຸກຄົນຢາກໄດ້ຍິນຄວາມຈິງ ແທ້ຈິງແລ້ວຄົນຊົ່ວຮ້າຍອາດຈະກຽດຊັງຄົນສັດຊື່. ຜູ້ທີ່ຊື່ຕົງຈະເຕັມໃຈຮັບເອົາການຕິຕຽນທີ່ອ່ອນສຸພາບຢ່າງແທ້ຈິງຕາມການເວລາ. ເຖິງແມ່ນໃນອົງການຈັດຕັ້ງ ພວກຜູ້ນຳທີ່ຮັບໃຊ້ທີ່ແທ້ຈິງຈະຮັບເອົາຄຳຕິຊົມທີ່ກໍ່ສ້າງແລະການຕຳໜິ ເພາະວ່າເຂົາເຈົ້າໄດ້ຕັດສິນໃຈຢ່າງແນ້ວແນ່ທີ່ຈະເຮັດໃຫ້ໝົດທັງກຸ່ມມີຄວາມເພິ່ງພໍໃຈ ບໍ່ແມ່ນເພື່ອຊື່ສຽງຂອງເຂົາເຈົ້າ.

2. <u>**ສະແດງຄວາມຈິງຮັກພັກດີ**</u> (ສຸພາສິດ 17:17; 18:24; 27:10)

ທ່ານສາມາດບັນລະຍາຍການຕັດສິນໃຈແນ້ວແນ່ຂອງທ່ານຕໍ່ຄົນອື່ນວ່າ "ຮັກຕລອດຣະດູການ"? ການຮັກບາງຄົນໃນລະດູໃບໄມ້ປົ່ງຂອງຊີວິດເປັນການງ່າຍເພາະທຸກສິ່ງໃໝ່ແລະໜ້າຕື່ນເຕັ້ນ. ຢູ່ໃນລະດູຮ້ອນຂອງຄວາມຮັກກໍຂ້ອນຂ້າງງ່າຍຢູ່ ກັບວັນທັງຫຼາຍທີ່ມີພຽງເລັກນ້ອຍທີ່ຕ້ອງເຮັດ. ລະດູໃນໄມ້ຫຼົ່ນນຳການທ້າທາຍມາຢ່າງຫຼວງຫຼາຍ. ປານນັ້ນ, ເມື່ອຍາມເກັບກ່ຽວມາເຖິງແລະໝາກຜົນຂອງການອອກແຮງສາມາດເຫັນໄດ້, ຄວາມຮັກສາມາດເຫັນລາງວັນຕອບແທນ. ລະດູໜາວເດເປັນແນວໃດ? ຄວາມຮັກຂອງທ່ານຕໍ່ຄົນອື່ນຍັງອຸ່ນຢູ່ບໍ່ເຖິງແມ່ນເຂົາເຈົ້າເຢັນຊາຕໍ່ທ່ານ?

ກະສັດໂຊໂລໂມນໄດ້ເຕືອນພວກເຮົາວ່າ "ເພື່ອນຮັກຕລອດເວລາ." ໃນຄວາມສັມພັນຈະບໍ່ມີເວລາໃດທີ່

ຍາກໄປກວ່າເມື່ອທ່ານຕ້ອງເອົາສິ່ງທີ່ຈຳເປັນໃຫ້ເຂົາເຈົ້າແທນທີ່ຈະແມ່ນສິ່ງທີ່ພວກເຂົາຕ້ອງການ. ຄຳເວົ້າເກົ່າໆກໍ່ສອນພວກເຮົາວ່າເພື່ອນແທ້ບໍ່ເຄີຍຂວາງທາງຂອງທ່ານຈົນກວ່າທ່ານກຳລັງຈະລົ້ມລົງ.

ບາງຄັ້ງຄົນທັງຫລາຍກໍ່ຕ້ອງການຄຳໜູນໃຈເຖິງແມ່ນພວກເຂົາກະທຳຜິດຢ່າງໃຫຍ່ຫຼວງ. ໃນບາງເວລາເມື່ອເຂົາເຈົ້າບໍ່ເຂົ້າໃຈເຖິງສະພາບຄວາມຈິງຂອງຊີວິດ ເຂົາຕ້ອງຕ້ອງການໃຫ້ທ້າທາຍ. ຫຼາຍໆຄັ້ງສະຖານະການຫຍຸ້ງຍາກແມ່ນເວລາມີເພື່ອນໃຫມ່.

ຫຼາຍຄົນວັດແທກສັງຄົມແລະການສັມພັນຊີວິດດ້ວຍຈຳນວນໝູ່ເພື່ອນທີ່ພວກເຂົາມີ. ນີ້ບໍ່ໄດ້ຮັບປະກັນວ່າທ່ານຈະບໍ່ໄດ້ຮັບຜົນສະທ້ອນຈາກການເລືອກທີ່ຜິດແລະການປະພຶດທີ່ບໍ່ດີ. ສິ່ງທີ່ທ່ານຕ້ອງການແທ້ໆນັ້ນ-ແລະແມ່ນຫຍັງທີ່ພວກເຮົາຢາກເປັນ-"ເພື່ອນຜູ້ຢູ່ໃກ້ຊິດກວ່າອ້າຍນ້ອງ." ຄວາມຈິງຮັກພັກດີປະເພດນີ້ເກີດຂຶ້ນໜ້ອຍກວ່າທີ່ພວກເຮົາຫວັງເອົາໄວ້. ຜູ້ຮັບໃຊ້ພຣະເຈົ້າ ເຈີໂຣມ (ຄ.ສ. 345-420) ໄດ້ຂຽນໄວ້ວ່າ, "ຂອກຫາເພື່ອນຕ້ອງໃຊ້ເວລາ ຍາກຫຼາຍທີ່ຈະພົບ, ແລະຍາກທີ່ຈະຮັກສາໄວ້." (Craig Brian Larson, Brian Lowery, gen. eds., 1001 Quotations That Connect, [Grand Rapids, MI: Zondervan, 2009], 88.)

ເພາະເຫດຜົນນີ້ເອງ, ການສະແດງຄວາມຈິງຮັກພັກດີຖ້ຳມກາງຄວາມສັມພັນໃນຄຣິສຕະຈັກອາດຈະເປັນອັນນຶ່ງທີ່ດີທີ່ສຸດເພື່ອໃຊ້ດຶງດູດໃນປ່າວປະກາດຂ່າວປະເສີດ. ຫຼາຍໄປກວ່ານີ້ແມ່ນການນຳຄົນມາຫາພຣະຄຣິດ, ຄວາມສັດຊື່ປະເພດນີ້ແມ່ນສຳຄັນຕໍ່ຄວາມສັມພັນໃນການຕັກເຕືອນແລະການເປັນຜູ້ອົບຮົມຜູ້ເຊື່ອທີ່ໃຫຍ່ແລ້ວນັ້ນເພື່ອຊ່ວຍຜູ້ທີ່ຍັງເປັນເດັກອ່ອນໃນພຣະຄຣິດໃຫ້ເຕີບໂຕຂຶ້ນເຖິງຄວາມເປັນຜູ້ໃຫຍ່.

ໜ້າທີ່ຮັບຜິດຊອບຂອງຄຣິສຕຽນຕໍ່ຜູ້ອື່ນ

-ຍອມຟັງຊຶ່ງກັນແລະກັນ (ເອເຟໂຊ 5:21
-ເປັນຄົນເມດຕາເອັນດູກັນ (ເອເຟໂຊ 4:32)
-ເປັນຕົວຢ່າງທີ່ດີ (ໂຣມ 13:7)
-ເປັນຄົນອົດທົນ (ເອເຟໂຊ 4:2)
-ປ້ອງກັນຄວາມເຊື່ອ (1 ເປໂຕ 3:15)
-ຍົກໂທດແກ່ກັນແລະກັນ (ໂກໂລຊາຍ 3:13)
-ໃຫ້ກຽດ (ໂຣມ 12:10)
-ຮັກ (ໂຍຮັນ 15:12-17)
-ປະກາດຂ່າວປະເສີດ (2 ໂກຣິນໂທ 5:20)
-ຍອມຮັບຄວາມເທົ່າທຽມກັນ (ຄາລາເຕັງ 3:28)
-ສະແດງຄວາມເມດຕາ (ມັດທາຍ 5:7)
- ຮັບແບກພາຣະຊ່ວຍກັນແລະກັນ (ຄາລາເຕັງ 6:1-2)
-ຢູ່ໃນຄວາມສງົບ (ໂຣມ 12:18)
-ເອື້ອເຟື້ອເພື່ອແຜ່ (ເຮັບເຣີ 13:16)
-ເປັນຄົນທີ່ປານີ (1 ເທຊະໂລນິກ 5:12)
-ເປັນຄົນສລາດ (ໂກໂລຊາຍ 4:5)
-ເຮັດດີ (ມັດທາຍ 7:12)
-ໜູນໃຈກັນແລະກັນ (ເຮັບເຣີ 3:13)
-ມີນ້ຳນຶ່ງໃຈດຽວກັນ (ໂຣມ 15:5)
-ອະທິຖານ (ຢາໂກໂບ 5:16)
-ໃຫ້ຄວາມອົບອຸ່ນ (2 ໂກຣິນໂທ 1:3-4)
-ສະແດງຄວາມຕ້ອນຮັບ (1 ເປໂຕ 4:9)
-ສະແດງຄວາມເສົ້າສລົດໃຈ (1 ເປໂຕ 3:8)

(Source: Walter Elwell's *Topical analysis of the Bible,* pp. 669-678)

3. <u>ເປັນຜູ້ສນັບສນູນ:</u> (ສຸພາສິດ 11:12-14; 27:9,17)

ມີບາງເວລາທີ່ເພື່ອນຂອງພວກເຮົາຕ້ອງການຄຳໜູນໃຈຈາກພວກເຮົາ. ບາງເວລາພວກເຂົາພຽງແຕ່ຢາກໃຫ້ເຮົາເປັນຜູ້ຟັງ. ໃນກໍຣະນີນີ້, "ຜູ້ມີຄວາມເຂົ້າໃຈຈະມິດງຽບຢູ່." ຢ່າຖືວ່າເປັນຄວາມກົດດັນວ່າເຮົາມີຄຳຕອບທີ່ຖືກຕ້ອງສເມີໄປສຳລັບໝູ່ເພື່ອນຜູ້ທີ່ກຳລັງມີບັນຫາ. ສນັບສນູນພວກເຂົາເຈົ້າໂດຍການປາກົດຕົວຂອງທ່ານ ເຖິງແມ່ນຈະຕ້ອງມິດງຽບຢູ່ກໍ່ຕາມ.

ຄວາມມິດງຽບແມ່ນພາກສ່ວນຂອງການເປັນເພື່ອນມິດໃນອີກທາງນຶ່ງເໝືອນກັນ, ເພາະວ່າເພື່ອນດີເກັບຮັກສາຄວາມລັບໄວ້. ທຸກໆຄົນຕ້ອງການບ່ອນທີ່ປອດພັຍເພື່ອລະບາຍແລະສົນທະນາບັນຫາຕ່າງໆໂດຍບໍ່ຢ້ານວ່າຄວາມລັບຈະຖືກເປີດເຜີຍໃຫ້ຄົນອື່ນໆຮູ້. ທ່ານສາມາດສ້າງບ່ອນໃຫ້ລີ້ພັຍສຳລັບຜູ້ທີ່ມີຄວາມຕ້ອງການເຊັ່ນນັ້ນ.

ອີກປະການນຶ່ງ, ເວລາອັນເໝາະສົມຈະເກີດຂຶ້ນເພື່ອໃຫ້ພວກເຮົາສະແດງການສນັບສນູນຂອງພວກເຮົາຕໍ່ໝູ່ເພື່ອນໂດຍການໃຫ້ຄຳປຶກສາແລະນຳພາທີ່ສລາດແກ່ພວກເຂົາ. ໃຫ້ໝັ້ນໃຈວ່າຄຳແນະນຳນັ້ນມີທັງສອງຄືຄົນອື່ນເປັນຜູ້ຊອກຫາແລະມີພື້ນຖານມາຈາກພຣະຄຳຂອງພຣະເຈົ້າ.

ການຕັດສິນໃຈທີ່ດີສຳຄັນຫຼາຍຕໍ່ການໃຫ້ສິ່ງທີ່ຄົນອື່ນຕ້ອງການ. ບາງຄັ້ງບາງຄົນກໍຕ້ອງການ "ຄວາມອ່ອນຫວານຂອງເພື່ອນ," ຄຳເວົ້າທີ່ເໝືອນນ້ຳມັນປົ່ນປ້ວວິນຍານທີ່ບາດເຈັບ." ບາງຄັ້ງ, ການສົນທະນາທີ່ເຜັດຮ້ອນກໍເກີດຂຶ້ນລະຫວ່າງໝູ່ເພື່ອນ ອັນນີ້ແມ່ນສິ່ງທີ່ຄາດຫວັງເອົາໄວ້ເມື່ອ "ເຫຼັກຝົນເຫຼັກ ຄົນນຶ່ງຖືກຝົນຈາກອີກຄົນນຶ່ງ." ການສນັບສນູນມາໃນຫຼາຍໆຮູບແບບ-ອາດຈະມາໃນແບບການໜູນໃຈຫຼືອາດມາໃນແບບການທ້າທາຍ. ຄຳຕອບນັ້ນແມ່ນຕ້ອງມາກັບຄວາມເພິ່ງພໍໃຈຂອງຄົນອື່ນສເມີຊຶ່ງແມ່ນສິ່ງສຳຄັນລະດັບນຶ່ງຂອງພວກເຮົາ.

ຢ່າສລຸບເອົາວ່າເພື່ອນທຸກໆ ຄົນຂອງທ່ານຈະເປັນຜູ້ຈົງຮັກພັກດີຕໍ່ທ່ານເໝືອນດັ່ງທ່ານຈົງຮັກພັກດີຕໍ່ລາວ. ການຮັກສາການສນັບສນູນທີ່ສັດຊື່ເຖິງແມ່ນຜົນປໂຍດທັງສອງຝ່າຍບໍ່ເທົ່າທຽມກັນ ແຕ່ນັ້ນແມ່ນຄຸນນະສົມບັນອັນສຳຄັນຂອງຄວາມຮັກຄຣິສຕຽນ. ຄວາມສັມພັນທີ່ບໍ່ສມ່ຳສເມີທີ່ກ່າວມານີ້ຈະເທົ່າທຽມກັນໄດ້ດ້ວຍການເພີ້ມເຕີມຈາກພຣະວິນຍານບໍຣິສຸດ. ຈົ່ງໃຫ້ພຣະອົງເພີ້ມພລັງທ່ານຂນະທີ່ທ່ານຊອກຫາການສນັບສນູນຄົນອື່ນໃນທາງທີ່ສົມບູນດີ, ຄືທາງທີ່ຖວາຍກຽດແກ່ພຣະຄຣິດ.

ບົດຮຽນຊີວິດ

ມີແຕ່ສອງຢ່າງທີ່ຈະໝັ້ນຄົງຢູ່ຕລອດໄປ, ຄືຄົນແລະພຣະຄຳຂອງພຣະເຈົ້າ. ເມື່ອພິຈາຣະນາເບິ່ງຄວາມຈິງນີ້, ກໍເປັນເຫດຜົນທີ່ດີວ່າຄວາມສັມພັນແລະການເປັນສາວົກແມ່ນການລົງທຶນທີ່ດີທີ່ສຸດທີ່ພວກເຮົາສາມາດເຮັດໄດ້ຂນະທີ່ຍັງຢູ່ໃນໂລກນີ້. ການທຸ້ມເທເວລາແລະເຫື່ອແຮງໃສ່ການຊ່ວຍເຫຼືອບາງຄົນໃຫ້ໃຫຍ່ຂຶ້ນບໍ່ວ່າຈະແມ່ນຄອບຄົວຫຼືເພື່ອນຝູງກໍຕາມແມ່ນສິ່ງນຶ່ງທີ່ຍິ່ງໃຫຍ່ທີ່ສຸດທີ່ທ່ານສາມາດເຮັດໃນຊີວິດຂອງທ່ານ. ແນ່ນອນ, ບາງສິ່ງແມ່ນມີຄຸນຄ່າຢ່າງແທ້ຈິງສຳລັບພວກເຮົາເມື່ອມັນຫາກຜ່ານການທົດສອບພຽງສອງສາມຢ່າງເທົ່ານັ້ນ ບໍ່ວ່າພວກເຮົາຈະເວົ້າຫຍັງກໍຕາມ ພວກເຮົາອາດສາມາດສລຸບການທົດສອບສາມຢ່າງຂອງຄຸນຄ່າໄດ້ດັ່ງນີ້:

- ລາຍຈ່າຍຕ່າງໆ ຈາກເງິນທີ່ທ່ານມີ
- ການແບ່ງເວລາ(ກຳນົດເວລາ)ຂອງທ່ານ
- ຄວາມສັມພັນອັນມີຄຸນນະພາບຂອງທ່ານ

ແມ່ນຜູ້ໃດທີ່ທ່ານຈະສາມາດເລີ້ມຕົ້ນເປັນຜູ້ສິດສອນແລະສ້າງລາວເປັນສາວົກໃນອາທິດນີ້? ແມ່ນຫຍັງຄືຂັ້ນຕໍ່ໄປທີ່ທ່ານຈະກະທຳໃຫ້ສິ່ງນີ້ເກີດຂຶ້ນ? ໃຊ້ເວລາທີ່ກຳນົດໄວ້, ໃຊ້ງົບປະມານ, ແລະມີຄວາມສັມພັນອັນມີຄຸນນະພາບ ເປັນສິ່ງວັດແທກ, ແມ່ນຫຍັງຄືສິ່ງທີ່ມີຄຸນຄ່າອັນແທ້ຈິງຕໍ່ທ່ານ?

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ແປໂດຍ PA